ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

❊❊❊❊❊❊ ໑ ❀ ໙ ❊❊❊❊❊❊

# ສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ IV ປີ 2015

# ປື້ມຄູ່ມື ນັກເດີນສຳຫຼວດ

ຄະນະຊີ້ນຳການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ລະດັບຊາດ

ຫ້ອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຂັ້ນສູນກາງ (ສູນສະຖິຕິແຫ່ງຊາດ)

ນະຄອນຫຼວງວຽງຈັນ, ທັນວາ 2014

# ໃຫ້ຂໍ້ມູນຖືກຕ້ອງ ຕາມຄວາມເປັນຈິງ
# ຄົບຖ້ວນທຸກຄຳຖາມ
# ຊັດເຈນທຸກຄຳຕອບ
# ຄືພັນທະ ແລະ ໜ້າທີ່ຂອງໝົດທຸກຄົນ


ຄະນະຊີ້ນຳການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ລະດັບຊາດ

ຫ້ອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຂັ້ນສູນກາງ (ສູນສະຖິຕິແຫ່ງຊາດ)

ໂທລະສັບ: 021 - 214740, 242022

# ຄຳນຳ

ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ປີ 2015 ແມ່ນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຄັ້ງທີ IV ຂອງລັດຖະບານແຫ່ງ ສປປ ລາວ ເຊິ່ງຈະຈັດຕັ້ງປະຕິບັດໂດຍສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ໃນເດືອນ ມີນາ ປີ 2015, ໂດຍການສະໜັບສະໜູນຂອງລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ (UNFPA), ອົງການເພື່ອການພັດທະນາ ແລະ ການຮ່ວມມືຂອງປະເທດສະວິດເຊີແລນ (SDC), ສາທາລະນະລັດ ປະຊາທິປະໄຕ ປະຊາຊົນຈີນ, ທະນາຄານໂລກ (WB), ອົງການສະຫະປະຊາຊາດກອງທຶນສຳລັບເດັກ (UNICEF). ການສຳຫຼວດຄັ້ງນີ້ຈະໄດ້ສຳຫຼວດທຸກໆຄົວເຮືອນໃນຂອບເຂດທົ່ວປະເທດ ຊຶ່ງຈະກວມເອົາຫຼາຍບັນຫາທີ່ພົວພັນເຖິງຄຸນລັກສະນະ ແລະ ທີ່ຢູ່ອາໄສຂອງພົນລະເມືອງເປັນຕົ້ນແມ່ນ: ຂໍ້ມູນຕົ້ນຕໍກ່ຽວກັບຄຸນລັກສະນະຂອງສະມາຊິກທຸກຄົນໃນຄົວເຮືອນ, ການພິການຂອງສະມາຊິກໃນຄົວເຮືອນ, ການສຶກສາ, ສະພາບແຮງງານ, ການເກີດ, ການຕາຍ, ການໂຍກຍ້າຍ ແລະ ຄຸນລັກສະນະທີ່ຢູ່ອາໄສຂອງຄົວເຮືອນ, ເພື່ອຈັດຕັ້ງປະຕິບັດການສຳຫຼວດດັ່ງກ່າວໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ສຳເລັດຕາມເວລາທີ່ກຳນົດໄວ້ດ້ວຍຜົນສຳເລັດອັນດີງາມ, ສະນັ້ນ ຈຶ່ງຈຳເປັນຕ້ອງມີນັກເດີນສຳຫຼວດ ແລະ ນັກກວດກາຫຼາຍ ເຊິ່ງຄາດວ່າຈຳນວນທັງໝົດປະມານ 26.000 ຄົນ. ເພື່ອດຳເນີນການສຳຫຼວດໂດຍກົງກັບແຕ່ລະຄົວເຮືອນທີ່ຢູ່ໃນເຂດສຳຫຼວດຂອງຕົນຮັບຜິດຊອບໃຫ້ຄົບຖ້ວນ ເພື່ອສອບຖາມ ແລະ ຈົດກ່າຍບັນດາຄຳຕອບເຂົ້າໃນໃບສອບຖາມ.

ໃນການດຳເນີນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດຄັ້ງນີ້, ນັກເດີນສຳຫຼວດມີບົດບາດສຳຄັນໃນການຕັດສິນຜົນສຳເລັດ ຫຼື ຄວາມຜິດພາດຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ. ເພື່ອເປັນການຊ່ວຍເຫຼືອໃຫ້ນັກເດີນສຳຫຼວດສາມາດກຳແໜ້ນ ແລະ ເປັນເອກະພາບທາງດ້ານວິຊາການ ແລະ ປະຕິບັດໜ້າທີ່ວຽກຂອງຕົນໄດ້ສະດວກ, ທັນເວລາ ແລະ ຈົດກ່າຍໄດ້ຢ່າງຊັດເຈນ, <u>ໂດຍບໍ່ຈົດຊໍ້າ, ບໍ່ຈົດຂາດ,</u> ມີເນື້ອໃນຄົບຖ້ວນ, ຖືກຕ້ອງ ແລະ ຈະແຈ້ງ, ດັ່ງນັ້ນ ຫ້ອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຂັ້ນສູນກາງ ຈຶ່ງໄດ້ຮຽບຮຽງ "ຄູ່ມືນັກເດີນສຳຫຼວດ" ເຊິ່ງມີບັນດາເນື້ອໃນທີ່ສຳຄັນເປັນຕົ້ນແມ່ນນິຍາມຂອງແນວຄວາມຄິດ, ຫຼັກການຕົ້ນຕໍຂອງການສຳຫຼວດ, ຄຳອະທິບາຍກ່ຽວກັບວິທີການສອບຖາມ, ການຈົດກ່າຍຄຳຕອບ ແລະ ຕົວຢ່າງປະກອບ ຊຶ່ງຈະເປັນປະໂຫຍດຫຼາຍ ແລະ ເປັນເຄື່ອງມືເພື່ອຊ່ວຍນັກເດີນສຳຫຼວດໃນເວລາປະຕິບັດໜ້າທີ່ຄົນດຽວ. ດັ່ງນັ້ນ ສິ່ງສຳຄັນທີ່ສຸດແມ່ນນັກເດີນສຳຫຼວດຈະຕ້ອງໄດ້ອ່ານໃຫ້ເຂົ້າໃຈ ເຖິງເນື້ອໃນ, ຈຸດປະສົງ, ລະດັບຄາດໝາຍຂອງການເກັບກຳຂໍ້ມູນ ແລະ ປະຕິບັດຕາມຄຳແນະນຳທຸກປະການຢ່າງເຂັ້ມງວດ ເພື່ອຮັບປະກັນການປະຕິບັດການເດີນສຳຫຼວດໃຫ້ໄດ້ຮັບໝາກຜົນທີ່ມີຄຸນນະພາບດີ ແລະ ບັນລຸຜົນສຳເລັດຢ່າງມີໄຊ.

ຂໍສະແດງຄວາມຂອບໃຈ ແລະ ຄວາມຮູ້ບຸນຄຸນເປັນຢ່າງສູງຕໍ່ການປະກອບສ່ວນຂອງບັນດາທ່ານ ແລະ ທຸກພາກສ່ວນທີ່ໄດ້ໃຫ້ການຊ່ວຍເຫຼືອ ແລະ ມີສ່ວນຮ່ວມເຮັດໃຫ້ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຄັ້ງນີ້ປະສົບຜົນສຳເລັດຕາມແຜນທີ່ວາງໄວ້. ຫວັງຢ່າງຍິ່ງວ່າ ຈະໄດ້ຮັບການຮ່ວມມືຈາກນັກເດີນສຳຫຼວດທຸກໆ ທ່ານໄດ້ເປັນຢ່າງດີ ແລະ ຮັກສາຄວາມລັບຂອງຂໍ້ມູນຢ່າງເຂັ້ມງວດ.

**ຫົວໜ້າຫ້ອງການສຳຫຼວດພົນລະເມືອງ**
**ແລະ ທີ່ຢູ່ອາໄສ ຂັ້ນສູນກາງ**



**ສາລະບານ**

ຄຳນຳ........................................................................................................II

I. ພາກສະເໜີ..........................................................................................................1

II. ຈຸດປະສົງຂອງການສຳຫຼວດ........................................................................................1

III. ຂອບເຂດ ແລະ ເປົ້າໝາຍລວມຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ່ IV ປີ 2015..........................................................................................................1

1. ຂອບເຂດ ແລະ ເປົ້າໝາຍ.........................................................................................1

IV. ຫຼັກການຈົດນັບຂອງການສຳຫຼວດ....................................................................................4

1. ການຈົດນັບຜູ້ຢູ່ເປັນປະຈຳໃນຄົວເຮືອນ............................................................................4

2. ການຈົດນັບຜູ້ທີ່ບໍ່ມີທີ່ຢູ່ໃດໆເປັນປະຈຳ...............................................................................5

3. ການຈົດນັບຜູ້ທີ່ບໍ່ມີເຮືອນຢູ່.............................................................................................5

V. ເວລານັດໝາຍການສຳຫຼວດ...........................................................................................5

VI. ໜ້າທີ່ນັກເດີນສຳຫຼວດ.................................................................................................6

1. ໜ້າທີ່ກ່ອນການເດີນສຳຫຼວດ............................................................................................6

2. ໜ້າທີ່ໄລຍະການເດີນສຳຫຼວດ...........................................................................................7

3. ໜ້າທີ່ຫຼັງການເດີນສຳຫຼວດ..............................................................................................7

VII. ບັນດານິຍາມຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ່ IV ປີ 2015..................8

VIII. ວິທີການຈົດກ່າຍ ແລະ ວິທີດັດແກ້ຄຳຜິດ.............................................................................9

1. ວິທີການຈົດກ່າຍ..........................................................................................................9

2. ການດັດແກ້ຄຳຜິດ......................................................................................................10

IX. ໂຄງປະກອບຂອງແບບສອບຖາມ ແລະ ວິທີການຈົດກ່າຍຂໍ້ມູນເຂົ້າໃນແບບສອບຖາມ........................12

1. ໂຄງປະກອບຂອງແບບສອບຖາມ.....................................................................................12

2. ຂັ້ນຕອນການຈົດກ່າຍ..................................................................................................13

3. ວິທີຈົດກ່າຍຂໍ້ມູນລົງໜ້າປົກປຶ້ມແບບສອບຖາມ.......................................................................14

4. ວິທີຈົດກ່າຍຂໍ້ມູນເຂົ້າໃນໃບແບບສອບຖາມ............................................................................17

X. ການກວດກາແບບສອບຖາມທີ່ສຳພາດສຳເລັດ......................................................................49

1. ການກວດກາວຽກຂອງນັກເດີນສຳຫຼວດ....49
2. ການກວດກາເມື່ອການເດີນສຳຫຼວດສິ້ນສຸດລົງ....49
ເອກະສານຊ້ອນທ້າຍ 1: ລະຫັດແຂວງ ແລະ ລະຫັດເມືອງ....50
ເອກະສານຊ້ອນທ້າຍ 2: ລະຫັດຂອງຊົນເຜົ່າ ໃນ ສປປ ລາວ....53
ເອກະສານຊ້ອນທ້າຍ 3: ລະຫັດວິຊາທີ່ຮຽນຈົບສູງສຸດ....58
ເອກະສານຊ້ອນທ້າຍ 4: ລະຫັດຂະແໜງເສດຖະກິດຕົ້ນຕໍ....63
ເອກະສານຊ້ອນທ້າຍ 5: ຕາຕະລາງສົມທຽບປີລາວ (ປີພຸດທະສັກກະລາດ) ກັບປີສາກົນ (ປີຄຣິດຕະສັກກະລາດ)....74
ແບບສອບຖາມ....75

## I. ພາກສະເໜີ.

ລັດຖະບານແຫ່ງ ສປປ ລາວ ໄດ້ຈັດຕັ້ງປະຕິບັດການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດມາແລ້ວ 3 ຄັ້ງ ຄື: ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງ I ໄດ້ຈັດຂຶ້ນໃນປີ 1985, ຄັ້ງທີ II ປີ 1995, ຄັ້ງທີ III ປີ 2005. ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ່ IV ແມ່ນຈະໄດ້ດຳເນີນໃນ ປີ 2015 ໂດຍອີງຕາມຂໍ້ຕົກລົງຂອງ ນາຍົກລັດຖະມົນຕີແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 89/ນຍ, ລົງວັນທີ 11/09/2013. ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ IV ໃນປີ 2015 ແມ່ນຈະໄດ້ຈັດຕັ້ງປະຕິບັດໃນເວລາ 0:00 ໂມງຂອງວັນທີ 01 ມີນາ 2015, ຜົນຂອງການສຳຫຼວດດັ່ງກ່າວແມ່ນໄດ້ສະໜອງຂໍ້ມູນອັນຈຳເປັນທາງດ້ານປະຊາກອນສາດ ຊຶ່ງໄດ້ສ່ອງແສງໃຫ້ເຫັນຈຳນວນພົນລະເມືອງ, ການຍົກຍ້າຍຂອງພົນລະເມືອງ, ສະພາບການດຳລົງຊີວິດ ແລະ ຄຸນລັກສະນະຂອງພົນລະເມືອງໃນລະດັບແຂວງ, ເມືອງ ແລະ ບ້ານຂອງ ສປປ ລາວ ໃນຂອບເຂດທົ່ວປະເທດ.

## II. ຈຸດປະສົງຂອງການສຳຫຼວດ

ຈຸດປະສົງຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ່ IV ປີ 2015 ນີ້ແມ່ນເພື່ອເກັບກຳຂໍ້ມູນກ່ຽວກັບພົນລະເມືອງ ແລະ ທີ່ຢູ່ອາໄສຂອງ ສປປ ລາວ ເພື່ອສ້າງເປັນຖານຂໍ້ມູນພື້ນຖານໃຫ້ແກ່ການວາງເສດຖະກິດ-ສັງຄົມ ຂອງ ສ ປປ ລາວ. ລະດັບຄາດໝາຍຕົ້ນຕໍຂອງການສຳຫຼວດມີດັ່ງນີ້:

1) ເພື່ອເກັບກຳຈຳນວນປະຊາກອນທີ່ເປັນພົນລະເມືອງລາວ, ຄົນຕ່າງດ້າວ ແລະ ຄົນຕ່າງປະເທດທີ່ມາດຳລົງຊີວິດຢູ່ ສປປ ລາວ ເກີນ 6 ເດືອນຂຶ້ນໄປ, ພ້ອມທັງກຳໄດ້ສະພາບການຂະຫຍາຍຕົວຂອງພົນລະເມືອງ ລວມທັງເກັບກຳສະພາບການເຄື່ອນໄຫວ ແລະ ສະພາບການຂອງທີ່ຢູ່ອາໄສຂອງພົນລະເມືອງໃນທຸກໆ 10 ປີ;
2) ເພື່ອສະໜອງຂໍ້ມູນພື້ນຖານຂອງພົນລະເມືອງລາວກ່ຽວກັບລະດັບການສຶກສາ, ການບໍລິການດ້ານສຸຂະພາບ, ຄຸນລັກສະນະຂອງທີ່ຢູ່ອາໄສອັນເປັນພື້ນຖານການດຳລົງຊີວິດຂອງຄົວເຮືອນ, ສະພາບການຍົກຍ້າຍພາຍໃນ ແລະ ຕ່າງປະເທດຂອງພົນລະເມືອງ;
3) ສະໜອງສະພາບກຳລັງແຮງງານ ແລະ ສະພາບການມີວຽກເຮັດງານທຳຂອງພົນລະເມືອງລາວ;
4) ສ້າງຖານຂໍ້ມູນອັນສຳຄັນໃຫ້ແກ່ການຄາດຄະເນຕົວເລກພົນລະເມືອງໃນຕໍ່ໜ້າ ແລະ ເປັນຖານຂໍ້ມູນໃຫ້ແກ່ການຂຶ້ນສຳມະໂນຄົວ ແລະ ຂຶ້ນທະບຽນພົນລະເມືອງ;
5) ເພື່ອເປັນການສ້າງ ແລະ ປັບປຸງລະບົບຂໍ້ມູນຂ່າວສານຂອງ ສປປ ລາວ ໃຫ້ເຂັ້ມແຂງມີຂໍ້ມູນຄົບຖ້ວນ ແລະທັນກັບສະພາບຄວາມຕ້ອງການຂອງສັງຄົມໃນຍຸກໃໝ່ໃຫ້ທຽບທັນກັບສາກົນ ແລະ ພາກພື້ນ;
6) ເພື່ອເປັນກອບຂອງການຄັດເລືອກຕົວແທນໃນການສຳຫຼວດອື່ນໆ.

## III. ຂອບເຂດ ແລະ ເປົ້າໝາຍລວມຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ່ IV ປີ 2015

### 1. ຂອບເຂດ ແລະ ເປົ້າໝາຍ

ການສຳຫຼວດຄັ້ງນີ້ ແມ່ນຈະຈົດນັບພົນລະເມືອງລາວ (ລວມທັງຄົນລາວທີ່ໄປເຄື່ອນໄຫວວຽກງານຢູ່ຕ່າງປະເທດ), ຊາວຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຊາວຕ່າງປະເທດທີ່ດຳລົງຊີວິດໃນ ສປປ ລາວ 6 ເດືອນຂຶ້ນໄປ ຫຼື ມີຈຸດປະສົງຈະມາຢູ່ລາວ ຫຼາຍກວ່າ 6 ເດືອນຂຶ້ນໄປ (ໃນໄລຍະການເດີນສຳຫຼວດຄືວັນທີ 1-7 ມີນາ 2015) ເຖິງແມ່ນວ່າບຸກຄົນດັ່ງກ່າວຈະໄດ້ຮັບອະນຸຍາດ ຫຼື ບໍ່ໄດ້ຮັບອະນຸຍາດກໍ່ຕາມ.

## ບຸກຄົນທີ່ຖືກຈົດນັບ ແລະ ບໍ່ຖືກຈົດນັບເຂົ້າໃນການສຳຫຼວດມີດັ່ງນີ້:

### ບຸກຄົນທີ່ຈະຕ້ອງຈົດນັບເຂົ້າໃນການສຳຫຼວດ

1) ພົນລະເມືອງລາວທັງໝົດທີ່ດຳລົງຊີວິດຢູ່ໃນເຂດນ້ຳແດນດິນຂອງ ສປປ ລາວ;
2) ຊາວຕ່າງດ້າວທີ່ໄດ້ຮັບ ຫຼື ບໍ່ໄດ້ຮັບອະນຸຍາດໃຫ້ອາໄສຢູ່ຢ່າງຖາວອນໃນສປປ ລາວ;
3) ຊາວຕ່າງປະເທດ ແລະ ຄົນບໍ່ມີສັນຊາດທີ່ມາດຳລົງຊີວິດຢູ່ ສປປ ລາວ ເປັນປະຈຳກາຍ 6 ເດືອນຂຶ້ນໄປ;
4) ພົນລະເມືອງລາວທີ່ໄດ້ຮັບອະນຸຍາດຢ່າງເປັນທາງການໄປປະຕິບັດວຽກ ງານ, ປະກອບທຸລະກິດ, ຮ່ຳຮຽນ, ທ່ອງທ່ຽວ, ປິ່ນປົວ, ໄປອອກແຮງງານຢູ່ຕ່າງປະເທດກາຍ 6 ເດືອນຂຶ້ນໄປ;
5) ບັນດາເອກອັກຄະລະສະທູດ, ພະນັກງານນັກການທູດ ແລະ ຄອບຄົວນັກການທູດຂອງຕ່າງປະເທດ, ອົງການຈັດຕັ້ງສາກົນ, ອົງການທີ່ບໍ່ສັງກັດລັດ ຖະບານ (NGO), ຊ່ຽວຊານຕ່າງປະເທດປະຈຳອົງການຈັດຕັ້ງຂອງລັດ ແລະ ບັນດາໂຄງການຕ່າງໆທີ່ມາປະຈຳຢູ່ ສປປ ລາວ ກາຍ 6 ເດືອນ;
6) ບັນດາຄົນລາວທີ່ຢູ່ຕ່າງປະເທດ ທີ່ຍັງຂຶ້ນບັນຊີຢູ່ສະຖານກົງສູນລາວທີ່ຖືກກົດໝາຍ;
7) ສະເພາະບັນດາບຸກຄົນທີ່ໄປອອກແຮງງານ ແລະ ໄປສຶກສາຮ່ຳຮຽນຢູ່ຕ່າງປະເທດດ້ວຍທຶນຕົນເອງ 10 ປີ ລົງມາ ແລະ ຍັງຕິດຕໍ່ພົວພັນກັບພີ່ນ້ອງທີ່ອາໄສຢູ່ໃນ ສປປ ລາວ.

### ບຸກຄົນທີ່ບໍ່ຈົດນັບເຂົ້າໃນການສຳຫຼວດ

1) ຊາວຕ່າງປະເທດ ທີ່ພັກເຊົາຢູ່ໃນ ສປປ ລາວ ບໍ່ກາຍ 6 ເດືອນ;
2) ບັນດາຄົນລາວທີ່ຍົກຍ້າຍອອກຈາກ ສປປ ລາວ ແບບຖາວອນນັບທັງໄດ້ຮັບອະນຸຍາດໃຫ້ຍົກຍ້າຍອອກ ແລະ ບໍ່ໄດ້ຮັບອະນຸຍາດຍົກຍ້າຍອອກຢ່າງເປັນທາງການ ແລະ ໄດ້ຕັດສັນຊາດລາວໄປເປັນສັນຊາດອື່ນ.

### ບຸກຄົນທີ່ນັກເດີນສຳຫຼວດຈະຕ້ອງຈົດນັບເຂົ້າໃນເຂດເດີນສຳຫຼວດທີ່ຕົນຮັບຜິດຊອບ

1) ບຸກຄົນທີ່ມີຊື່ ຫຼື ມີໜ້າຢູ່ເປັນປະຈຳໃນຄົວເຮືອນທີ່ຂຶ້ນກັບເຂດສຳຫຼວດຂອງນັກເດີນສຳຫຼວດ, ເຖິງວ່າເຂົາເຈົ້າຈະມີໜ້າ ຫຼື ບໍ່ມີໜ້າຊົ່ວຄາວກໍ່ຕາມ (ບໍ່ກາຍ 6 ເດືອນ);
2) ບຸກຄົນທີ່ມີຊື່ ຫຼື ມີໜ້າຢູ່ເປັນປະຈຳໃນຄົວເຮືອນທີ່ຂຶ້ນກັບເຂດສຳຫຼວດຂອງນັກເດີນສຳຫຼວດທີ່ໄປສຶກສາຢູ່ຕ່າງປະເທດໂດຍທຶນສ່ວນຕົວ, ໄປອອກ ແຮງງານ ຫຼື ໄປຢາມພີ່ນ້ອງຢູ່ຕ່າງປະ ເທດຕ່ຳກວ່າ 10 ປີ ແລະ ຍັງຕິດຕໍ່ກັບຄອບຄົວຢູ່ ສປປ ລາວ ເປັນປົກກະຕິ (ກົດໝາຍວ່າດ້ວຍສັນຊາດລາວ, ສະບັບເລກທີ່05/ສພຊ, ລົງວັນທີ 17 ພຶດສະພາ 2004, ມາດຕາ 20 ການໄປຢູ່ຕ່າງປະເທດ);
3) ບຸກຄົນທີ່ບໍ່ມີຊື່ ຫຼື ມີໜ້າຢູ່ເປັນປະຈຳໃນຄົວເຮືອນທີ່ຂຶ້ນກັບເຂດສຳຫຼວດຂອງນັກເດີນສຳຫຼວດ ແຕ່ໄດ້ອາໄສຢູ່ໃນຄົວເຮືອນກາຍ 6 ເດືອນ ຂຶ້ນໄປ;
4) ບຸກຄົນທີ່ຫາກໍ່ຍົກຍ້າຍເຂົ້າມາຢູ່ໃນຄົວເຮືອນທີ່ຂຶ້ນກັບເຂດສຳຫຼວດຂອງນັກເດີນສຳຫຼວດບໍ່ຮອດ 6 ເດືອນ ແຕ່ມີຈຸດປະສົງທີ່ຈະອາໄສຢູ່ 6 ເດືອນຂຶ້ນໄປ.
5) ບຸກຄົນທີ່ບໍ່ມີທີ່ຢູ່ໃດໆເປັນປະຈຳ (ບຸກຄົນທີ່ຍົກຍ້າຍທີ່ຢູ່ໄປເລື້ອຍໆ) ທີ່ພົບເຫັນໃນເຂດສຳຫຼວດຂອງນັກເດີນສຳຫຼວດ ແຕ່ບໍ່ມີບັນຊີລາຍຊື່ໃນບັນຊີຄົວເຮືອນໃນເຂດສຳຫຼວດຂອງນັກເດີນສຳຫຼວດ ແມ່ນພົບຢູ່ເຂດສຳຫຼວດໃດຕ້ອງຈົດນັບຢູ່ເຂດສຳຫຼວດນັ້ນເລີຍ.

### ບຸກຄົນທີ່ຈະຕ້ອງຖືກສຳຫຼວດໃນເຂດສຳຫຼວດອື່ນ

1) ບຸກຄົນທີ່ມີໜ້າຊົ່ວຄາວໃນຄົວເຮືອນທີ່ຂຶ້ນກັບເຂດສຳຫຼວດຂອງນັກເດີນສຳຫຼວດ, ແຕ່ຂຶ້ນທະບຽນຢູ່ເຂດສຳຫຼວດ ຫຼື ບ້ານອື່ນ;
2) ບຸກຄົນທີ່ມີຊື່ ຫຼື ມີໜ້າເປັນປະຈຳໃນຄົວເຮືອນທີ່ຂຶ້ນກັບເຂດສຳຫຼວດຂອງນັກເດີນສຳຫຼວດ ແຕ່ບຸກຄົນດັ່ງກ່າວໄດ້ໄປຢູ່ບ່ອນອື່ນພາຍໃນ ສປປ ລາວ ກາຍ 6 ເດືອນ.

## 2. ການແບ່ງຄວາມຮັບຜິດຊອບ

ການສໍາຫຼວດໃນຄັ້ງນີ້ປະກອບມີ 4 ພາກສ່ວນຕົ້ນຕໍເປັນຜູ້ຮັບຜິດຊອບໃນການຈົດນັບ ທີ່ໄດ້ຈັດແບ່ງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດການສໍາຫຼວດຢ່າງຈະແຈ້ງ ໂດຍສະເພາະແມ່ນຄົວເຮືອນການນໍາ ແລະ ຄົວເຮືອນພິເສດ ເຊິ່ງມີລາຍລະອຽດຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ ດັ່ງນີ້:

### 1) ກະຊວງປ້ອງກັນປະເທດ ຮັບຜິດຊອບຈົດນັບ ດັ່ງນີ້:

- ຈໍານວນນາຍ ແລະ ພົນທະຫານທີ່ສັງກັດຢູ່ໃນຖັນແຖວປ້ອງກັນຊາດ ສະເພາະທີ່ຢູ່ໃນຄ້າຍ ຫຼື ລວມທັງຄອບຄົວຂອງເຂົາເຈົ້າ ທີ່ບໍ່ໄດ້ຂຶ້ນສໍາມະໂນຄົວຢູ່ນໍາບ້ານ ແລະນອນປະຈໍາຄ້າຍເປັນປະຈໍາ;
- ຜູ້ເສຍອົງຄະ ແລະ ເຈັບປ່ວຍເຊິ່ງບໍ່ທັນໄດ້ຮັບການປົດປ່ອຍອອກຈາກຖັນແຖວປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ໂດຍບໍ່ຈໍາແນກວ່າກໍາລັງປິ່ນປົວຢູ່ບັນດາໂຮງໝໍ ຫຼື ຢູ່ຄ້າຍ ພັກຜ່ອນ;
- ຈໍານວນພົນຜູ້ຕ້ອງຫາ ແລະ ນັກໂທດທີ່ກໍາລັງຖືກຄຸມຂັງ;
- ຄອບຄົວການນໍາ ທີ່ອາໄສຢູ່ຕາມບ້ານຕ່າງໆ.

***ຄົວເຮືອນການນໍາ:*** *ແມ່ນນັບແຕ່ຊັ້ນນາຍພົນ ແລະ ກໍາມະການສູນກາງພັກຂຶ້ນໄປ ໂດຍມີກາລັງປ້ອງກັນຂອງກອງທັບໄປປະຈໍາຢູ່ (ຕາມບັນຊີຄົວເຮືອນການນໍາທີ່ກະຊວງປ້ອງກັນປະເທດຮັບຜິດຊອບ).*

### 2) ກະຊວງປ້ອງກັນຄວາມສະຫງົບ ຮັບຜິດຊອບຈົດນັບ ດັ່ງນີ້:

- ຈໍານວນນາຍ ແລະ ພົນຕໍາຫລວດທີ່ສັງກັດຢູ່ໃນຖັນແຖວປ້ອງກັນຄວາມສະຫງົບ ສະເພາະທີ່ຢູ່ໃນຄ້າຍ ຫຼື ລວມທັງຄອບຄົວຂອງເຂົາເຈົ້າທີ່ບໍ່ໄດ້ຂຶ້ນສໍາມະໂນຄົວຢູ່ນໍາບ້ານ ແລະ ນອນຢູ່ໃນຄ້າຍເປັນປະຈໍາ;
- ບັນດາຄອບຄົວການນໍາຂັ້ນສູນກາງ ແລະ ຂັ້ນແຂວງ;
- ຜູ້ເສຍອົງຄະ ແລະ ເຈັບປ່ວຍເຊິ່ງ ບໍ່ທັນໄດ້ຮັບການປົດປ່ອຍອອກຈາກຖັນແຖວປ້ອງກັນຄວາມສະຫງົບ ໂດຍບໍ່ຈໍາແນກວ່າກໍາລັງປິ່ນປົວຢູ່ບັນດາໂຮງໝໍ ຫຼື ຢູ່ຄ້າຍພັກຜ່ອນ;
- ຜູ້ຖືກຕ້ອງຫາ ແລະ ນັກໂທດທີ່ກໍາລັງຖືກຄຸມຂັງ, ດັດສ້າງ ແລະ ບໍາບັດ.

***ຄົວເຮືອນການນໍາ:*** *ແມ່ນນັບແຕ່ຊັ້ນນາຍພົນ, ລັດຖະມົນຕີ, ລັດຖະມົນຕີຊ່ວຍ, ເຈົ້າແຂວງ, ຮອງເຈົ້າແຂວງ ແລະ ກໍາມະການສູນກາງພັກຂຶ້ນໄປທີ່ມີກໍາລັງປ້ອງກັນຄວາມສະຫງົບຮັບຜິດຊອບ (ຕາມບັນຊີຄົວເຮືອນການນໍາທີ່ກະຊວງປ້ອງກັນຄວາມສະຫງົບຮັບຜິດຊອບ).*

### 3) ກະຊວງການຕ່າງປະເທດ ຮັບຜິດຊອບຈົດນັບ ດັ່ງນີ້:

- ສະຖານທູດ, ສະຖານກົງສູນຂອງ ສ ປປລາວ ທີ່ປະຈໍາຢູ່ຕ່າງປະເທດ, ນັບທັງກໍາລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບທີ່ເຄື່ອນໄຫວຢູ່ຕ່າງປະເທດ;
- ບັນດາຫົວໜ່ວຍຕ່າງໆ ທີ່ຂຶ້ນກັບສະຖານທູດລາວປະຈໍາຢູ່ຕ່າງເທດ;
- ບັນດານັກຮຽນ, ນັກສຶກສາ ແລະ ນັກຄົ້ນຄວ້າ ທີ່ກໍາລັງສຶກສາຢູ່ຕ່າງປະເທດດ້ວຍທຶນລະຖະບານ, ຄົນລາວທີ່ກໍາລັງເຮັດທຸລະກິດ, ໄປອອກແຮງງານທີ່ເປັນທາງການ 6 ເດືອນ ຂຶ້ນໄປ.

***ໝາຍເຫດ:*** *ບັນດານັກຮຽນ, ນັກສຶກສາ ແລະ ນັກຄົ້ນຄວ້າ ທີ່ກຳລັງສຶກສາຢູ່ຕ່າງປະເທດດ້ວຍທຶນຕົນເອງລວມທັງຜູ້ຕ້ອງຫາ ແລະ ຖືກຄະດີທີ່ໄດ້ໄປແຈ້ງ ແລະ ຂຶ້ນບັນຊີຢູ່ສະຖານທູດ ແມ່ນໃຫ້ຈົດ ນັບເຂົ້າເຈົ້າ ຢູ່ໃນຄົວເຮືອນ ຢູ່ ສ ປປ ລາວ (ບໍ່ໃຫ້ຈົດນັບຢູ່ສະຖານທູດ).*

4) **ສູນສະຖິຕິແຫ່ງຊາດ ຮັບຜິດຊອບຈົດນັບ ດັ່ງນີ້:**

ຄົວເຮືອນທົ່ວໄປ, ອົງການຈັດຕັ້ງສາກົນ, ອົງການທີ່ບໍ່ສັງກັດລັດຖະບານ (NGO), ຊ່ຽວຊານປະຈຳອົງການຈັດຕັ້ງຂອງລັດ ແລະ ບັນດາໂຄງການຕ່າງໆທີ່ມາປະຈຳຢູ່ ສປປ ລາວ ກາຍ 6 ເດືອນ.

***ໝາຍເຫດ:*** *ບັນຊີ ແລະ ທີ່ຕັ້ງຂອງຄົວເຮືອນພິເສດທີ່ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງການຕ່າງປະເທດ ຮັບຜິດຊອບຈົດນັບ ແມ່ນຫ້ອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຂັ້ນສູນກາງ ຈະແຈ້ງໃຫ້ນັກເດີນສຳຫຼວດຊາບກ່ອນການສຳຫຼວດ ເພື່ອຮັບປະກັນບໍ່ໃຫ້ມີການຈົດຊ້ຳ ຫຼື ບໍ່ຈົດນັບຄົວເຮືອນການນຳ ແລະ ຄົວເຮືອນພິເສດ.*

## IV. ຫຼັກການຈົດນັບຂອງການສຳຫຼວດ

ຫຼັກການຈົດນັບໃນການສຳຫຼວດຄັ້ງນີ້ ແມ່ນນຳໃຊ້ຫຼັກການຢູ່ເປັນປະຈຳ (DEJURE). ການຈົດນັບຂອງການສຳຫຼວດໃນຄັ້ງນີ້ ແມ່ນກຳນົດເອົາ **ຄົວເຮືອນ** ເປັນຫົວໜ່ວຍພື້ນຖານໃນການຈົດນັບ ແລະ ນຳໃຊ້ວິທີການສຳພາດໜ້າຕໍ່ໜ້າ, ດ້ວຍການສຳພາດຕົວຈິງກັບຫົວໜ້າຄົວເຮືອນ ຫຼື ສະມາຊິກຄົວເຮືອນຜູ້ທີ່ສາມາດສະໜອງຂໍ້ມູນຂ່າວສານກ່ຽວກັບສະມາຊິກ ແລະ ສະພາບຂອງຄົວເຮືອນ. ການຈົດນັບປະກອບມີ 3 ປະເພດດັ່ງລຸ່ມນີ້:

### 1. ການຈົດນັບຜູ້ຢູ່ເປັນປະຈຳໃນຄົວເຮືອນ

**ຄົນຢູ່ເປັນປະຈຳ** ແມ່ນໝາຍເຖິງບັນດາບຸກຄົນທີ່ອາໄສຢູ່ໃນຄົວເຮືອນຢ່າງເປັນປະຈຳ ໂດຍກຳນົດ 6 ເດືອນຂຶ້ນໄປນັບແຕ່ເວລານັດໝາຍການສຳຫຼວດ ວັນທີ 1 ມີນາ 2015 ຄືນຫຼັງ. ບຸກຄົນທີ່ຖືວ່າຢູ່ເປັນປະຈຳໃນຄົວເຮືອນແມ່ນສະມາຊິກຄົວເຮືອນທີ່ກິນຢູ່ຮ່ວມກັນໃນຄົວເຮືອນໃດໜຶ່ງຕາມນິຍາມຄົວເຮືອນໂດຍບໍ່ຈຳແນກສາຍພົວພັນທາງສາຍເລືອດ. ການກຳນົດບຸກຄົນທີຖືວ່າຢູ່ເປັນປະຈຳໃນຄົວເຮືອນແມ່ນປະຕິບັດຕາມຫຼັກການດັ່ງລຸ່ມນີ້:

**1.1. ບັນດາບຸກຄົນທີ່ອາໄສຢູ່ເປັນປະຈຳໃນຄົວເຮືອນຈົນຮອດເວລານັດໝາຍການສຳຫຼວດລວມມີ:**

- ບັນດາຄົນທີ່ອາໄສຢູ່ໃນຄົວເຮືອນນັບແຕ່ຜ່ານມາຈົນຮອດເວລານັດໝາຍການສຳຫຼວດ 6 ເດືອນຂຶ້ນໄປໂດຍບໍ່ຈຳແນກວ່າຈະຂຶ້ນ ຫຼື ບໍ່ຂຶ້ນສຳມະໂນຄົວກໍ່ຕາມ;
- ບັນດາບຸກຄົນທີ່ມີຈຸດປະສົງຈະຍ້າຍໄປຢູ່ຄົວເຮືອນອື່ນຢ່າງຖາວອນແຕ່ຮອດເວລານັດໝາຍການສຳຫຼວດເຂົາເຈົ້າຍັງບໍ່ທັນໄດ້ຍ້າຍອອກໄປເທື່ອ ເຖິງວ່າຈະມີໃບຍົກຍ້າຍ ຫຼື ບໍ່ມີໃບຍົກຍ້າຍກໍ່ຕາມແມ່ນໃຫ້ຖືວ່າບຸກຄົນດັ່ງກ່າວຍັງເປັນສະມາຊິກຢູ່ໃນຄົວເຮືອນນີ້.

**1.2. ບັນດາຄົນທີ່ໄດ້ຍົກຍ້າຍມາຢູ່ໃນຄົວເຮືອນແລ້ວ ເຖິງວ່າມາຢູ່ບໍ່ຮອດ 6 ເດືອນກໍ່ຕາມແຕ່ມີຈຸດປະສົງມາຢູ່ຢ່າງຖາວອນກໍ່ໃຫ້ຖືວ່າແມ່ນຜູ້ຢູ່ເປັນປະຈຳໃນຄົວເຮືອນ ເຊິ່ງລວມມີບຸກຄົນເຫຼົ່ານີ້:**

- ບັນດາຄົນຍົກຍ້າຍເຂົ້າມາຢູ່ໃນຄົວເຮືອນທີ່ມີໃບຍົກຍ້າຍມາຢ່າງເປັນທາງການ;
- ບັນດາຄົນຍົກຍ້າຍເຂົ້າມາຢູ່ໃນຄົວເຮືອນທີ່ບໍ່ມີໃບຍົກຍ້າຍ, ແຕ່ພວກກ່ຽວໄດ້ຢັ້ງຢືນຢ່າງຈະແຈ້ງວ່າຈະຍ້າຍມາຢູ່ຄົວເຮືອນນີ້ຢ່າງຖາວອນບໍ່ວ່າດ້ວຍເຫດຜົນໃດ, ລວມທັງນັກຮຽນ, ນັກສຶກສາ, ໝູ່ເພື່ອນ, ພີ່

ນ້ອງ, ກຳມະກອນທີ່ມີຈຸດປະສົງມາອາໄສຢູ່ໃນຄົວເຮືອນເປັນປະຈຳເຖິງແມ່ນວ່າຜູ້ກ່ຽວຈະກັບເຮືອນໃນທ້າຍອາທິດກໍ່ຕາມ.

**1.3. ບັນດາບຸກຄົນທີ່ອາໄສຢູ່ເປັນປະຈຳໃນຄົວເຮືອນ ແຕ່ບໍ່ມີໜ້າຊື່ຄາວລວມມີບຸກຄົນເຫຼົ່ານີ້:**

- ບັນດາບຸກຄົນທີ່ອາໄສຢູ່ເປັນປະຈຳໃນຄົວເຮືອນ ແຕ່ໃນເວລານັດໝາຍການສຳຫຼວດຜູ້ກ່ຽວບໍ່ມີໜ້າຢູ່ຄົວເຮືອນດັ່ງກ່າວ ເນື່ອງຈາກວ່າຜູ້ກ່ຽວໄດ້ໄປເຄື່ອນໄຫວວຽກງານຢູ່ບ່ອນອື່ນຊົ່ວຄາວທັງພາຍໃນ ແລະ ຕ່າງປະເທດບໍ່ວ່າຈະເປັນວຽກສ່ວນຕົວ ຫຼື ວຽກສ່ວນລວມກໍ່ຕາມແຕ່ບໍ່ກາຍ 6 ເດືອນໂດຍບໍ່ຈຳແນກຈຸດປະສົງ ແລະ ເພດພັນ, ບຸກຄົນເຫຼົ່ານີ້ແມ່ນໃຫ້ຖືວ່າເປັນສະມາຊິກໃນຄົວເຮືອນນີ້;
- ບັນດາບຸກຄົນທີ່ອອກຈາກຄົວເຮືອນໄປບໍ່ເກີນ 6 ເດືອນ ໂດຍບໍ່ຄອບລາ ແລະ ບໍ່ຮູ້ວ່າຜູ້ກ່ຽວໄປຢູ່ໃສໃນເວລານັດໝາຍການສຳຫຼວດ ແມ່ນໃຫ້ຈົດນັບຢູ່ຄົວເຮືອນຂອງລາວ;
- **ກໍລະນີພິເສດ:** ສະເພາະບັນດາບຸກຄົນທີ່ໄປອອກແຮງງານ ແລະ ໄປສຶກສາຮ່ຳຮຽນຢູ່ຕ່າງປະເທດດ້ວຍທຶນຕົນເອງ 10 ປີ ລົງມາ ແລະ ຍັງຕິດຕໍ່ພົວພັນກັບພີ່ນ້ອງທີ່ອາໄສຢູ່ໃນ ສປປ ລາວ (ຕາມການກຳນົດຂອງກົດໝາຍວ່າດ້ວຍສັນຊາດລາວ ມາດຕາ 20[1]: ການໄປຢູ່ຕ່າງປະເທດ) ແມ່ນຖືກຈົດນັບເຂົ້າເປັນສະມາຊິກໃນຄົວເຮືອນ.

**2. ການຈົດນັບຜູ້ທີ່ບໍ່ມີທີ່ຢູ່ໃດໆເປັນປະຈຳ**

**ຜູ້ທີ່ບໍ່ມີທີ່ຢູ່ໃດໆເປັນປະຈຳ** ໝາຍເຖິງບຸກຄົນທີ່ມີການຍົກຍ້າຍທີ່ຢູ່ອາໄສເປັນປະຈຳ ແມ່ນໃຫ້ຈົດນັບເອົາບັນດາບຸກຄົນ ຫຼື ກຸ່ມຄົນນັ້ນ ເປັນຄົວເຮືອນໜຶ່ງຢູ່ເຂດການສຳຫຼວດບ່ອນທີ່ເຂົາເຈົ້າພັກເຊົາຢູ່ໃນໄລຍະເວລານັດໝາຍການສຳຫຼວດຂອງບ້ານນັ້ນ.

**ຕົວຢ່າງ**: ກຳມະກອນກໍ່ສ້າງ ຫຼື ຂົວທາງ ຫຼື ໄຟຟ້າ ແລະ ອື່ນໆ ທີ່ອອກຈາກຄົວເຮືອນຫຼາຍກວ່າ 6 ເດືອນ ເຊິ່ງບໍ່ມີທີ່ຢູ່ໃດໆເປັນປະຈຳ ແລະ ເຄື່ອນຍ້າຍທີ່ຢູ່ໄປເລື້ອຍໆຕາມສະຖານທີ່ເຮັດວຽກ.

**3. ການຈົດນັບຜູ້ທີ່ບໍ່ມີເຮືອນຢູ່**

**ຜູ້ບໍ່ມີເຮືອນຢູ່** ໝາຍເຖິງການຈົດນັບບຸກຄົນທີ່ບໍ່ມີບ່ອນອາໄສຢູ່, ເຄື່ອນຍ້າຍແບບບໍ່ມີຈຸດໝາຍ ແລະ ອາໄສນອນຢູ່ຕາມສະຖານທີ່ສາທາລະນະຕ່າງໆ. ບັນດາບຸກຄົນເຫຼົ່ານີ້ແມ່ນໃຫ້ຈົດນັບຢູ່ສະຖານທີ່ທີ່ພົບເຫັນເຂົາເຈົ້າ.

## V. <u>ເວລານັດໝາຍການສຳຫຼວດ</u>

ເວລານັດໝາຍການສຳຫຼວດ ແມ່ນກຳນົດເອົາ 00:00 ໂມງ ຂອງວັນທີ 01/03/2015 ເປັນເວລານັດໝາຍການສຳຫຼວດທີ່ເປັນເອກະພາບໃນຂອບເຂດທົ່ວປະເທດ. ການເດີນສຳຫຼວດຈະດຳເນີນໄປເປັນເວລາ 7 ວັນ ເລີ່ມແຕ່ວັນທີ 1 ຫາ 7 ເດືອນ ມີນາ ປີ 2015. ເວລານັດໝາຍດັ່ງກ່າວນີ້ ແມ່ນຈະໃຊ້ເພື່ອເປັນບ່ອນອີງໃນການກຳນົດບຸກຄົນທີ່ຈະຖືກຈົດນັບເຂົ້າໃນການສຳຫຼວດຄັ້ງນີ້.

---

[1] ກົດໝາຍວ່າດ້ວຍສັນຊາດລາວ, ສະບັບເລກທີ 05/ສພຊ, ລົງວັນທີ 17 ພຶດສະພາ 2004, ມາດຕາ 20 ການໄປຢູ່ຕ່າງປະເທດ:

ບຸກຄົນໃດ ທີ່ໄປຢູ່ຕ່າງປະເທດເກີນເຈັດປີ ໂດຍບໍ່ໄດ້ຮັບອານຸຍາດ ຫຼື ໄປຢູ່ຕ່າງປະເທດ ໂດຍໄດ້ຮັບອານຸຍາດ ແຕ່ຫາກເກີນກຳນົດ ແລະ ບໍ່ໄດ້ຢູ່ໃນການຄຸ້ມຄອງ ຂອງສະຖານທູດ ຫຼື ກົງສູນລາວປະຈຳປະເທດນັ້ນ ແລະ ຂາດສາຍພົວພັນທາງດ້ານກົດໝາຍກັບລັດ ສປປ ລາວ ເກີນສິບປີ ກໍຈະເສຍສັນຊາດລາວ.

**ການກຳນົດບຸກຄົນທີ່ຈະຖືກຈົດນັບ ແລະ ບໍ່ຖືກຈົດນັບ ເຂົ້າໃນການສຳຫຼວດຄັ້ງນີ້ ໃຫ້ປະຕິບັດດັ່ງນີ້:**

1) ບັນດາເດັກນ້ອຍທີ່ເກີດກ່ອນ 00:00 ໂມງ ຂອງວັນທີ 01/03/2015 ແລະ ຍັງມີຊີວິດຢູ່ໃນເວລານັດໝາຍການສຳຫຼວດ ແມ່ນຈະຖືກຈົດນັບເຂົ້າໃນການສຳຫຼວດຄັ້ງນີ້. ໃນກໍລະນີມີເດັກນ້ອຍທີ່ເກີດຫຼັງ 00:00 ໂມງ ຂອງວັນທີ 01/03/2015 ແມ່ນຈະບໍ່ຖືກຈົດນັບເຂົ້າເປັນສະມາຊິກໃນຄົວເຮືອນ ແລະ ຈະບໍ່ນອນໃນເປົ້າໝາຍຂອງການຈົດນັບເຂົ້າໃນການສຳຫຼວດຄັ້ງນີ້;
2) ບັນດາຄົນທີ່ເສຍຊີວິດຫຼັງ 00:00 ໂມງ ຂອງວັນທີ 01/03/2015 ແມ່ນຈະຖືກຈົດນັບໃນເຂົ້າເປັນສະມາຊິກໃນຄົວເຮືອນ ແລະ ຈະນອນໃນເປົ້າໝາຍການຈົດນັບເຂົ້າໃນການສຳຫຼວດຄັ້ງນີ້. ສຳລັບຄົນຕາຍກ່ອນເວລາ 00:00 ໂມງຂອງວັນທີ 01/03/2015 ແມ່ນບໍ່ຖືກຈົດນັບເຂົ້າໃນບັນຊີສະມາຊິກໃນຄົວເຮືອນ ແລະ ຈະບໍ່ນອນໃນເປົ້າໝາຍການສຳຫຼວດຄັ້ງນີ້.

## VI. ໜ້າທີ່ນັກເດີນສຳຫຼວດ

ຜົນສຳເລັດຂອງການສຳຫຼວດ ແລະ ຄຸນນະພາບຂອງຂໍ້ມູນ ແມ່ນຂຶ້ນກັບນັກເດີນສຳຫຼວດ. ສະນັ້ນ, ນັກເດີນສຳຫຼວດຕ້ອງມີຄວາມເຂົ້າໃຈແຈ້ງກ່ຽວກັບບັນດານິຍາມ, ວິທີການຈົດກ່າຍ ແລະ ໜ້າທີ່ຂອງຕົນເອງໃນແຕ່ລະໄລຍະ. ເພື່ອໃຫ້ໄດ້ການຮ່ວມມືທີ່ດີຈາກຜູ້ຖືກສຳພາດນັກເດີນສຳຫຼວດຄວນສ້າງສາຍພົວພັນທີ່ດີກັບຄົວເຮືອນ ໂດຍເລີ່ມຈາກວິທີການຕ່າງໆ ດັ່ງນີ້:

- ສະເໜີຈຸດປະສົງ ແລະ ເປົ້າໝາຍຂອງການສຳພາດໃຫ້ຄົວເຮືອນຮັບຊາບ;
- ພະຍາຍາມໃຊ້ພາສາທີ່ເຂົ້າໃຈງ່າຍ ແລະ ສາມາດສື່ສານກັບຜູ້ຖືກສຳພາດໄດ້, ໃນກໍລະນີຄົວເຮືອນບໍ່ເຂົ້າໃຈຕ້ອງສະເໜີກັບອຳນາດການປົກຄອງບ້ານ ເພື່ອຈັດຫາຜູ້ມາແປຊ່ວຍ;
- ສ້າງຄວາມປະທັບໃຈທີ່ດີໃນເວລາພົບກັນຄັ້ງທຳອິດ;
- ຕ້ອງມີວິທີການເຂົ້າຫາຜູ້ຖືກສຳພາດໃນທາງທີ່ດີສະເໝີ;
- ຕ້ອງເນັ້ນໃຫ້ຜູ້ຖືກສຳພາດຮູ້ວ່າຈະຮັກສາຄຳຕອບຂອງເຂົາເຈົ້າເປັນຄວາມລັບ;
- ຕອບຄຳຖາມຂອງຜູ້ຖືກສຳພາດຢ່າງກົງໄປກົງມາ;
- ໃນລະຫວ່າງການສຳພາດ, ຄວນຫຼີກລ່ຽງບໍ່ໃຫ້ມີຄົນອື່ນທີ່ບໍ່ແມ່ນສະມາຊິກຂອງຄົວເຮືອນຢູ່ບ່ອນນັ້ນນຳ.

**ນອກຈາກນີ້ ນັກເດີນສຳຫຼວດຕ້ອງເຂົ້າໃຈ ແລະ ກຳໄດ້ໜ້າທີ່ຂອງຕົນເອງ ໃນແຕ່ລະໄລຍະ ລະອຽດດັ່ງນີ້:**

### 1. ໜ້າທີ່ກ່ອນການເດີນສຳຫຼວດ

1) ການສ້າງສາຍພົວພັນກັບຜູ້ຖືກສຳພາດ.
2) ກະກຽມເອກະສານ ແລະ ບັນດາອຸປະກອນ ທີ່ຈຳເປັນໃນການສຳຫຼວດໃຫ້ຄົບຖ້ວນເປັນຕົ້ນແມ່ນ:
   - ໃບແຈ້ງການ,ຂໍ້ຕົກລົງແຕ່ງຕັ້ງ ແລະ ບັນຊີຄົວເຮືອນ;
   - ແບບສອບຖາມ;
   - ປຶ້ມຄູ່ມືນັກເດີນສຳຫຼວດ;
   - ອຸປະກອນສຳລັບຂຽນ: (ບິກຂຽນ, ບັນທັດ, ແຜ່ນເທັບລຶບຂາວສຳລັບແປງຄຳຜິດ ແລະ ປຶ້ມບັນທຶກ ແມ່ນໃຫ້ໃຊ້ສະເພາະໂຕທີ່ຫ້ອງການສຳຫຼວດຂັ້ນສູນກາງແຈກຢາຍໃຫ້ເທົ່ານັ້ນ);
   - ບັດປະຈຳຕົວສຳລັບນັກເດີນສຳຫຼວດ;
   - ຖົງໃສ່ເອກະສານ;

3) ສະເໜີຕົວຂອງທ່ານຕໍ່ກັບອຳນາດການປົກຄອງບ້ານ ພ້ອມທັງສະເໜີຈຸດປະສົງຂອງການສຳຫຼວດຢູ່ບ່ອນທີ່ທ່ານຈະປະຕິບັດການສຳຫຼວດ;
4) ເຮັດວຽກຮ່ວມກັບນາຍບ້ານ ແລະ ຄະນະຮັບຜິດຊອບການສຳຫຼວດໃນບ້ານ ເພື່ອກວດຄືນບັນຊີຄົວເຮືອນ ແລະ ກຳນົດເຂດສຳຫຼວດໃຫ້ຈະແຈ້ງ, ຖ້າຫາກມີຄົວເຮືອນຍ້າຍເຂົ້າມາໃໝ່ ຫຼື ຍ້າຍອອກ ແມ່ນປັບປຸງບັນຊີຄົວເຮືອນຄືນໃຫ້ຖືກຕ້ອງ;
5) ນັດພົບກັບບັນດາຄົວເຮືອນທີ່ນອນໃນເຂດສຳຫຼວດທີ່ຕົນຮັບຜິດຊອບ ແລະ ສ້າງແຜນນັດພົບສຳພາດຄົວເຮືອນໃຫ້ຈະແຈ້ງ ເພື່ອຮັບປະກັນການສຳຫຼວດສຳເລັດຕາມເວລາທີ່ກຳນົດໄວ້. ໃນກໍລະນີຄົວເຮືອນບໍ່ຢູ່ໃນເວລານັດພົບໃຫ້ນັກເດີນສຳຫຼວດວາງແຜນ ແລະ ນັດສຳພາດຄືນໃໝ່.

## 2. ໜ້າທີ່ໄລຍະການເດີນສຳຫຼວດ

ໃນເວລາສຳພາດນັກເດີນສຳຫຼວດຈະຕ້ອງເປັນຄົນກາງ, ບໍ່ຄາດເດົາຄຳຕອບ ແລະ ບໍ່ຕ້ອງເຮັດໃຫ້ຜູ້ຖືກສຳພາດຮູ້ສຶກວ່າລາວໃຫ້ຄຳຕອບຖືກ ຫຼື ຜິດຈາກສີໜ້າ ຫຼື ນໍ້າສຽງຂອງທ່ານ ແລະ ບໍ່ໃຫ້ແນະນຳຄຳຕອບຕໍ່ຜູ້ຖືກສຳພາດ ຫຼື ສະແດງອາການເຫັນພ້ອມ ຫຼື ບໍ່ເຫັນພ້ອມກັບຄຳຕອບທີ່ຜູ້ຖືກສຳພາດຕອບມາ. ບໍ່ຄວນສຳພາດແບບຟ້າວຟັ່ງ ເພື່ອຮັບປະກັນທຸກໆຄຳຖາມໄດ້ຖືກຖາມ ແລະ ໄດ້ຮັບຄຳຕອບຄົບຖ້ວນ, ຖືກຕ້ອງ ແລະ ຊັດເຈນ.

**ໃນໄລຍະການສຳຫຼວດ ນັກເດີນສຳຫຼວດຕ້ອງປະຕິບັດໜ້າທີ່ດັ່ງລຸ່ມນີ້:**

1) ຖາມທຸກໆຄຳຖາມໄປຕາມຂັ້ນຕອນ ໂດຍເລີ່ມຈາກຂໍ້ມູນເອກະລັກຂອງໜ້າປົກຈົນຮອດຄຳຖາມສຸດທ້າຍ ແລະ ຈົດກ່າຍບັນດາຄຳຕອບໃຫ້ຄົບຖ້ວນ, ຖືກຕ້ອງ ແລະ ຊັດເຈນ;
2) ໃຫ້ພິຈາລະນາຄຳຕອບໃຫ້ຖືກຕ້ອງ ແລະ ກົງກັບຄຳຖາມກ່ອນການຈົດກ່າຍເຂົ້າໃນແບບສອບຖາມ;
3) ກວດກາຄືນແຕ່ລະໃບແບບສອບຖາມ ເພື່ອຮັບປະກັນຄວາມຄົບຖ້ວນ, ຄວາມຖືກຕ້ອງ ແລະ ສອດຄ່ອງລະຫວ່າງຄຳຖາມຕ່າງໆກ່ອນຈະໄປສຳພາດຄົວເຮືອນຕໍ່ໄປ;
4) ຮັບປະກັນວ່າທ່ານໄດ້ສຳພາດທຸກໆຄົວເຮືອນທີ່ນອນຢູ່ໃນເຂດສຳຫຼວດຂອງທ່ານ. ແຕ່ຄວນລະວັງວ່າອາດມີຄົວເຮືອນໃດໜຶ່ງທີ່ທ່ານຕ້ອງໄດ້ສຳພາດຊຶ່ງມັນບໍ່ມີໃນບັນຊີຂອງທ່ານ;
5) ໃຫ້ບັນທຶກຄົວເຮືອນທີ່ທ່ານໄປຫາໃນເວລາສຳພາດ ແຕ່ບໍ່ມີໃຜຢູ່ເຮືອນ ຫຼື ບໍ່ມີຜູ້ສາມາດໃຫ້ຄຳຕອບໄດ້ ຫຼັງຈາກນັ້ນໃຫ້ນັດກັບຄົວເຮືອນດັ່ງກ່າວ ເພື່ອກັບໄປສຳພາດຄືນໃໝ່;
6) ພາຍຫຼັງສຳເລັດການສຳພາດຄົວເຮືອນແລ້ວທ່ານຕ້ອງໝາຍຕິກ (✓) ໃສ່ໃນບັນຊີຄົວເຮືອນສຳລັບເຂດການສຳຫຼວດ;
7) ພາຍຫຼັງສຳເລັດການສຳພາດແລ້ວຕ້ອງຕິດສະຕິກເກີກາໝາຍການສຳຫຼວດໃສ່ດ້ານເທິງຂອງປະຕູເຮືອນ ຫຼື ຝາເຮືອນບ່ອນທີ່ສາມາດສັງເກດເຫັນໄດ້ງ່າຍ;
8) ບັນທຶກເຫດການຕ່າງໆທີ່ພົບເຫັນໃນໄລຍະການເດີນສຳຫຼວດ.

## 3. ໜ້າທີ່ຫຼັງການເດີນສຳຫຼວດ

ໜ້າທີ່ຫຼັງການເດີນສຳຫຼວດປະກອບມີໜ້າທີ່ດັ່ງນີ້:

1) ກວດຄືນທຸກໆຄຳຖາມໃນແຕ່ລະໃບແບບສອບຖາມ ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ຄົບຖ້ວນ;
2) ກວດກາຈຳນວນໃບແບບສອບຖາມ ແລະ ປຶ້ມແບບສອບຖາມໃຫ້ຄົບຖ້ວນຕາມຈຳນວນທີ່ໄດ້ຮັບຈາກນັກກວດກາ. ສົ່ງມອບເອກະສານທັງໝົດດັ່ງກ່າວຄືນໃຫ້ນັກກວດກາ ເຊິ່ງປະກອບມີແບບສອບຖາມທີ່ໄດ້ໃຊ້, ແບບສອບຖາມທີ່ບໍ່ໄດ້ໃຊ້ ແລະ ແບບສອບຖາມທີ່ຜິດພາດ;

3) ນັກເດີນສຳຫຼວດຕ້ອງສົມທົບກັບຄະນະບ້ານກວດກາເອກະສານຕ່າງໃຫ້ຄົບຖ້ວນ, ເຊັນ ແລະ ປະທັບຕາ ນາຍບ້ານ ພ້ອມທັງສົ່ງມອບແບບສອບຖາມໃຫ້ນັກກວດກາ ພາຍຫຼັງສຳເລັດການເດີນສຳຫຼວດ;
4) ຂຽນບົດລາຍງານກ່ຽວກັບບັນຫາ ແລະ ສະພາບການຕ່າງໆໃຫ້ນັກກວດກາໃຫ້ຄົບຖ້ວນຕາມທີ່ໄດ້ກຳນົດ.

## VII. ບັນດານິຍາມຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ່ IV ປີ 2015

1) **ຄົນຕ່າງປະເທດ**:
ໝາຍເຖິງບຸກຄົນທີ່ຖືສັນຊາດອື່ນ ເຊິ່ງເຂົ້າມາໃນ ສປປ ລາວ ເພື່ອປະຕິບັດໜ້າທີ່ໃດໜຶ່ງ ໂດຍມີກຳນົດເມື່ອໝົດກຳນົດແລ້ວກໍ່ກັບຄືນ.

2) **ຄົນຕ່າງດ້າວ:**
ໝາຍເຖິງບຸກຄົນທີ່ຖືສັນຊາດອື່ນ ແຕ່ເຂົ້າມາອາໄສ, ຕັ້ງຖິ່ນຖານ, ທຳມາຫາກິນຢູ່ ສປປ ລາວ ຢ່າງຖາວອນ, ຖືບັດຕ່າງດ້າວ ແລະ ລັດຖະບານຂອງຄົນຕ່າງດ້າວນັ້ນກໍຍັງຮັບຮູ້ຜູ້ກ່ຽວນັ້ນຢ່າງເປັນທາງການຢູ່. ໂດຍສະເພາະແມ່ນບຸກຄົນທີ່ບໍ່ໄດ້ຢູ່ໃນການຄຸ້ມຄອງສະຖານກົງສູນ ແລະ ສະຖານທູດຕ່າງປະເທດປະຈຳລາວ ແລະ ໝາຍເຖິງຄົນຕ່າງປະເທດທີ່ ກະຊວງປ້ອງກັນຄວາມສະຫງົບເປັນຜູ້ຄຸ້ມຄອງ ແລະ ອອກບັດຕ່າງດ້າວໃຫ້.

3) **ຄົນບໍ່ມີສັນຊາດ:**
ແມ່ນບຸກຄົນທີ່ອາໄສໃນດິນແດນຂອງລາວ ຊຶ່ງບໍ່ແມ່ນພົນລະເມືອງລາວ ແລະ ບໍ່ສາມາດຢັ້ງຢືນໄດ້ວ່າຕົນມີສັນຊັນຊາດໃດ.

4) **ຄົວເຮືອນ**:
ແມ່ນຄົວເຮືອນທີ່ມີບຸກຄົນ ຫຼື ກຸ່ມຄົນ ທີ່ມີການກິນຢູ່ຮ່ວມກັນ ແລະ ດຳເນີນກິດຈະກຳປະຈຳວັນຂອງຄົວເຮືອນຮ່ວມກັນເປັນປະຈຳ. ໂດຍປົກກະຕິຄົວເຮືອນໜຶ່ງຈະປະກອບມີ: ຜົວ, ເມຍ, ລູກ, ພໍ່ແມ່, ລູກໄພ້-ລູກເຂີຍ, ຫຼານ, ພີ່ນ້ອງ ແລະ ບຸກຄົນອື່ນໆທີ່ບໍ່ແມ່ນຍາດພີ່ນ້ອງ. ຄົວເຮືອນແມ່ນມີ 2 ປະເພດຄື: ຄົວເຮືອນສ່ວນບຸກຄົນ ແລະ ຄົວເຮືອນລວມໝູ່ ເຊິ່ງມີນິຍາມດັ່ງນີ້:

- **ຄົວເຮືອນສ່ວນບຸກຄົນ**
ແມ່ນຄົວເຮືອນທີ່ມີຄົນດຽວ ຫຼື ຫຼາຍຄົນທີ່ຢູ່ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງຂອງເຮືອນມີການກິນຢູ່, ດຳເນີນກິດຈະກຳປະຈຳວັນ ແລະ ນຳໃຊ້ເຄື່ອງໃຊ້ສອຍຂອງຄົວເຮືອນຮ່ວມກັນຢ່າງເປັນປະຈຳ.
**ຄົວເຮືອນສ່ວນບຸກຄົນ ປະກອບມີ 2 ປະເພດຄື: ຄົວເຮືອນດ່ຽວ ແລະ ຄົວເຮືອນທີ່ມີຫຼາຍຄົນ.**
  - **ຄົວເຮືອນດ່ຽວ:** ແມ່ນຄົວເຮືອນທີ່ມີຄົນຜູ້ໜຶ່ງທີ່ຢູ່ທັງໝົດ ຫຼື ສ່ວນໃດໜຶ່ງຂອງເຮືອນ, ເປັນເອກະລາດຮອບດ້ານທາງດ້ານການດຳລົງຊີວິດດ້ວຍຕົວຂອງລາວເອງ ໂດຍບໍ່ຂຶ້ນກັບຄົນອື່ນເຖິງແມ່ນວ່າລາວຈະມີ ຫຼື ບໍ່ມີປຶ້ມສຳມະໂນຄົວເປັນຂອງຕົນເອງກໍ່ຕາມ.
  - **ຄົວເຮືອນທີ່ມີຫຼາຍຄົນ:** ແມ່ນຄົວເຮືອນທີ່ມີກຸ່ມຄົນແຕ່ສອງຄົນ ຫຼື ຫຼາຍກວ່ານັ້ນທີ່ຢູ່ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງຂອງເຮືອນ, ທີ່ມີການກິນຢູ່ຮ່ວມກັນ ແລະ ດຳເນີນກິດຈະກຳປະຈຳວັນຂອງຄົວເຮືອນຮ່ວມກັນເປັນປະຈຳ ແລະ ນຳໃຊ້ເຄື່ອງໃຊ້ສອຍຂອງຄົວເຮືອນທີ່ຈຳເປັນຮ່ວມກັນ. ສະມາຊິກຄົວເຮືອນປະກອບມີບຸກຄົນທີ່ມີສາຍພົວພັນກັນເຊັ່ນ: ຜົວ, ເມຍ, ລູກ, ພໍ່ແມ່, ລູກໄພ້-ລູກເຂີຍ, ຫຼານ, ພີ່ນ້ອງ ແລະ ບຸກຄົນອື່ນໆທີ່ບໍ່ແມ່ນຍາດພີ່ນ້ອງທີ່ອາໄສຢູ່ນຳຄົວເຮືອນຮ່ວມກັນເຖິງຈະມີ ຫຼື ບໍ່ມີປຶ້ມສຳມະໂນຄົວຮ່ວມກັນກໍ່ຕາມ.

- <u>**ຄົວເຮືອນລວມໝູ່**</u>

  ແມ່ນຄົວເຮືອນທີ່ມີກຸ່ມຄົນທີ່ອາໄສຢູ່ໃນເຮືອນ ຫຼື ອາຄານຮ່ວມກັນທີ່ໄດ້ຂຶ້ນກັບບັນຊີການຄຸ້ມຄອງຂອງການຈັດຕັ້ງໃດໜຶ່ງເຊັ່ນ: ຫໍພັກພະນັກງານ, ຫໍພັກນັກຮຽນ/ນັກສຶກສາ, ຫໍພັກກຳມະກອນ, ວັດ, ໂບດ ແລະ ອື່ນໆ ເຊິ່ງມີລະບົບການຈັດຕັ້ງຄຸ້ມຄອງຄັກແນ່.

  <u>***ໝາຍເຫດ:***</u>

- *ໃນກໍລະນີມີຄົວເຮືອນສ່ວນບຸກຄົນທີ່ເປັນອາຈານ ຫຼື ພະນັກງານທີ່ອາໄສຢູ່ໃນອາຄານ/ຫຼັງຄາເຮືອນຂອງການຈັດຕັ້ງນັ້ນ ແມ່ນໃຫ້ຖືວ່າເປັນຄົວເຮືອນສ່ວນບຸກຄົນ ເຖິງແມ່ນວ່າລາວຈະມີລາຍຊື່ຢູ່ໃນບັນຊີລາຍຊື່ຂອງອາຄານ/ຫຼັງຄາເຮືອນນັ້ນກໍ່ຕາມ.*
- ***ກໍລະນີພິເສດ:*** *ນັກຮຽນປະຖົມ, ມັດທະຍົມທີ່ໄປປຸກຕູບຢູ່ເພື່ອໄປຮຽນໜັງສື ໃນບໍລິເວນໂຮງຮຽນແມ່ນໃຫ້ຈົດນັບເຂົ້າເປັນຄົວເຮືອນລວມໝູ່ ແລະ ຖ້າຫາກປຸກຕູບຢູ່ນອກບໍລິເວນໂຮງຮຽນແມ່ນໃຫ້ຈົດນັບເອົາເປັນຄົວເຮືອນສ່ວນບຸກຄົນ.*

5) **ການເກີດມີຊີວິດ**

ໝາຍເຖິງເດັກທີ່ເກີດອອກມາແລ້ວ ສະແດງອາການຂອງການມີຊີວິດເຊັ່ນ: ຫົວໃຈເຕັ້ນ ຫຼື ມີຊີບພະຈອນເຕັ້ນ, ຮ້ອງໄຫ້, ອະໄວຍະວະ ຫຼື ກ້າມຊີ້ນເໜັງຕີງ ເຖິງແມ່ນວ່າອາການເຫຼົ່ານີ້ຈະເກີດຂຶ້ນບໍ່ເທົ່າໃດນາທີກໍ່ຕາມ ແລ້ວເດັກເສຍຊີວິດໄປກໍ່ໃຫ້ຖືວ່າ ແມ່ນການເກີດມີຊີວິດ.

## VIII. <u>ວິທີການຈົດກ່າຍ ແລະ ວິທີດັດແກ້ຄຳຜິດ</u>

### 1. ວິທີການຈົດກ່າຍ

ການຈົດກ່າຍຄຳຕອບໃສ່ໃນໃບແບບສອບຖາມປະກອບມີ 3 ຮູບແບບຄື: ການທາສີດຳ, ການຂຽນໂຕເລກ ແລະ ການຂຽນຄຳຕອບທີ່ເປັນໂຕໜັງສືໃສ່ໃນຫ້ອງສີ່ຫຼ່ຽມ ໂດຍບໍ່ໃຫ້ຕິດກັບຂອບເສັ້ນຂອງຫ້ອງສີ່ຫຼ່ຽມທີ່ໄດ້ກຳນົດໄວ້ໃນໃບແບບສອບຖາມ ດັ່ງລຸ່ມນີ້:

- **ຮູບແບບທີ 1:** ຫ້ອງສີ່ຫຼ່ຽມນ້ອຍຍາວ (ຂະໜາດ 2x3ມມ ▭ ) ທີ່ມີເລກລະຫັດຄຳຕອບຢູ່ທາງໃນ ຫຼື ທາງເທິງ ຫຼື ທາງຂ້າງຂອງຫ້ອງສີ່ຫຼ່ຽມດັ່ງກ່າວ ແມ່ນໃຊ້ສຳລັບໝາຍຄຳຕອບຂອງແຕ່ລະຄຳຖາມ ໂດຍໃຫ້ທາສີດຳ (▣)ໃສ່ລະຫວ່າງກາງຂອງຫ້ອງສີ່ຫຼ່ຽມ (☐) ດັ່ງລຸ່ມນີ້;

  <u>**ຕົວຢ່າງ:**</u>

  <u>ຫ້ອງສີ່ຫຼ່ຽມກ່ອນການທາສີດຳ</u>

  
  

  <u>ຫ້ອງສີ່ຫຼ່ຽມພາຍຫຼັງທາສີດຳ</u>

  
  

- **ຮູບແບບທີ 2:** ຫ້ອງສີ່ຫຼ່ຽມໃຫຍ່ (ຂະໜາດ 3x5ມມ ☐ ) ແມ່ນໃຊ້ສຳລັບຂຽນຄຳຕອບທີ່ເປັນໂຕເລກໃສ່ລະຫວ່າງກາງຫ້ອງສີ່ຫຼ່ຽມ (☐). ການຈົດກ່າຍຄຳຕອບທີ່ເປັນຕົວເລກ ເຊັ່ນ: ອາຍຸ, ລະຫັດແຂວງ, ລະຫັດເມືອງ, ລະຫັດບ້ານ ແລະ ລະຫັດຄຳຕອບອື່ນໆ. ການຂຽນໂຕເລກຕ້ອງຂຽນຕາມຮູບແບບດັ່ງລຸ່ມນີ້:



- **ຮູບແບບທີ 3:** ຫ້ອງຫວ່າງສຳລັບຂຽນຄຳຕອບທີ່ເປັນຕົວໜັງສື. ຮູບແບບການຈົດກ່າຍຄຳຕອບນີ້ແມ່ນໃຊ້ສະເພາະຄຳຖາມທີ Q2 ແລະ Q25. ການຈົດກ່າຍຄຳຕອບເປັນຕົວໜັງສືຕ້ອງຂຽນໃຫ້ຈະແຈ້ງ ແລະ ອ່ານອອກງ່າຍ ເຊັ່ນ: ຊື່ ແລະ ນາມສະກຸນ, ອາຊີບຕົ້ນຕໍໃນ 12 ເດືອນຜ່ານມາ;

<u>ຕົວຢ່າງ:</u>

<u>ການຂຽນຊື່ ແລະ ນາມສະກຸນ (ຄຳຖາມQ2)</u>




<u>ການຂຽນອາຊີບຕົ້ນຕໍໃນ 12 ເດືອນຜ່ານມາ (ຄຳຖາມQ25)</u>




***ຂໍ້ຄວນເອົາໃຈໃສ່:***

- *ການຈົດກ່າຍຄຳຕອບໃສ່ໃບແບບສອບຖາມມັກເດີນສຳຫຼວດຈະຕ້ອງຂຽນຄຳຕອບດ້ວຍບິກທີ່ຫ້ອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ແຈກຢາຍໃຫ້, ຫ້າມນຳໃຊ້ອຸປະກອນການຂຽນອື່ນຂຽນເດັດຂາດ.*
- *ການຈົດກ່າຍຄຳຕອບຂອງທຸກຄຳຖາມ (ທາສີດຳ ຫຼື ຂຽນໂຕເລກ ຫຼື ຂຽນຕົວໜັງ) ຕ້ອງບໍ່ໃຫ້ຕິດກັບຂອບເສັ້ນຂອງຫ້ອງສີ່ຫຼ່ຽມ.*

2. **ການດັດແກ້ຄຳຜິດ**

ໃນກໍລະນີທີ່ທ່ານໄດ້ຈົດກ່າຍຄຳຕອບຜິດ ຫຼື ຜູ້ຖືກສຳພາດປ່ຽນຄຳຕອບໃໝ່ນັ້ນ ***ແມ່ນໃຫ້ທ່ານເອົາແຜ່ນເທັບລຶບຂາວທີ່ຫ້ອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຂັ້ນສູນກາງ ກຳນົດ ແລະ ແຈກຢາຍໃຫ້ເທົ່ານັ້ນ ລຶບຄຳຕອບທີ່ບໍ່ຖືກຕ້ອງອອກ ແລ້ວຂຽນຄຳຕອບທີ່ຖືກຕ້ອງໃສ່.*** ການແກ້ໄຂຄວາມຜິດປະກອບມີ ດັ່ງນີ້:

- **ກໍລະນີຜິດບາງຈຸດ** ແມ່ນຄຳຜິດພາດທາງດ້ານການຈົດກ່າຍຄຳຕອບທີ່ເປັນໂຕໜັງສື ຫຼື ຕົວເລກ ຫຼື ການທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ທ່ານຕ້ອງເອົາແຜ່ນເທັບລຶບຂາວລຶບຄຳຕອບທີ່ບໍ່ຖືກຕ້ອງອອກ ແລ້ວຂຽນຄຳຕອບທີ່ເປັນໂຕໜັງສື ຫຼື ຕົວເລກ ຫຼື ທາສີດຳ(▣)ໃສ່ຫ້ອງສີ່ຫຼ່ຽມ (☐) ຂອງຄຳຕອບທີ່ຖືກຕ້ອງ.

<u>ຕົວຢ່າງ:</u>

- ການດັດແກ້ຄຳຜິດທີ່ເປັນໂຕໜັງສື

<u>ກ່ອນການດັດແກ້ຄຳຜິດ</u>




<u>ພາຍຫຼັງການດັດແກ້ຄຳຜິດ</u>



- ການດັດແກ້ຄຳຜິດທີ່ເປັນໂຕເລກ

ກ່ອນການດັດແກ້ຄຳຜິດ



ພາຍຫຼັງການດັດແກ້ຄຳຜິດ



- ການດັດແກ້ຄຳຜິດຈາກການທາສີດຳ

ກ່ອນການດັດແກ້ຄຳຜິດ



ພາຍຫຼັງການດັດແກ້ຄຳຜິດ



- **ກໍລະນີຜິດໝົດແຖວ**

ແມ່ນຄຳຜິດພາດໃນການຈົດກ່າຍຂໍ້ມູນຂອງສະມາຊິກຄົວເຮືອນໃດໜຶ່ງຈົນເຮັດໃຫ້ແຖວດັ່ງກ່າວບໍ່ສາມາດດັດແກ້ຄຳຜິດໄດ້ອີກທ່ານຕ້ອງທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ຂອງ Q 1 ທີ່ຢູ່ເບື້ອງໜ້າຂອງຊື່ຜູ້ນັ້ນ (ຢູ່ໃນຫ້ອງ Q 1 ເລກທີ່ບຸກຄົນໃນພາກ ຂ), ຈາກນັ້ນຈຶ່ງຈົດກ່າຍຊື່ບຸກຄົນດັ່ງກ່າວນັ້ນຄືນໃໝ່ໃສ່ແຖວໃໝ່ຕໍ່ໄປ ແລະ ຈົດກ່າຍຄຳຕອບທີ່ຖືກຕ້ອງໃສ່ໃຫ້ຖືກຕ້ອງຕາມລຳດັບຂອງຄຳຖາມ.

**<u>ຕົວຢ່າງ:</u>** ການຈົດກ່າຍຂໍ້ມູນຂອງ ທ້າວ ຄຳດີ ນັນທະວົງ, ເປັນຫົວໜ້າຄົວເຮືອນ, ອາຍຸ 53 ປີ, ແຕ່ງດອງແລ້ວ, ສັນຊາດລາວ, ຊົນເຜົ່າລາວ, ສາສະໜາພຸດ...

ກ່ອນການດັດແກ້ຄຳຜິດ




ພາຍຫຼັງການດັດແກ້ຄຳຜິດ



- **ກໍລະນີຜິດ 5-6 ຄັ້ງໃນໜ້າໜຶ່ງ ຫຼື ຂຽນເປື້ອນຫຼາຍຈົນໃຊ້ການບໍ່ໄດ້** ແມ່ນໃຫ້ທ່ານຂີດຕີນກາ (X) ຜ່ານໝົດໜ້າໃບແບບສອບຖາມ **ໃນໜ້າທີ 1 ແລະ ໜ້າທີ 2** ແລະ ຂຽນຄຳວ່າ "ຜິດພາດ". ໃບແບບສອບຖາມທີ່ຜິດພາດນີ້ ຫ້າມບໍ່ໃຫ້ ທ່ານຈີກອອກຈາກປຶ້ມແບບສອບຖາມເດັດຂາດ ເພາະວ່າທ່ານຈະຕ້ອງຮັບຜິດຊອບທຸກໆໃບແບບສອບຖາມທີ່ເບີກຈ່າຍໃຫ້ທ່ານໄປໃນໄລຍະຕົ້ນ ແລະ ໃຫ້ທ່ານຮັກສາ ແລະ ປະໄວ້ໃນປຶ້ມແບບສອບຖາມຄືເກົ່າເຖິງວ່າຈະໄດ້ຈົດກ່າຍແລ້ວ ຫຼື ບໍ່ທັນໄດ້ຈົດກ່າຍກໍ່ຕາມ.

<u>**ຕົວຢ່າງ:**</u> ການດັດແກ້ຄວາມຜິດໝົດໃບ




- ກໍລະນີຄົວເຮືອນທີ່ໃຊ້ຫຼາຍໃບແບບສອບຖາມ ທີ່ມີຄຳຜິດ 5-6 ຄັ້ງໃນໜ້າທີ 2 ຫຼື ເປື້ອນ ຈົນບໍ່ສາມາດດັດແກ້ຄຳຜິດໄດ້ອີກ ແມ່ນໃຫ້ຂີດຕີນກາ (X) ຜ່ານໝົດ**ໃນໜ້າດັ່ງກ່າວ ແລະ ໜ້າທີ 1 ແລ້ວໄປນຳ ໃຊ້ໃບໃໝ່. ໃນກໍລະນີນີ້ ທ່ານຈຳເປັນຕ້ອງຈົດກ່າຍຂໍ້ມູນ ໃນໜ້າທີ 1 ແລະ ໜ້າທີ 2 ທີ່ຖືກຕ້ອງໃສ່ ໃນໃບແບບສອບຖາມໃບໃໝ່.**

## IX. <u>ໂຄງປະກອບຂອງແບບສອບຖາມ ແລະ ວິທີການຈົດກ່າຍຂໍ້ມູນເຂົ້າໃນແບບສອບຖາມ</u>

### 1. ໂຄງປະກອບຂອງແບບສອບຖາມ

ປຶ້ມແບບສອບຖາມໜຶ່ງຫົວປະກອບມີ 37 ໃບແບບສອບຖາມ, ໃນໃບໜຶ່ງສາມາດຈົດໄດ້ 10 ຄົນ. ປຶ້ມແບບສອບຖາມແຕ່ລະຫົວມີເຄື່ອງໝາຍລະຫັດຕິດໃສ່ໄວ້ຢູ່ໜ້າປົກ. ເລກລະຫັດນີ້ຈະຊ່ວຍໃນການຕິດຕາມປຶ້ມແບບສອບຖາມໃນຕະຫຼອດໄລຍະເວລາການເດີນສຳຫຼວດ. ນັກເດີນສຳຫຼວດຈະຕ້ອງຈົດກ່າຍຂໍ້ມູນໃສ່ໜ້າປົກຂອງປຶ້ມແບບສອບຖາມກ່ອນປະຕິບັດການເດີນສຳຫຼວດແຕ່ລະຄົວເຮືອນ ເຊັ່ນ: ຂໍ້ມູນເອກະລັກ, ຊື່ແຂວງ, ເມືອງ,ບ້ານ,

ທີ່ຕັ້ງຂອງບ້ານ ແລະ ຂໍ້ມູນອື່ນໆທີ່ໄດ້ກຳນົດໄວ້ໃນໜ້າປົກຂອງປຶ້ມແບບສອບຖາມນັ້ນ. ແບບສອບຖາມປະກອບດ້ວຍ 10 ພາກດັ່ງນີ້:

ພາກ ກ: ຂໍ້ມູນເອກະລັກ

ພາກ ຂ: ຂໍ້ມູນສຳລັບໝົດທຸກຄົນ

ພາກ ຄ: ຂໍ້ມູນສຳລັບທຸກຄົນທີ່ມີອາຍຸ 6 ປີ ຂຶ້ນໄປ

ພາກ ງ: ຂໍ້ມູນສຳລັບທຸກຄົນທີ່ມີອາຍຸ 10 ປີ ຂຶ້ນໄປ

ພາກ ຈ: ສຳລັບແມ່ຍິງອາຍຸ 15- 49 ປີ (ຖາມແມ່ຍິງໂດຍກົງ)

ພາກ ຍ: ການຕາຍໃນຄົວເຮືອນ

ພາກ ສ: ການຍ້າຍເຂົ້າໃນ 12 ເດືອນຜ່ານມາ

ພາກ ຊ: ການຍ້າຍອອກໃນ 12 ເດືອນຜ່ານມາ

ພາກ ດ: ຄຸນລັກສະນະຂອງຄົວເຮືອນ

ພາກ ຕ: ຈຳນວນຄົນລວມ

**2. ຂັ້ນຕອນການຈົດກ່າຍ**

ກ່ອນຈະດຳເນີນການສຳພາດຕົວຈິງ ນັກເດີນສຳຫຼວດຕ້ອງປະຕິບັດໜ້າທີ່ກ່ອນການເດີນສຳຫຼວດ ແລະ ໜ້າທີ່ໃນໄລຍະການເດີນສຳຫຼວດໃຫ້ຖືກຕ້ອງ ແລະ ຄົບຖ້ວນ. ການສຳພາດຕົວຈິງ ແມ່ນດຳເນີນຕາມຂັ້ນຕອນດັ່ງນີ້:

1) ເລີ່ມຈາກການຈົດກ່າຍຂໍ້ມູນເອກະລັກ ໃນໜ້າປົກປຶ້ມແບບສອບຖາມ ໂດຍອີງໃສ່ບັນຊີຄົວເຮືອນສຳລັບເຂດສຳຫຼວດທີ່ຫ້ອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ແຈກຢາຍໃຫ້;
2) ຈົດກ່າຍຂໍ້ມູນກ່ຽວກັບພື້ນຖານໂຄງລ່າງຂອງບ້ານ ໃນໜ້າປົກປຶ້ມແບບສອບຖາມ ໂດຍການສອບຖາມອຳນາດການປົກຄອງບ້ານໃນເຂດການສຳຫຼວດທີ່ຕົນເອງຮັບຜິດຊອບ;
3) ຈົດກ່າຍຂໍ້ມູນເອກະລັກໃນ **ພາກ ກ** ໂດຍໃຫ້ຖືກຕ້ອງກັບຂໍ້ມູນເອກະລັກໃນໜ້າປົກປຶ້ມແບບສອບຖາມ ເຊິ່ງປະກອບມີລະຫັດແຂວງ, ເມືອງ, ບ້ານ, ເລກທີ່ເຂດສຳຫຼວດ ແລະ ປະເພດບ້ານ. ສຳລັບປະເພດຄົວເຮືອນ ແມ່ນໃຫ້ຖືກຕ້ອງກັບທີ່ໄດ້ກຳນົດໄວ້ໃນບັນຊີຄົວເຮືອນສຳລັບເຂດສຳຫຼວດ;
4) ການກຳນົດວ່າໃຜຈະເປັນສະມາຊິກຂອງຄົວເຮືອນ ແມ່ນໃຫ້ຈົດກ່າຍຊື່ ແລະ ນາມສະກຸນ ຂອງບຸກຄົນທີ່ມີຊື່ ແລະ ບໍ່ມີຊື່ໃນສຳມະໂນຄົວທີ່ອາໄສຢູ່ໃນຄົວເຮືອນທັງໝົດໃນເວລານັດໝາຍການສຳຫຼວດໃຫ້ຄົບຖ້ວນ ໃສ່ໃນປຶ້ມບັນທຶກທີ່ຫ້ອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ແຈກຢາຍໃຫ້ ໂດຍອີງຕາມນິຍາມຄົນຢູ່ເປັນປະຈຳ ເພື່ອໄຈແຍກວ່າໃຜຈະເປັນສະມາຊິກໃນຄົວເຮືອນ ແລະ ນອນຢູ່ໃນເປົ້າໝາຍການສຳຫຼວດໃນຄັ້ງນີ້. ຫຼັງຈາກທີ່ກຳນົດສະມາຊິກຄົວເຮືອນໄດ້ແລ້ວ ຈຶ່ງຈົດຊື່ ແລະ ນາມສະກຸນຂອງສະມາຊິກຄົວເຮືອນລົງໃນໃບແບບສອບຖາມ (ຄຳຖາມທີ Q2) ໃຫ້ຖືກຕ້ອງ, ຄົບຖ້ວນ ໂດຍເລີ່ມຕົ້ນຈາກຫົວໜ້າຄົວເຮືອນ ແລະ ຜູ້ຕໍ່ໆໄປຈົນຮອດຄົນສຸດທ້າຍ (ອີງຕາມການຈັດລຳລັບສະມາຊິກໃນຄົວເຮືອນທີ່ໄດກຳນົດໄວ້ໃນ ***ຄຳຖາມທີ Q2,*** *ໜ້າ 18-19* ຂອງປຶ້ມຄູ່ມືສະບັບນີ້*)*;

5) ສຳພາດເອົາຂໍ້ມູນຂອງສະມາຊິກຄົວເຮືອນທຸກຄົນຈາກຫົວໜ້າຄົວເຮືອນ ຫຼື ຜູ້ທີ່ສາມາດໃຫ້ຂໍ້ມູນກ່ຽວກັບສະມາຊິກຄົວເຮືອນທີ່ຖືກສຳພາດ ແລະ ຈົດກ່າຍຄຳຕອບໃຫ້ຖືກຕ້ອງຕາມທີ່ຜູ້ຖືກສຳພາດຕອບມາໃນແຕ່ລະຄຳຖາມດັ່ງນີ້:
   - ຫຼັກສຳພາດ ແມ່ນໃຫ້ເລີ່ມສຳພາດເອົາຂໍ້ມູນເປັນແຕ່ລະບຸກຄົນທີ່ມີຊື່ໃນ ຄຳຖາມທີ Q2 ໃຫ້ຄົບຖ້ວນ ແລະ ຖືກຕ້ອງໃນຄຳຖາມທີ Q3 ຫາ Q26 ໂດຍເລີ່ມຕົ້ນຈາກຫົວໜ້າຄົວເຮືອນ ແລະ ສະມາຊິກຄົນຕໍ່ໆໄປຈົນຮອດຄົນສຸດທ້າຍ;
   - ພາຍຫຼັງສຳເລັດການສຳພາດໃນຄຳຖາມທີ Q3 ຫາ Q26 ແລ້ວ ແມ່ນໃຫ້ສືບຕໍ່ສຳພາດຄຳຖາມທີ Q27 ຫາ Q63 ຕາມບຸກຄົນທີ່ກ່ຽວຂ້ອງ ຫຼື ຫົວໜ້າຄົວເຮືອນ ຫຼື ຜູ້ທີ່ສາມາດໃຫ້ຂໍ້ມູນກ່ຽວກັບຄຳຖາມດັ່ງກ່າວ.
6) ພາຍຫຼັງສຳເລັດການສຳພາດໃນແຕ່ລະຄົວເຮືອນແລ້ວ ແມ່ນໃຫ້ສັງລວມສະພາບລວມຂອງຄົວເຮືອນໃສ່ໃນຫ້ອງໝາຍເຫດຂອງໃບແບບສອບຖາມທີ່ໃຊ້ສຳພາດຄົວເຮືອນດັ່ງກ່າວ. ຫຼັງຈາກນັ້ນໃຫ້ນັກເດີນສຳຫຼວດ ເຊັນຊື່ຂອງຕົນເອງ ແລະ ວັນທີສຳພາດໃສ່ໃນຫ້ອງ "**ນັກເດີນສຳຫຼວດ, ວັນທີ**" (ດ້ານຂວາມືທັດຈາກຫ້ອງໝາຍເຫດ).
7) ພາຍຫຼັງສຳເລັດການສຳພາດໃນແຕ່ລະຄົວເຮືອນແລ້ວ ໃຫ້ສັງລວມຈຳນວນຄົນລວມຂອງແຕ່ລະຄົວເຮືອນໃນໃບແບບສອບຖາມ ແລະ ຈົດກ່າຍຈຳນວນຄົນລວມໃນ **ພາກ ຓ** (ຄຳຖາມທີ Q 61 ຫາ Q63) ໃສ່ໜ້າປົກປຶ້ມແບບສອບຖາມ;
8) ສັງລວມສະພາບການຕ່າງໆ ທີ່ເກີດຂຶ້ນໃນຕະຫຼອດໄລຍະການເດີນສຳຫຼວດ ໃສ່ບ່ອນສຳລັບຂຽນຄຳເຫັນກ່ຽວກັບສະພາບການຕ່າງໆທີ່ເກີດຂຶ້ນໃນໄລຍະການເດີນສຳຫຼວດ ທີ່ຢູ່ໃນໜ້າປົກປຶ້ມແບບສອບຖາມ;
9) ກວດກາຄືນຄວາມຖືກຕ້ອງ, ຄົບຖ້ວນຂອງການຈົດກ່າຍຄຳຕອບໃນແຕ່ລະຄຳຖາມຂອງແຕ່ລະຄົວເຮືອນ;
10) ນຳເອົາປຶ້ມແບບສອບຖາມໄປ ເຊັນ ແລະ ປະທັບຕານາຍບ້ານ ເພື່ອຢັ້ງຢືນການສຳເລັດການສຳພາດ ແລະ ການເດີນສຳຫຼວດ ໃນເຂດສຳຫຼວດທີ່ຕົນຮັບຜິດຊອບ.

## 3. ວິທີຈົດກ່າຍຂໍ້ມູນລົງໜ້າປົກປຶ້ມແບບສອບຖາມ

### 3.1. ຂໍ້ມູນເອກະລັກ

ຂໍ້ມູນເອກະລັກ ໝາຍເຖິງຂໍ້ມູນກ່ຽວກັບທີ່ຕັ້ງຂອງເຂດສຳຫຼວດທີ່ນັກເດີນສຳຫຼວດໄປສຳພາດ ໂດຍອີງໃສ່ບັນຊີຄົວເຮືອນສຳລັບເຂດສຳຫຼວດ, ເຊິ່ງຕ້ອງຂຽນເປັນຕົວເລກ ລາຍລະອຽດດັ່ງລຸ່ມນີ້:

1) **ລະຫັດແຂວງ, ລະຫັດເມືອງ ແລະ ລະຫັດບ້ານ**

ໃນເວລາເລີ່ມຕົ້ນການສຳພາດໃຫ້ຂຽນຊື່ ແລະ ລະຫັດຂອງແຂວງ, ເມືອງ ແລະ ບ້ານ ໃຫ້ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ຢູ່ໃນບັນຊີຄົວເຮືອນສຳລັບເຂດສຳຫຼວດທີ່ຫ້ອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ແຈກຢາຍ

ໃຫ້. ລະຫັດຂອງແຂວງມີສອງຕົວເລກ ເຊິ່ງເລີ່ມແຕ່ 01 ຫາ 18. ລະຫັດເມືອງ ແມ່ນມີສອງຕົວເລກເລີ່ມແຕ່ 01 ຫາ 15. ລະຫັດບ້ານ ແມ່ນມີສາມຕົວເລກຕາມທີ່ໄດ້ກຳນົດໄວ້ໃນບັນຊີຄົວເຮືອນສຳລັບເຂດສຳຫຼວດ.

2) **ເລກທີເຂດສຳຫຼວດ**

ແມ່ນເລກທີ່ການແບ່ງເຂດຄວາມຮັບຜິດຊອບການເດີນສຳຫຼວດຂອງນັກເດີນສຳຫຼວດຜູ້ໜຶ່ງ ເຊິ່ງຜູ້ໜຶ່ງຈະຮັບຜິດຊອບໜຶ່ງເຂດສຳຫຼວດ ແລະ ໃຫ້ຂຽນເລກທີເຂດສຳຫຼວດທີ່ຕົນຮັບຜິດຊອບໃສ່. ລະຫັດເຂດສຳຫຼວດດັ່ງກ່າວແມ່ນໄດ້ກຳນົດໄວ້ໃນບັນຊີຄົວເຮືອນສຳລັບເຂດສຳຫຼວດ. ຕົວຢ່າງ: ເຂດສຳຫຼວດທີ່ໜຶ່ງແມ່ນຂຽນ 01 ໃສ່, ຖ້າເຂດສຳຫຼວດທີ່ສອງແມ່ນຂຽນ 02 ໃສ່...

3) **ເລກທີປື້ມແບບສອບຖາມ**

ແມ່ນເລກລຳດັບຂອງປື້ມທີ່ໃຊ້ໃນເຂດສຳຫຼວດຫນຶ່ງ. ຖ້າເຂດສຳຫຼວດນັ້ນໃຊ້ປື້ມຫົວດຽວກໍ່ໃຫ້ຈົດກ່າຍ 01 ໃສ່. ຖ້າເຂດສຳຫຼວດໃຊ້ປື້ມຫຼາຍກ່ວາຫົວໜຶ່ງໃຫ້ຈົດກ່າຍ “01, 02, 03” ແລະ ຕໍ່ໆໄປຕາມລຳດັບ.

4) **ລະຫັດປື້ມແບບສອບຖາມ (ບາໂຄດສ໌)**

ແມ່ນເລກລຳດັບຂອງປື້ມທີ່ພິມຕິດຢູ່ໜ້າປົກ ແລະ ດ້ານຫຼັງຂອງປື້ມແບບສອບຖາມ ເພື່ອຄຸ້ມຄອງລະບົບການແຈກຢາຍປື້ມແບບສອບຖາມໃນແຕ່ລະເຂດສຳຫຼວດ. ເລກລະຫັດນີ້ແມ່ນເລກຫົວໜ່ວຍສະເພາະ ສຳລັບຄຸ້ມຄອງ - ກວດກາປື້ມແບບສອບຖາມ ແລະ ບໍ່ໃຫ້ແກະອອກ ຫຼື ປ່ຽນແປງ.

### 3.2. ຂໍ້ມູນກ່ຽວກັບພື້ນຖານໂຄງລ່າງຂອງບ້ານ

1) **ບ້ານໃນເທດສະບານຂອງເມືອງ/ແຂວງ:** ແມ່ນບ້ານທີ່ນອນຢູ່ໃນເທດສະບານຂອງເມືອງ ຫຼື ແຂວງ ຕາມການກຳນົດຂອງອຳນາດການປົກຄອງຂອງເມືອງ ຫຼື ແຂວງ.
2) **ຄົວເຮືອນທີ່ໃຊ້ນ້ຳປະປາ:** ໝາຍເຖິງຄົວເຮືອນທີ່ໄດ້ຊົມໃຊ້ນ້ຳປະປາທີ່ໄດ້ຖືກຮັບຮອງຈາກລັດວິສາຫະກິດນ້ຳປະປາລາວເທົ່ານັ້ນ.
3) **ຄົວເຮືອນທີ່ໃຊ້ໄຟຟ້າ:** ໝາຍເຖິງຄົວເຮືອນທີ່ໃຊ້ໄຟຟ້າຈາກຕາຄ່າຍໄຟຟ້າຂອງລັດເທົ່ານັ້ນ.
4) **ເສັ້ນທາງເຂົ້າເຖິງບ້ານ:** ໝາຍເຖິງເສັ້ນທາງທຸກປະເພດທີ່ລົດໃຫຍ່ສາມາດທຽວໄດ້ຕະຫຼອດປີ ຫຼື ມີເສັ້ນທາງດັ່ງກ່າວ ຫ່າງຈາກບ້ານປະມານ 100 ແມັດລົງມາ ແມ່ນຖືວ່າບ້ານນັ້ນມີເສັ້ນທາງເຂົ້າເຖິງ.
5) **ບ້ານທີ່ມີຕະຫຼາດ:** ໝາຍເຖິງຕະຫຼາດທີ່ມີທີ່ຕັ້ງຖາວອນ, ມີລະບົບຈັດສັນ, ມີການຊື້ຂາຍກັນຕະຫຼອດວັນຢ່າງເປັນປົກກະຕິ. *ບ້ານທີ່ມີຕະຫຼາດນີ້ແມ່ນໃຫ້ຖືເອົາທີ່ຕັ້ງເປັນຫຼັກ. ສຳລັບບ້ານທີ່ໃຊ້ຕະຫຼາດຮ່ວມກັບບ້ານອື່ນແຕ່ຕະຫຼາດດັ່ງກ່າວບໍ່ໄດ້ຕັ້ງຢູ່ໃນຂອບເຂດບ້ານ ແມ່ນໃຫ້ຖືວ່າບ້ານດັ່ງກ່າວນັ້ນບໍ່ມີຕະຫຼາດ.*
6) **ບ້ານທີ່ມີສຸກສາລາ/ໂຮງໝໍ:** ໝາຍເຖິງບ້ານທີ່ມີສຸກສາລາ/ໂຮງໝໍທີ່ສາມາດເປີດໃຫ້ບໍລິການໃຫ້ແກ່ປະຊາຊົນໄດ້ຢ່າງເປັນປົກກະຕິຕັ້ງຢູ່ໃນບ້ານດັ່ງກ່າວ.
7) **ບ້ານທີ່ມີໂຮງຮຽນປະຖົມສົມບູນ:** ໝາຍເຖິງບ້ານທີ່ມີໂຮງຮຽນປະຖົມສົມບູນທີ່ມີຄົບໝົດທຸກຊັ້ນແຕ່ ປ1 ຫາ ປ5 ຕັ້ງຢູ່ພາຍໃນບ້ານດັ່ງກ່າວ.
8) **ບ້ານທີ່ມີໂຮງຮຽນປະຖົມບໍ່ສົມບູນ:** ໝາຍເຖິງບ້ານທີ່ມີໂຮງຮຽນປະຖົມບໍ່ສົມບູນທີ່ມີຊັ້ນຮຽນບໍ່ຄົບໝົດທຸກຊັ້ນ ເຊິ່ງອາດຈະມີແຕ່ ປ1 ຫາ ປ3 ຫຼື ປ1 ຫາ ປ4 ຕັ້ງຢູ່ພາຍໃນບ້ານດັ່ງກ່າວ.

9) **ບ້ານຕົວເມືອງ:** ໝາຍເຖິງບ້ານທີ່ມີຄົບ 3 ໃນ 5 ມາດຖານຂຶ້ນໄປແມ່ນຖືວ່າແມ່ນບ້ານຕົວເມືອງ ເຊິ່ງມາດຖານດັ່ງກ່າວປະກອບມີດັ່ງນີ້:
   - ບ້ານຕັ້ງຢູ່ໃນເທດສະບານຂອງເມືອງ/ແຂວງ;
   - 70% ຂອງຄົວເຮືອນທັງໝົດໃນບ້ານມີນໍ້າປະປາໃຊ້;
   - 70% ຂອງຄົວເຮືອນທັງໝົດໃນບ້ານມີໄຟຟ້າໃຊ້;
   - ບ້ານທີ່ມີເສັ້ນທາງທີ່ລົດໃຫຍ່ສາມາດທຽວໄດ້ຕະຫຼອດປີ;
   - ບ້ານທີ່ມີຕະຫຼາດ.

10) **ບ້ານຊົນນະບົດມີເສັ້ນທາງເຂົ້າເຖິງ:** ໝາຍເຖິງບ້ານທີ່ບໍ່ມີຄົບຮອດ 3 ໃນ 5 ມາດຖານ, ແຕ່ມີເສັ້ນທາງເຂົ້າເຖິງບ້ານທີ່ລົດໃຫຍ່ສາມາດທຽວໄດ້ຕະຫຼອດປີ ຫຼື ມີເສັ້ນທາງດັ່ງກ່າວຫ່າງຈາກບ້ານປະມານ 100 ແມັດລົງມາ ແມ່ນຖືວ່າບ້ານນັ້ນມີເສັ້ນທາງເຂົ້າເຖິງ.

11) **ບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ:** ໝາຍເຖິງບ້ານທີ່ບໍ່ມີຄົບຮອດ 3 ໃນ 5 ມາດຖານ ແລະ ບໍ່ມີເສັ້ນທາງເຂົ້າເຖິງບ້ານ.

### 3.3. ຈໍານວນພົນລະເມືອງ

ການສັງລວມຂໍ້ມູນຈໍານວນພົນລະເມືອງ (ຈໍານວນລວມຍິງ-ຊາຍ) ເຂົ້າໃນຕາຕະລາງສະຫຼຸບຢູ່ໜ້າປົກປຶ້ມແບບສອບຖາມ ແມ່ນສັງລວມຂໍ້ມູນຢູ່ໃນ **ພາກ ຓ** ຂອງໃບແບບສອບຖາມຂອງແຕ່ລະຄົວເຮືອນພາຍຫຼັງທີ່ນັກເດີນສໍາຫຼວດສໍາພາດທຸກຄົວເຮືອນໃນເຂດສໍາຫຼວດສໍາເລັດໝົດແລ້ວ.

### 3.4. ຫ້ອງສໍາລັບຄໍາເຫັນ.

ຫ້ອງສໍາລັບຄໍາເຫັນ ນັກເດີນສໍາຫຼວດຄວນຂຽນຂໍ້ສັງເກດ ແລະ ຄໍາຄິດເຫັນກ່ຽວກັບສະພາບການຕ່າງໆທີ່ກ່ຽວກັບການເດີນສໍາຫຼວດໃສ່ ພາຍຫຼັງສໍາເລັດການສໍາຫຼວດເປັນຕົ້ນແມ່ນຄົວເຮືອນທີ່ມີຢູ່ໃນບັນຊີແຕ່ບໍ່ໄດ້ສໍາພາດ ແລະ ຈໍານວນຄົວເຮືອນທີ່ຍ້າຍເຂົ້າມາໃໝ່ທີ່ບໍ່ມີຢູ່ໃນບັນຊີຂອງບ້ານ.

- *ສໍາລັບຫ້ອງທີ່ຢູ່ດ້ານລຸ່ມເບື້ອງຊ້າຍມືຂອງໜ້າປົກ ແມ່ນສໍາລັບນັກກວດກາຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນສູນກາງ ແມ່ນບໍ່ໃຫ້ນັກເດີນສໍາຫຼວດຂຽນຫຍັງໃສ່.*
- *ສໍາລັບຫ້ອງເຊັນ ແລະ ປະທັບຕານາຍບ້ານນັ້ນ ພາຍຫຼັງນັກເດີນສໍາຫຼວດສໍາເລັດການເດີນສໍາຫຼວດ ນາຍບ້ານຈະຕ້ອງເຊັນ ແລະ ປະທັບຕາລົງໃນຫ້ອງດັ່ງກ່າວ ເພື່ອເປັນການຢັ້ງຢືນການສໍາເລັດການເດີນສໍາຫຼວດຂອງນັກເດີນສໍາຫຼວດ.*

**<u>ຕົວຢ່າງ:</u>**

- ການຈົດກ່າຍຂໍ້ມູນເອກະລັກ ແລະ ຂໍ້ມູນກ່ຽວກັບພື້ນຖານໂຄງລ່າງຂອງບ້ານ



ຂໍ້ມູນເອກະລັກ

| ແຂວງ | ເມືອງ | ບ້ານ | ເລກທີເຂດສຳຫຼວດ | ເລກທີປຶ້ມ |
|---|---|---|---|---|
| 12 | 03 | 025 | 01 | 01 |

ຊື່ແຂວງ: ຄຳມ່ວນ
ຊື່ເມືອງ: ໜອງບົກ
ຊື່ບ້ານ: ຊຽງຫວ່າງທ່າ

ຂໍ້ມູນກ່ຽວກັບພື້ນຖານໂຄງລ່າງຂອງບ້ານ:

| | 1.ແມ່ນ | 2.ບໍ່ແມ່ນ |
|---|---|---|
| 1. ຕັ້ງຢູ່ເທດສະບານເມືອງ/ແຂວງ | ■ | |
| 2. ຢ່າງໜ້ອຍ 70% ຂອງຄົວເຮືອນໃນບ້ານ ມີໄຟຟ້າໃຊ້ | ■ | |
| 3. ຢ່າງໜ້ອຍ 70% ຂອງຄົວເຮືອນໃນບ້ານ ມີນ້ຳປະປາໃຊ້ | ■ | |
| 4. ມີເສັ້ນທາງລົດໃຫຍ່ເຂົ້າເຖິງ | ■ | |
| 5. ມີຕະຫຼາດຊື້ຂາຍຕະຫຼອດວັນ | | ■ |
| 6. ມີສຸກສາລາ/ໂຮງໝໍ | | ■ |

7. ໃນບ້ານນີ້ມີໂຮງຮຽນປະຖົມບໍ່ ?
- ມີ, ໂຮງຮຽນປະຖົມສົມບູນ — 1 ■
- ມີ, ໂຮງຮຽນປະຖົມບໍ່ສົມບູນ — 2 □
- ບໍ່ມີໂຮງຮຽນປະຖົມ — 3 □

ປະເພດບ້ານ
- 1. ຕົວເມືອງ — 1 ■
- 2. ຊົນນະບົດມີເສັ້ນທາງເຂົ້າເຖິງ — 2 □
- 3. ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ — 3 □

### 4. ວິທີຈົດກ່າຍຂໍ້ມູນເຂົ້າໃນໃບແບບສອບຖາມ

ໂດຍທົ່ວໄປຄົວເຮືອນທີ່ມີສະມາຊິກບໍ່ເກີນ 10 ຄົນແມ່ນຈະໃຊ້ໃບແບບສອບຖາມ 1 ໃບ ຖ້າຫາກບໍ່ມີການຈົດກ່າຍທີ່ຜິດພາດ.

ໃນກໍລະນີຄົວເຮືອນໜຶ່ງໃຊ້ໃບແບບສອບຖາມຫຼາຍກວ່າໜຶ່ງໃບ ການຈົດກ່າຍຄຳຕອບສຳລັບບັນດາຄຳຖາມທີ່ມີຢູ່ **ພາກ ຈ** ຫາ **ພາກ ຕ** (ຄຳຖາມທີ 27 ຫາ 63) ຈະຕ້ອງຈົດກ່າຍໃສ່ໃບສຸດທ້າຍຂອງໃບແບບສອບຖາມສຳລັບຄົວເຮືອນນັ້ນ.

#### 4.1. ພາກ ກ: ຂໍ້ມູນເອກະລັກ

ສຳລັບການຈົດກ່າຍຂໍ້ມູນເອກະລັກໃນພາກ ກ ແມ່ນຈົດກ່າຍມາຈາກບັນຊີຄົວເຮືອນສຳລັບເຂດການສຳຫຼວດ ທີ່ຫ້ອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຂັ້ນສູນກາງ ຈັດແບ່ງໃຫ້ແກ່ນັກເດີນສຳຫຼວດ.

ຂໍ້ມູນເອກະລັກ ໝາຍເຖິງຂໍ້ມູນກ່ຽວກັບທີ່ຕັ້ງຂອງຄົວເຮືອນທີ່ນັກເດີນສຳຫຼວດໄປສຳພາດ, ເຊິ່ງຕ້ອງຂຽນເປັນຕົວເລກ ປະກອບມີລະຫັດແຂວງ, ເມືອງ, ບ້ານ, ເລກທີເຂດສຳຫຼວດ, ເລກທີອາຄານ, ເລກທີຄົວເຮືອນ, ປະເພດຄົວເຮືອນ, ປະເພດບ້ານ ແລະ ເລກທີໃບທີ່ໃຊ້ໃນຄົວເຮືອນນີ້. ສຳລັບລະຫັດແຂວງ, ເມືອງ, ບ້ານ, ເລກທີເຂດສຳຫຼວດຈະຕ້ອງຄືກັນກັບຢູ່ໜ້າປົກຂອງປຶ້ມແບບສອບຖາມ.

**- ເລກທີອາຄານ**

ໃຫ້ຂຽນເລກທີອາຄານ/ຫຼັງຄາເຮືອນໃສ່ໃຫ້ຖືກຕ້ອງ ໂດຍອີງຕາມບັນຊີຄົວເຮືອນສຳລັບເຂດສຳຫຼວດ ແລະ ໃຫ້ຂຽນເລກທີ່ຂອງອາຄານ/ຫຼັງຄາເຮືອນດ້ວຍລະຫັດສີ່ຕົວເລກ ຄື: **0001**, **0002** ລຽງຕາມລຳດັບຈົນຮອດອາຄານ/ຫຼັງຄາເຮືອນສຸດທ້າຍຂອງບ້ານນັ້ນ. ສຳລັບບ້ານທີ່ມີຫຼາຍເຂດສຳຫຼວດ ນັກເດີນສາຫຼວດທີ່ຮັບຜິດຊອບເຂດທີ່ 2 ຫຼື ເຂດຖັດໄປ ຕ້ອງອີງຕາມບັນຊີຄົວເຮືອນສຳລັບເຂດສຳຫຼວດ ເຊິ່ງລະຫັດເລກທີອາຄານ/ຫຼັງຄາເຮືອນອາດຈະບໍ່ໄດ້ເລີ່ມຕົ້ນຈາກ **0001** ສະເໝີໄປ.

***ກໍລະນີພິເສດ:*** *ສຳລັບຄົວເຮືອນ ຫຼື ບຸກຄົນທີ່ບໍ່ມີເຮືອນຢູ່ ເລກທີ່ອາຄານ ແມ່ນໃຫ້ເລີ່ມຕົ້ນຈາກ **7001, 7002** ລຽງຕາມລຳດັບຈົນຮອດຄົວເຮືອນ ຫຼື ບຸກຄົນທີ່ບໍ່ມີເຮືອນຢູ່ສຸດທ້າຍ.*

**- ເລກທີຄົວເຮືອນ**

ໃຫ້ຂຽນເລກທີຄົວເຮືອນໃສ່ໃຫ້ຖືກຕ້ອງ ໂດຍອີງຕາມບັນຊີຄົວເຮືອນສຳລັບເຂດສຳຫຼວດ ແລະ ໃຫ້ຂຽນເລກທີຂອງຄົວເຮືອນດ້ວຍລະຫັດສີ່ຕົວເລກ ຄື: **0001, 0002** ລຽງຕາມລຳດັບຈົນຮອດຄົວເຮືອນສຸດທ້າຍຂອງບ້ານນັ້ນ. ສຳລັບຄົວເຮືອນລວມໝູ່ ແມ່ນໃຫ້ນັກເດີນສຳຫຼວດໃຊ້ລະຫັດເລກທີຄົວເຮືອນທີ່ຫ້ອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ໄດ້ກຳນົດໄວ້ ໂດຍເລີ່ມຕົ້ນຈາກ **8001, 8002** ລຽງຕາມລາດັບຈົນຮອດຄົວເຮືອນສຸດທ້າຍຂອງບ້ານນັ້ນ.

**- ປະເພດຄົວເຮືອນ**

ໂດຍອີງໃສ່ນິຍາມຄົວເຮືອນ ຖ້າວ່າຄົວເຮືອນຖືກສຳພາດເປັນຄົວເຮືອນສ່ວນບຸກຄົນ ແມ່ນໃຫ້ທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ທີ່ມີເລກ 1 "**ຄົວເຮືອນສ່ວນບຸກຄົນ**". ຖ້າວ່າຄົວເຮືອນຖືກສຳພາດເປັນຄົວເຮືອນລວມໝູ່ ແມ່ນໃຫ້ທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐)ທີ່ມີເລກ 2 "**ຄົວເຮືອນລວມໝູ່**".

***ກໍລະນີພິເສດ:*** *ສຳລັບບັນດາສະຖານທູດຢູ່ຕ່າງປະເທດ ຫຼື ນັກສຶກສາ ຢູ່ຕ່າງປະເທດ ແມ່ນໃຫ້ຈັດນັບເປັນຄົວເຮືອນລວມໝູ່. ສຳລັບຂໍ້ມູນເອກກະລັກ ແມ່ນໃຫ້ຂຽນ ແຕ່ລະຫັດປະເທດເທົ່ານັ້ນ.*

**- ເລກທີໃບຂອງຄົວເຮືອນ**

ໝາຍເຖິງເລກທີຂອງຈຳນວນໃບແບບສອບຖາມທີ່ໃຊ້ສຳລັບການສຳພາດຄົວເຮືອນ. ຖ້າຄົວເຮືອນໃຊ້ 1 ໃບ ແມ່ນໃຫ້ໝາຍເລກ **01** ໃສ່ຫ້ອງ "**ເລກທີໃບທີ່ໃຊ້ໃນຄົວເຮືອນນີ້**" ແລະ ບໍ່ໃຫ້ທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ໃນຫ້ອງທີ່ວ່າ "**ຖ້າໃຊ້ໃບຕໍ່ໄປສຳລັບຄົວເຮືອນນີ້** ".

ຖ້າຄົວເຮືອນໃຊ້ 2 ໃບ ແມ່ນໃຫ້ໝາຍເລກ **01** ໃສ່ໃບທີ 1 ແລະ ໃຫ້ທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ໃນຫ້ອງຖັດໄປ "**ຖ້າໃຊ້ໃບຕໍ່ໄປສຳລັບຄົວເຮືອນນີ້** " ແລະ ໃບທີ 2 ແມ່ນໃຫ້ໝາຍເລກ **02** ໃສ່. ກໍລະນີຄົວເຮືອນທີ່ໃຊ້ຫຼາຍກວ່າ 2 ໃບແມ່ນໃຫ້ປະຕິບັດຕາມຫຼັກການດຽວກັນ ແລະ ໃນໃບສຸດທ້າຍຂອງຄົວເຮືອນນີ້ບໍ່ໃຫ້ທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐)ໃນຫ້ອງຖັດໄປ "**ຖ້າໃຊ້ໃບຕໍ່ໄປສຳລັບຄົວເຮືອນນີ້** ".

**<u>ຕົວຢ່າງ:</u>**

- **ກໍລະນີໃຊ້ 1 ໃບແບບສອບຖາມ.**

| ເລກທີໃບທີ່ໃຊ້ໃນຄົວເຮືອນນີ້ | ຖ້າໃຊ້ໃບຕໍ່ໄປສຳລັບຄົວເຮືອນນີ້ |
|---|---|
| 0 1 | ໃຫ້ໝາຍ ▬ ໃສ່ ☐ |

- **ກໍລະນີໃຊ້ໃບແບບສອບຖາມ 2 ໃບ.** ໃບທີ່ 1 ຕ້ອງໝາຍດັ່ງນີ້:

| ເລກທີໃບທີ່ໃຊ້ໃນຄົວເຮືອນນີ້ | ຖ້າໃຊ້ໃບຕໍ່ໄປສຳລັບຄົວເຮືອນນີ້ |
|---|---|
| 0 1 | ໃຫ້ໝາຍ ▬ ໃສ່ ▬ |

ໃບທີ 2 ຕ້ອງໝາຍດັ່ງນີ້:

| ເລກທີໃບທີ່ໃຊ້ໃນຄົວເຮືອນນີ້ | ຖ້າໃຊ້ໃບຕໍ່ໄປສຳລັບຄົວເຮືອນນີ້ |
|---|---|
| 0 2 | ໃຫ້ໝາຍ ▬ ໃສ່ ☐ |

***ໝາຍເຫດ:*** *ສຳລັບຂໍ້ມູນເອກກະລັກ ແມ່ນໃຫ້ຂຽນ ລະຫັດອັນດຽວກັນໃນທຸກໆໃບທີ່ໃຊ້ສຳລັບຄົວເຮືອນດັ່ງກ່າວ.*

**4.2. ພາກ ຂ : ສຳລັບໝົດທຸກຄົນ**

**ຄຳຖາມທີ Q2: ຊື່ ແລະ ນາມສະກຸນຂອງສະມາຊິກໃນຄົວເຮືອນ**

ຈຸດປະສົງຂອງຄຳຖາມນີ້ ແມ່ນເພື່ອເກັບກຳລາຍຊື່ ແລະ ຈຳນວນຄົນລວມທັງໝົດຂອງສະມາຊິກໃນຄົວເຮືອນທີ່ຢູ່ເປັນປະຈຳ ແລະ ບໍ່ມີໜ້າຊົ່ວຄາວໃນຄົວເຮືອນທີ່ຖືກສຳພາດ ໂດຍໃຫ້ສອດຄ່ອງກັບນິຍາມໃນ **ພາກ VI**.

ການຈົດກ່າຍແມ່ນບໍ່ໃຫ້ຟ້າວຟັ່ງ, ໃຫ້ຈົດບັນຊີສະມາຊິກຄົວເຮືອນໃນເຮືອນຫຼັງນັ້ນໃຫ້ຄົບຖ້ວນ ເພື່ອມາກຳນົດສະມາຊິກໃນຄົວເຮືອນ. ການຈົດກ່າຍນັກເດີນສຳຫຼວດຈະຕ້ອງລຽງລຳດັບຈາກຫົວໜ້າຄົວເຮືອນເປັນຄົນທຳອິດ ແລະ ຜູ້ຕໍ່ໆໄປຈົນຮອດຜູ້ສຸດທ້າຍ, ການຈົດກ່າຍຊື່ຫົວໜ້າຄົວເຮືອນ ແລະ ສະມາຊິກຄົວເຮືອນ ແມ່ນໃຫ້ຂຽນທັງຊື່ ແລະ ນາມສະກຸນ. ພາຍຫຼັງຈົດກ່າຍລາຍຊື່ສຳເລັດແລ້ວ ທ່ານຈະຕ້ອງກວດກາຄືນ ໂດຍການອ່ານຄືນລາຍຊື່ທີ່ທ່ານໄດ້ຈົດກ່າຍໃຫ້ຫົວໜ້າຄົວເຮືອນຟັງແລ້ວຖາມລາວວ່າຖືກຕ້ອງ, ຄົບຖ້ວນແລ້ວບໍ່. ນັກເດີນສຳຫຼວດຕ້ອງປະຕິບັດຕາມຫຼັກການກຳນົດຄົນຢູ່ເປັນປະຈຳທີ່ໄດ້ກຳນົດໄວ້ໃນນິຍາມຄົນຢູ່ເປັນປະຈຳ **(ເບິ່ງໜ້າທີ 4)**.

ຫົວໜ້າຄົວເຮືອນ ແມ່ນຜູ້ທີ່ຖືກຮັບຮູ້ຈາກສະມາຊິກຂອງຄົວເຮືອນ, ສ່ວນຫຼາຍເປັນຄົນທີ່ຮູ້ຈັກສະພາບຂອງສະມາຊິກໃນຄົວເຮືອນ, ອາດແມ່ນຜູ້ຮັບຜິດຊອບດ້ານການເງິນ ແລະ ສະຫວັດດີການຂອງບັນດາສະມາຊິກໃນຄົວເຮືອນ.

**ການຈົດກ່າຍສະມາຊິກໃນຄົວເຮືອນໃຫ້ຈັດລຽງລຳດັບລາຍຊື່ຕາມສາຍພົວພັນກັບຫົວໜ້າຄົວເຮືອນ ດັ່ງລຸ່ມນີ້:**

- ຫົວໜ້າຄົວເຮືອນ;
- ຜົວ ຫຼື ເມຍຂອງຫົວໜ້າຄົວເຮືອນ *(ໃນກໍລະນີມີຜົວ ຫຼື ເມຍຫຼາຍກວ່າ 1 ຄົນ ແມ່ນຈັດລຽງຕາມລຳດັບຜູ້ທຳອິດຫາຜູ້ສຸດທ້າຍ)*;
- ລູກຊາຍ ຫຼື ລູກສາວຂອງຫົວໜ້າຄົວເຮືອນ ໂດຍຈັດລຽງລຳດັບແຕ່ລູກທີ່ຍັງບໍ່ທັນແຕ່ງງານຜູ້ອາຍຸສູງລົງມາ, ລູກທີ່ແຕ່ງງານແລ້ວຕາມດ້ວຍເມຍ ຫຼື ຜົວຂອງເຂົາເຈົ້າ ແລະ ລູກຂອງພວກເຂົາເຈົ້າ ແລ້ວຈຶ່ງຈົດຊື່ລູກຂອງຫົວໜ້າຄົວເຮືອນຜູ້ຕໍ່ໄປ;
- ລູກໄພ້ ຫຼື ລູກເຂີຍຂອງຫົວໜ້າຄົວເຮືອນ;
- ຫຼານ ຂອງຫົວໜ້າຄົວເຮືອນ (ລູກຂອງລູກຊາຍ/ລູກສາວຫົວໜ້າຄົວເຮືອນ);
- ພໍ່/ແມ່ ຂອງຫົວຫນ້າຄົວເຮືອນ ຫຼື ພໍ່/ແມ່ ຂອງຜົວ/ເມຍ ຂອງຫົວໜ້າຄົວເຮືອນ;
- ຍາດພີ່ນ້ອງອື່ນໆ ຂອງຫົວຫນ້າຄົວເຮືອນ;
- ຄົນອື່ນທີ່ບໍ່ແມ່ນພີ່ນ້ອງ.

***ຂໍ້ຄວນເອົາໃຈໃສ່:***

- *ກ່ອນອື່ນໃຫ້ຖາມເບິ່ງສຳມະໂນຄົວຂອງຄົວເຮືອນຖືກສຳພາດວ່າມີຫຼືບໍ່, ຖ້າມີ ແມ່ນມີຈັກຫົວ ແລະ ຂໍເບິ່ງສຳມະໂນຄົວດັ່ງກ່າວ ເພື່ອເປັນບ່ອນອີງໃນການກວດເບິ່ງສະມາຊິກໃນຄົວເຮືອນ;*
- *ຈາກນັ້ນໃຫ້ຖາມແຕ່ລະບຸກຄົນ ຫຼື ກຸ່ມຄົນທີ່ຢູ່ໃນຫຼັງຄາເຮືອນດຽວກັນ ຫຼື ຢູ່ຫຼາຍຫຼັງຄາເຮືອນ ວ່າໄດ້ກິນຢູ່ຮ່ວມກັນຫຼືບໍ່ ເພື່ອໃຫ້ສາມາດກຳນົດຄົວເຮືອນ ໂດຍອີງຕາມນິຍາມຄົວເຮືອນ ແລະ ຄົນຢູ່ເປັນປະຈຳ;*
- *ໃຫ້ຂຽນສະມາຊິກທັງໝົດໃສ່ໃນປື້ມບັນທຶກທີ່ແຈກໃຫ້ ເພື່ອກວດຄວາມຖືກຕ້ອງ ແລ້ວຈຶ່ງຂຽນໃສ່ໃນແບບສອບຖາມ.*

**<u>ຕົວຢ່າງ:</u>** ຜູ້ທີ່ຖືກຈົດນັບເຂົ້າເປັນສະມາຊິກຄົວເຮືອນ ທີ່ຖືວ່າມີໜ້າຢູ່ເປັນປະຈຳ

ຄົວເຮືອນຂອງ ທ້າວ ພອນສັກ ມີທັງໝົດ 10 ຄົນ, ຢູ່ເມືອງຄຳເກີດ, ແຂວງບໍລິຄຳໄຊ. ນັກເດີນສຳຫຼວດໄປສຳພາດຄົວເຮືອນນີ້ ໃນວັນທີ 6 ເດືອນ 3 ປີ 2015, ຊຶ່ງປະກອບມີລາຍຊື່ດັ່ງນີ້:

1) ທ້າວ ພອນສັກ ຫົວໜ້າຄົວເຮືອນ ທີ່ມີຊື່ໃນປື້ມສຳມະໂນຄົວ ແຕ່ລາວໄປປະຈຳການ ແລະ ນອນຢູ່ຄ້າຍ ແລະ ທຸກໆ 6 ເດືອນ ລາວຈະມາຢາມຄອບຄົວເທື່ອໜຶ່ງ.
2) ນາງ ສອນ ເມຍຫົວໜ້າຄົວເຮືອນ.
3) ທ້າວ ແກ້ວ ເປັນລູກຂອງ ທ້າວ ພອນສັກ ແລະ ນາງ ສອນ, ລາວໄປເຮັດວຽກຢູ່ປະເທດໄທ ໂດຍບໍ່ເປັນທາງການ ແລະ ໄປໄດ້ 8 ເດືອນແລ້ວ, 2-3 ເດືອນມາຢາມເຮືອນເທື່ອໜຶ່ງ.
4) ທ້າວ ປັນ ເປັນລູກຂອງ ທ້າວ ພອນສັກ ແລະ ນາງ ສອນ, ລາວໄປຮຽນຢູ່ມະຫາວິທະຍາໄລແຫ່ງຊາດໄດ້ 2 ປີ ແລ້ວ, ລາວຍັງທຽວມາຢາມເຮືອນຕະຫຼອດ.
5) ນາງ ປຸກ ເປັນລູກຂອງ ທ້າວ ພອນສັກ ແລະ ນາງ ສອນ ແລະ ຮຽນຊັ້ນມັດທະຍົມປາຍຢູ່ເມືອງປາກຊັນ ທຽວມາຢາມທຸກໆ ວັນເສົາກັບວັນອາທິດ.
6) ທ້າວ ຈັນ ເປັນລູກຂອງ ທ້າວ ພອນສັກ ແລະ ນາງ ສອນ, ລາວໄດ້ເສຍຊີວິດ ໃນວັນທີ່ 27 ເດືອນ 2 ປີ 2015.
7) ນາງ ຄຳ ເປັນລູກຂອງ ທ້າວ ພອນສັກ ແລະ ນາງ ສອນ, ເປັນເດັກເກີດໃໝ່, ເກີດໃນວັນທີ 2 ເດືອນ 3 ປີ 2015.
8) ທ້າວ ແສງ ເປັນຫຼານມາຢູ່ນຳໄດ້ 2 ເດືອນ ແລ້ວ ແລະ ມີຈຸດປະສົງມາຢູ່ເລີຍ.
9) ທ້າວ ເລ້ ເປັນຫຼານ ມາຢາມ ແລະ ມາຢູ່ໄດ້ 2 ເດືອນແລ້ວ ແຕ່ອີກ 2 ເດືອນແມ່ນຊິກັບໄປບ້ານຂອງລາວ.
10) ທ້າວ ສີ ເປັນພໍ່ຂອງຫົວໜ້າຄົວເຮືອນ ແລະ ຕາຍໃນວັນທີ 2 ເດືອນ 3 ປີ 2015.
11) ທ້າວ ນ້ອຍ ບໍ່ແມ່ນພີ່ນ້ອງ ແຕ່ ເປັນໝູ່ຂອງ ທ້າວ ພອນສັກ ມາຢູ່ນຳ ໄດ້ 7 ເດືອນແລ້ວ ເພາະວ່າລາວມາເຮັດວຽກຢູ່ເມືອງນີ້ ແລະ ຍັງຊິຢູ່ຕໍ່ໄປ ຍັງບໍ່ມີກຳນົດຊິຍ້າຍເທື່ອ, ລາວເປັນຄົນເມືອງປາກຊັນ ແລະ ລາວກໍ່ຍັງທຽວໄປຢາມບ້ານຢູ່.

**ອີງໃສ່ຂໍ້ມູນດັ່ງກ່າວ ເຮົາສາມາດຈຳແນກບັນດາບຸກຄົນທີ່ຖືກຈັດນັບ ແລະ ບໍ່ຖືກຈັນັບເປັນສະມາ ຊິກໃນ ຄົວເຮືອນໄດ້ດັ່ງນີ້:**

| ລ/ດ | ລາຍຊື່ທັງໝົດ | ຖືກຈັດນັບເປັນສະມາຊິກໃນຄົວເຮືອນ | ບໍ່ຖືກຈັດນັບເປັນສະມາຊິກໃນຄົວເຮືອນ |
|---|---|---|---|
| 1 | ທ້າວ ພອນສັກ | | ✔ |
| 2 | ນາງ ສອນ | ✔ | |
| 3 | ທ້າວ ແກ້ວ | ✔ | |
| 4 | ທ້າວ ປັນ | | ✔ |
| 5 | ນາງ ປຸກ | | ✔ |
| 6 | ທ້າວ ຈັນ | | ✔ |
| 7 | ນາງ ຄຳ | | ✔ |
| 8 | ທ້າວ ແສງ | ✔ | |
| 9 | ທ້າວ ເລ້ | | ✔ |
| 10 | ທ້າວ ສີ | ✔ | |
| 11 | ທ້າວ ນ້ອຍ | ✔ | |

**ສະນັ້ນຖ້າອີງຕາມນິຍາມ ຂອງການຢູ່ເປັນປະຈຳ 6 ເດືອນຂຶ້ນໄປ ຜູ້ທີ່ເປັນສະມາຊິກໃນຄົວເຮືອນ ປະກອບ ມີບຸກຄົນດັ່ງນີ້ ຕາມລຳດັບ:**

1) ນາງ ສອນ ເປັນເມຍ
2) ທ້າວ ແກ້ວ ເປັນລູກ
3) ທ້າວ ແສງ ພີ່ນ້ອງ
4) ທ້າວ ສີ ເປັນພໍ່ຂອງຫົວໜ້າຄົວເຮືອນ
5) ທ້າວ ນ້ອຍ ບໍ່ແມ່ນພີ່ນ້ອງ

### 4.3. ສຳລັບຄົວເຮືອນລວມໝູ່

ການກຳນົດສະມາຊິກໃນຄົວເຮືອນລວມໝູ່ ແມ່ນໃຫ້ປະຕິບັດຕາມຫຼັກການຂອງການຈັດກ່າຍຄືກັບຄົວເຮືອນສ່ວນບຸກຄົນ ແລະ ການຈັດກ່າຍຄົວເຮືອນລວມໝູ່ ***ແມ່ນບໍ່ໃຫ້ຖາມຄຳຖາມທີ Q3 "ສາຍພົວພັນກັບຫົວໜ້າຄົວເຮືອນ" ແລະ ພາກ ດ "ຄຸນລັກສະນະຂອງຄົວເຮືອນ".***

***ສິ່ງທີ່ຄວນເອົາໃຈໃສ່:***

*1) ເລກທີຄົວເຮືອນລວມໝູ່ໃນເຂດສຳຫຼວດໜຶ່ງ ແມ່ນໃຫ້ເລີ່ມຈາກລະຫັດ **8001, 8002, 8003...** ຈົນຮອດຄົວເຮືອນສຸດທ້າຍ;*

*2) ການສຳພາດຄົວເຮືອນລວມໝູ່ແມ່ນໃຫ້ປະຕິບັດ ແລະ ນຳໃຊ້ແບບສອບຖາມຄືກັບຄົວເຮືອນສ່ວນບຸກຄົນ;*

*3) ໃຫ້ລະມັດລະວັງອາດຈະມີຄົວເຮືອນສ່ວນບຸກຄົນທີ່ອາໄສຢູ່ໃນຫຼັງຄາເຮືອນ ຫຼື ອາຄານດຽວກັບຄົວເຮືອນລວມໝູ່ໃນກໍລະນີນີ້ ແມ່ນໃຫ້ແຍກຄົວເຮືອນດັ່ງກ່າວເປັນຄົວເຮືອນສ່ວນບຸກຄົນ;*

***ຕົວຢ່າງ:*** *ໃນຫໍພັກພະນັກງານຫົວໜ້າຫໍພັກມີລູກເມຍ ຫຼື ຍາດພີ່ນ້ອງມາອາໄສຢູ່ນຳ ທີ່ຢູ່ໃນຫຼັງຄາເຮືອນ ຫຼື ອາຄານດຽວກັນໃນຫໍພັກ ແລະ ມີການກິນຢູ່ແຍກຕ່າງຫາກ ໃນກໍລະນີນີ້ໃຫ້ຖືວ່າເປັນຄົວເຮືອນສ່ວນບຸກຄົນ.*

*4) ການສຳພາດຄົວເຮືອນລວມໝູ່ກ່ອນອື່ນໝົດ ແມ່ນໃຫ້ໄປພົບກັບຫົວໜ້າຫໍ ຫຼື ຫົວໜ້າຄົວເຮືອນລວມໝູ່ດັ່ງກ່າວ ເພື່ອຂຶ້ນບັນຊີລາຍຊື່ສະມາຊິກທັງໝົດທີ່ອາໄສໃນຄົວເຮືອນດັ່ງກ່າວ ຫຼັງຈາກນັ້ນໃຫ້ສຳພາດໂດຍເລີ່ມຈາກຫົວໜ້າຫໍ ແລະ ສະມາຊິກບຸກຄົນອື່ນໆຈົນໝົດ.*

**ຄຳຖາມ Q3: ສາຍພົວພັນກັບຫົວໜ້າຄົວເຮືອນ**

ສາຍພົວພັນກັບຫົວໜ້າຄົວເຮືອນໝາຍເຖິງສາຍພົວພັນຂອງສະມາຊິກທັງໝົດໃນຄົວເຮືອນຕໍ່ກັບຫົວໜ້າຄົວເຮືອນ, ສາຍພົວພັນດັ່ງກ່າວປະກອບມີດັ່ງນີ້:

1) **ຫົວໜ້າຄົວເຮືອນ**
   ແມ່ນຜູ້ທີ່ມີບົດບາດ ແລະ ໄດ້ຮັບຄວາມເຄົາລົບນັບຖືຈາກບັນດາສະມາຊິກຂອງຄົວເຮືອນ, ທັງເປັນຜູ້ເບິ່ງແຍງສະຫວັດດີການ ແລະ ສາມາດເກັບກຳສະພາບເສດຖະກິດ-ສັງຄົມຂອງສະມາຊິກຄົວເຮືອນ ເຊິ່ງຫົວໜ້າຄົວເຮືອນອາດແມ່ນເພດຊາຍ ຫຼື ເພດຍິງກໍ່ໄດ້. ໂດຍປົກກະຕິຫົວໜ້າຄົວເຮືອນຈະເປັນຜູ້ຕອບຄຳຖາມຕົ້ນຕໍໃນການສຳຫຼວດ, ກໍລະນີຫົວໜ້າຄົວເຮືອນບໍ່ຢູ່ ຫຼື ບໍ່ສະດວກໃນການໃຫ້ສຳພາດ ແມ່ນສະມາຊິກຄົວເຮືອນຜູ້ທີ່ສາມາດສະໜອງຂໍ້ມູນຂ່າວສານກ່ຽວກັບສະມາຊິກ ແລະ ສະພາບຂອງຄົວເຮືອນເປັນຜູ້ຕອບແທນ ເຊິ່ງອາດແມ່ນ: ເມຍ, ລູກຊາຍ-ລູກສາວ ແລະ ອື່ນໆ.
2) **ຜົວ/ເມຍ:** ໝາຍເຖິງຜົວ/ເມຍຂອງຫົວໜ້າຄົວເຮືອນ.
3) **ລູກຊາຍ/ລູກສາວ:** ໝາຍເຖິງລູກຄີງຂອງຫົວໜ້າຄົວ.
4) **ລູກໄພ້/ລູກເຂີຍ:** ໝາຍເຖິງຜົວ/ເມຍຂອງລູກຄີງຂອງຫົວໜ້າຄົວເຮືອນ.
5) **ພໍ່/ແມ່ ຂອງຫົວໜ້າຄົວເຮືອນ, ພໍ່/ແມ່ ຂອງຜົວ/ເມຍ:** ໝາຍເຖິງພໍ່/ແມ່ຄີງຂອງຫົວໜ້າຄົວເຮືອນ ແລະ ພໍ່/ແມ່ ຂອງຜົວ/ເມຍຂອງຫົວໜ້າຄົວເຮືອນ.
6) **ຫຼານ:** ໝາຍເຖິງຫຼານຄີງ (ລູກຂອງລູກຊາຍ/ລູກສາວຄີງຂອງຫົວໜ້າຄົວເຮືອນ) ຂອງຫົວໜ້າຄົວເຮືອນ.
7) **ພີ່ນ້ອງ:** ໝາຍເຖິງຍາດພີ່ນ້ອງ, ລູກຕິດຂອງຜົວ/ເມຍຂອງຫົວໜ້າຄົວເຮືອນ, ລູກລ້ຽງ, ຜົວ/ເມຍຂອງລູກລ້ຽງ/ລູກຕິດຂອງຫົວໜ້າຄົວເຮືອນ.
8) **ບໍ່ແມ່ນພີ່ນ້ອງ:** ໝາຍເຖິງບຸກຄົນທີ່ບໍ່ແມ່ນຍາດພີ່ນ້ອງທີ່ມາອາໄສຢູ່ໃນຄົວເຮືອນດັ່ງກ່າວ ເຊັ່ນ: ຄົນຮັບໃຊ້, ກຳມະກອນ.

ນັກເດີນສຳຫຼວດຈະຕ້ອງຈົດກ່າຍລະຫັດຄຳຕອບໃສ່ຫ້ອງສີ່ຫຼ່ຽມ (☐) ທີ່ໄດ້ກຳນົດໄວ້ໃນໃບແບບສອບຖາມ ໂດຍໃຫ້ຖືກຕ້ອງຕາມຄຳຕອບຂອງຫົວໜ້າຄົວເຮືອນ ຫຼື ຜູ້ຖືກສຳພາດ.

**ຄຳຖາມ Q4: ເພດ**

ຈຸດປະສົງຂອງຄຳຖາມ ເພື່ອເກັບກຳຂໍ້ມູນກ່ຽວກັບເພດຂອງຫົວໜ້າຄົວເຮືອນ ແລະ ສະມາຊິກໃນຄົວເຮືອນໝົດທຸກຄົນວ່າແມ່ນເພດຊາຍ ຫຼື ເພດຍິງ.

ນັກເດີນສຳຫຼວດຈະຕ້ອງຈົດກ່າຍຄຳຕອບໂດຍການທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ທີ່ໄດ້ກຳນົດໄວ້ໃນໃບແບບສອບຖາມ ໂດຍອີງຕາມລະຫັດຄຳຕອບຄື: 1 ແມ່ນເພດຊາຍ; 2 ແມ່ນເພດຍິງ.

**ຄໍາຖາມ Q5: ອາຍຸ**

ຈຸດປະສົງຂອງຄໍາຖາມ ແມ່ນເພື່ອເກັບກໍາອາຍຸຂອງສະມາຊິກທັງໝົດໃນຄົວເຮືອນ, ສະມາຊິກທຸກຄົນຕ້ອງມີຄໍາຕອບກ່ຽວກັບອາຍຸ. ການກໍານົດອາຍຸເຕັມຂອງສະມາຊິກໃນຄົວເຮືອນ ແມ່ນໃຫ້ຢຶດຖືເອົາຫຼັກ 0:00 ໂມງຂອງວັນທີ 1 ມີ ນາ ປີ 2015.

ການຈົດກ່າຍຄໍາຕອບ ແມ່ນໃຫ້ຈົດກ່າຍອາຍຸເຕັມຂອງຜູ້ຖືກສໍາພາດ ແລະ ສະມາຊິກຄົວເຮືອນໝົດທຸກຄົນ ເຊິ່ງນັກເດີນສໍາຫຼວດຈະຕ້ອງຈົດນັບອາຍຸເຕັມດັ່ງນີ້:

- ຖ້າເດັກນ້ອຍອາຍຸຕໍ່າກວ່າໜຶ່ງປີແມ່ນໃຫ້ຂຽນ “00”.
- ສໍາລັບຜູ້ທີ່ມີອາຍຸຫຼາຍກວ່າ 1 ປີ ຂຶ້ນໄປແມ່ນໃຫ້ຈົດນັບອາຍຸເຕັມຂອງເຂົາເຈົ້າໃສ່. ອາຍຸເຕັມໝາຍເຖິງອາຍຸໃນເວລາຄົບຮອບວັນເກີດຄັ້ງສຸດທ້າຍ.

***ໝາຍເຫດ:***

- *ກໍລະນີອາຍຸ 99 ປີ ຂຶ້ນໄປແມ່ນໃຫ້ຂຽນຄໍາຕອບເປັນ 99 ໃສ່ຄໍາຖາມນີ້ ແລະ ຕ້ອງຂຽນອາຍຸເຕັມພ້ອມທັງຊື່ຂອງບຸກຄົນດັ່ງກ່າວ ໃສ່ຫ້ອງໝາຍເຫດທີ່ກໍານົດໄວ້ໃນໜ້າທີ່ສອງຂອງໃບແບບສອບຖາມ ທີ່ໃຊ້ສໍາຫຼວດຄົວເຮືອນດັ່ງກ່າວ.*
- *ກໍລະນີສະມາຊິກຄົວເຮືອນຕອບປີເກີດເປັນປີລາວ (ປີພຸດທະສັກກະລາດ “ພສ”) ແມ່ນໃຫ້ສົມທຽບໃສ່ໃນຕາຕະລາງສົມທຽບປີລະຫວ່າງປະພຸດທະສັກກະລາດ ກັບປີສາກົນ (ປີຄຣິດຕະສັກກະລາດ “ຄສ”) **(ເອກະສານຊ້ອນທ້າຍ 5).***




**<u>ຕົວຢ່າງ:</u>**

1) ທ້າວ ກ ເກີດເມື່ອວັນທີ່ 2 ມີນາ 1964 ແລະ ລາວຖືກສໍາພາດໃນວັນທີ 7 ມີນາ 2015 ສະແດງວ່າລາວມີອາຍຸ 51 ປີ 11 ເດືອນ 29ມື້, ອາຍຸເຕັມຂອງລາວແມ່ນ 51 ປີ ແລະ ໃຫ້ຂຽນເປັນ 51 ໃສ່ໃນສອງຫ້ອງສີ່ຫຼ່ຽມ (☐☐).
2) ທ້າວ ຂ ມີອາຍຸ 103 ປີ, ທ່ານຈະຕ້ອງຈົດກ່າຍເປັນ 99 ໃສ່ໃນສອງຫ້ອງສີ່ຫຼ່ຽມ (☐☐) ດັ່ງຮູບຕົວຢ່າງ.




- ໃນກໍລະນີມີສະມາຊິກຄົນໃດໜຶ່ງບໍ່ຈື່ອາຍຸ ແມ່ນໃຫ້ນັກເດີນສໍາຫຼວດພະຍາຍາມເຈາະຈີ້ມຄໍາຖາມເພື່ອຊອກຫາຂໍ້ມູນ ເພື່ອໃຫ້ໄດ້ຄໍາຕອບທີ່ໃກ້ຄຽງທີ່ສຸດເຊັ່ນ: ທຽບໃສ່ອາຍຸພໍ່, ແມ່, ອ້າຍ, ເອື້ອຍ, ນ້ອງ ຫຼື ໝູ່ຄູ່ຮຸ່ນລາວຄາວດຽວກັນ, ເຫດການສໍາຄັນທີ່ລາວເກີດ ແລະ ບັນດາເອກະສານທີ່ຢັ້ງຢືນທີ່ກ່ຽວຂ້ອງ ເຊັ່ນ: ບັດປະຈໍາຕົວ, ສໍາມະໂນຄົວ, ບັດສັກຢາ, ບັດແຈ້ງເກີດ ແລະ ອື່ນໆ.

- ໃນກໍລະນີຜູ້ຖືກສໍາພາດຈື່ປີເກີດເປັນປີລາວ ຫຼື ພຸດທະສາສະໜາ ແມ່ນໃຫ້ໃຊ້ຕາຕະລາງສົມທຽບອາຍຸ ທີ່ມີຢູ່ໃນປຶ້ມຄູ່ມືນີ້ ເພື່ອກໍານົດຄໍາຕອບກ່ຽວກັບປີເກີດເປັນປີລາວ ຫຼື ປີພຸດທະສາສະໜາ ເຊິ່ງຄິດໄລ່ເປັນປີສາກົນ ແລະ ຄິດໄລ່ອາຍຸເຕັມໃສ່.

***ໝາຍເຫດ:*** *ໃຫ້ຂຽນປະຫວັດການສືບຫາອາຍຸໃສ່ໃນປຶ້ມບັນທຶກ ເພື່ອເປັນບ່ອນອີງໃຫ້ແກ່ນັກກວດກາ.*

**ຄໍາຖາມທີ Q6: ສະພາບສົມລົດ**

ໝາຍເຖິງສະຖານະພາບຂອງສະມາຊິກໃນຄົວເຮືອນທີ່ມີການແຕ່ງດອງ, ບໍ່ເຄີຍແຕ່ງດອງ, ຢ່າຮ້າງ ຫຼື ແຍກກັນຢູ່, ຢູ່ຮ່ວມກັນ ແລະ ເປັນໝ້າຍ. ການກໍານົດສະຖານະສະພາບສົມລົດແມ່ນອີງໃສ່ດັ່ງລຸ່ມນີ້:

1) **"ບໍ່ເຄີຍແຕ່ງດອງ"**
ໝາຍເຖິງຜູ້ທີ່ບໍ່ເຄີຍແຕ່ງດອງ ຫຼື ສົມລົດຈັກເທື່ອໃນຊີວິດ;

2) **"ແຕ່ງດອງ"**
ໝາຍເຖິງຜູ້ທີ່ແຕ່ງດອງແລ້ວ ແລະ ກໍາລັງຢູ່ກິນຮ່ວມກັບຜົວ/ເມຍໃນປະຈຸບັນ. ໃນກໍລະນີບຸກຄົນຜູ້ໜຶ່ງເຄີຍຢ່າຮ້າງ ແຕ່ໄດ້ແຕ່ງດອງໃໝ່ແລ້ວໃນປະຈຸບັນກໍ່ໃຫ້ຈົດກ່າຍວ່າ "ແຕ່ງດອງ";

3) **"ຢ່າຮ້າງ/ແຍກກັນຢູ່"**

ຢ່າຮ້າງໝາຍເຖິງບຸກຄົນທີ່ໄດ້ຢ່າຮ້າງກັບຜົວ/ເມຍແລ້ວ ດ້ວຍຄວາມສະໝັກໃຈຢ່າງຖືກລະບຽບກົດໝາຍ ແລະ ບໍ່ມີສາຍກ່ຽວພັນທາງຜົວ/ເມຍຕໍ່ກັນອີກ. ແຍກກັນຢູ່ໝາຍເຖິງຄູ່ຜົວ/ເມຍທີ່ໄດ້ຜ່ານການແຕ່ງດອງ ຫຼື ຢູ່ຮ່ວມກັນໂດຍບໍ່ໄດ້ແຕ່ງດອງ ທີ່ບໍ່ສາມາດຢູ່ຮ່ວມກັນແບບຜົວ/ເມຍໄດ້ອີກຕໍ່ໄປ ແລະ ໄດ້ແຍກກັນຢູ່ແຕ່ບໍ່ທັນມີໃບຢ່າຮ້າງ.

4) **"ໝ້າຍ"**

ໝາຍເຖິງບຸກຄົນທີ່ຜົວ/ເມຍໄດ້ເສຍຊີວິດ ແລະ ໃນປະຈຸບັນຜູ້ກ່ຽວຍັງບໍ່ໄດ້ເອົາຜົວ/ເມຍເທື່ອ;

5) **"ຢູ່ຮ່ວມກັນ"**
ໝາຍເຖິງຄູ່ຊາຍ-ຍິງທີ່ຢູ່ກິນຮ່ວມກັນໂດຍທີ່ບໍ່ໄດ້ຜ່ານພິທີການແຕ່ງດອງທີ່ຖືກຕ້ອງຕາມຮີດຄອງປະເພນີ ແລະ ລະບຽບກົດໝາຍ.

ນັກເດີນສໍາຫຼວດຈະຕ້ອງຈົດກ່າຍຄໍາຕອບຕາມທີ່ຜູ້ຖືກສໍາພາດຕອບມາ ແລະ ບໍ່ໃຫ້ຖາມສໍ້ເຖິງເອກະສານຢັ້ງຢືນທາງດ້ານກົດໝາຍກ່ຽວກັບສະພາບສົມລົດ. ໃນກໍລະນີຜູ້ຖືກສໍາພາດຕອບວ່າ "ໂສດ" ທ່ານຈະຕ້ອງຖາມຕໍ່ໄປວ່າໂສດບໍ່ເຄີຍແຕ່ງດອງ ຫຼື ໂສດເພາະຢ່າຮ້າງກັບຜົວ/ເມຍ. ທ່ານຈະຕ້ອງທາສີດໍາ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ຕາມລະຫັດຄໍາຕອບທີ່ກໍານົດໄວ້ໃນໃບແບບສອບຖາມ.

**ຄໍາຖາມທີ Q7: ສັນຊາດ**

ຈຸດປະສົງຂອງຄໍາຖາມ ແມ່ນເພື່ອໃຫ້ໄດ້ຂໍ້ມູນກ່ຽວກັບສັນຊາດຂອງພົນລະເມືອງໃນຂອບເຂດທົ່ວປະເທດ.

**ສັນຊາດລາວ**

ໝາຍເຖິງສາຍກ່ຽວພັນສະໜິດແໜ້ນທາງດ້ານການເມືອງ ແລະ ກົດໝາຍລະຫວ່າງບຸກຄົນກັບລັດ ສປປ ລາວ ຊຶ່ງສະແດງອອກເຖິງສິດ ແລະ ພັນທະຂອງພົນລະເມືອງລາວຕໍ່ລັດ ສປປ ລາວ, ສິດ ແລະ ຄວາມຮັບຜິດຊອບຂອງລັດ ສປປ ລາວ ຕໍ່ພົນລະເມືອງລາວ (ກົດໝາຍວ່າດ້ວຍສັນຊາດລາວ ສະບັບເລກທີ 05/ສພຊ, ລົງວັນທີ 17 ພຶດສະພາ 2004, ມາດຕາ 2 ສັນຊາດລາວ).

ການຈົດກ່າຍສັນຊາດຂອງບຸກຄົນໃດໜຶ່ງ ແມ່ນໃຫ້ຈົດກ່າຍຕາມການບອກຂອງຜູ້ຖືກສຳພາດວ່າລາວເປັນຄົນສັນຊາດໃດແທ້. ລະຫັດສັນຊາດແມ່ນຢູ່ດ້ານຫຼັງຂອງໃບແບບສອບຖາມ. ກໍລະນີແມ່ນສັນຊາດລາວໃຫ້ທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ຂອງລະຫັດ 1, ກໍລະນີບໍ່ແມ່ນສັນຊາດລາວທ່ານຕ້ອງຈົດກ່າຍລະຫັດປະເທດນັ້ນໃສ່ຊ່ອງຫວ່າງສຳລັບຂຽນຄຳຕອບ ໂດຍທົ່ວໄປການຈົດກ່າຍລະຫັດປະເທດແມ່ນໃຫ້ມີ 2 ຕົວເລກ, ສຳລັບປະເທດທີ່ມີລະຫັດດຽວແມ່ນໃຫ້ຂຽນ 0 ຕື່ມໃສ່ທາງໜ້າ, ຕົວຢ່າງ: ປະເທດອາເມຣິກາ ແມ່ນໃຫ້ຂຽນ 01, ໂດຍອີງຕາມລະຫັດປະເທດທີ່ໄດ້ກຳນົດໄວ້ໃນດ້ານຫຼັງໃບແບບສອບຖາມ. ສຳລັບຜູ້ທີ່ບໍ່ແມ່ນສັນຊາດລາວ ແມ່ນໃຫ້ຂ້າມໄປຖາມຄຳຖາມທີ່ 9.

***<u>ກໍລະນີພິເສດ</u>:*** *ສຳລັບບຸກຄົນທີ່ບໍ່ຮູ້ວ່າຕົນເອງແມ່ນສັນຊາດຫຍັງ ແມ່ນໃຫ້ໃສ່ລະຫັດ 99.*

**ຄຳຖາມທີ Q8: ຊົນເຜົ່າ**

ຈຸດປະສົງຂອງຄຳຖາມ ເພື່ອໃຫ້ຮູ້ຊົນເຜົ່າຂອງສະມາຊິກໃນຄົວເຮືອນ ອີງໃສ່ບັນຊີລະຫັດຊົນເຜົ່າທີ່ຢູ່ດ້ານຫຼັງຂອງໃບແບບສອບຖາມ.

**ຊົນເຜົ່າ** ແມ່ນກຸ່ມຄົນທີ່ມີພາສາປາກເວົ້າລວມກັນ, ມີກົກເຄົ້າປະຫວັດສາດຄວາມເປັນມາຮ່ວມກັນ, ມີພື້ນຖານວັດທະນະທຳລວມກັນ ແລະ ສືບເຊື້ອສາຍມາຈາກບັນພະບູລຸດດຽວກັນ[2].

ການຈົດກ່າຍຄຳຕອບ ແມ່ນໃຫ້ນັກເດີນສຳຫຼວດຈົດກ່າຍລະຫັດຊົນເຜົ່າທີ່ມີ 2 ຕົວເລກ ຕາມບັນຊີລະຫັດຊົນເຜົ່າທີ່ກຳນົດໄວ້ໃນດ້ານຫຼັງຂອງໃບແບບສອບຖາມ ຫຼື **ເອກະສານຊ້ອນທ້າຍ 2** ໂດຍອີງຕາມຄຳຕອບຂອງຜູ້ຖືກສຳພາດ

- ຖ້າກໍລະນີຄຳຕອບບໍ່ມີໃນບັນຊີລະຫັດຊົນເຜົ່າ ທ່ານຈະຕ້ອງຈົດກ່າຍລະຫັດ **"50"** ໃສ່ສອງຫ້ອງສີ່ຫຼ່ຽມ (☐☐) ສຳລັບຂຽນຄຳຕອບ .
- ຖ້າກໍລະນີບໍ່ບອກແມ່ນໃຫ້ຈົດກ່າຍລະຫັດ **"51"** ໃສ່ສອງຫ້ອງສີ່ຫຼ່ຽມ (☐☐) ສຳລັບຂຽນຄຳຕອບນັ້ນ (ລວມທັງຄົນລາວ, ຄົນຕ່າງດ້າວ ແລະ ຕ່າງປະເທດ).
- ສຳລັບຄົນຕ່າງປະເທດທີ່ອາໄສຢູ່ ສປປ ລາວ ແລະ ຕັດສັນຊາດລາວແລ້ວ ແຕ່ບໍ່ຮູ້ວ່າຊົນເຜົ່າໃດ ແມ່ນໃຫ້ໃສ່ລະຫັດ "99" ໃສ່ສອງຫ້ອງສີ່ຫຼ່ຽມ (☐☐) ສຳລັບຂຽນຄຳຕອບ.

**ຄຳຖາມທີ Q9: ສາສະໜາ**

ຈຸດປະສົງຂອງຄຳຖາມ ແມ່ນເພື່ອເກັບກຳຂໍ້ມູນດ້ານສາສະໜາ ເພື່ອໃຫ້ຮູ້ອັດຕາສ່ວນການເຊື່ອຖືສາສະໜາຂອງພົນລະເມືອງລາວ, ສາສະໜາປະກອບມີດັ່ງນີ້:

- **"ສາສະໜາພຸດ"** ໝາຍເຖິງສາສະໜາພຸດທຸກນິກາຍ;

[2] ປຶ້ມບັນດາຊົນເຜົ່າໃນ ສປປ ລາວ, ສູນກາງແນວລາວສ້າງຊາດ, ພິມປີ 2008, ໜ້າ ຍ.

- **"ສາສະໜາເຢຊູ/ຄຼິດ"** ໝາຍເຖິງສາສະໜາເຢຊູ/ຄຼິດ (ຄຣິດສະຕຽນ) ບໍ່ວ່າຈະແມ່ນຄຣິດຕາລິກ ຫຼື ໂປຣແຕສຕັງ;
- **"ສາສະໜາບາຮາຍ"** ໝາຍເຖິງສາສະໜາບາຮາຍທຸກນິກາຍ;
- **"ສາສະໜາອິດສະລາມ"** ໝາຍເຖິງສາສະໜາອິດສະລາມທຸກນິກາຍ;
- **"ອື່ນໆ"** ໝາຍເຖິງສາສະໜາອື່ນໆທີ່ບໍ່ນອນຢູ່ໃນສາສະໜາທີ່ກ່າວມາຂ້າງເທິງ;
- **"ບໍ່ຖືສາສະໜາ/ເຊື່ອຖືຜີ/ບັນພະບູລຸດ"** ໝາຍເຖິງບຸກຄົນທີ່ບໍ່ເຊື່ອຖືສາສະໜາໃດເລີຍ ຫຼື ການເຊື່ອຖືຜີ ແລະ ການເຊື່ອຖືຮີດຄອງຕ່າງໆ ຫຼື ການເຊື່ອຖື-ບູຊາບັນພະບູລຸດຂອງຕະກຸນ.

ນັກເດີນສຳຫຼວດຈະຕ້ອງຈົດກ່າຍຄຳຕອບຕາມທີ່ຜູ້ຖືກສຳພາດຕອບມາ ແລະ ໃຫ້ທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ຂອງລະຫັດສາສະໜາຕາມທີ່ກຳນົດໄວ້ໃນໃບແບບສອບຖາມ.

**ຄຳຖາມທີ່ Q10: ສະຖານທີ່ເກີດ**

ຄຳຖາມນີ້ ແມ່ນເພື່ອໃຫ້ໄດ້ຂໍ້ມູນຂ່າວສານກ່ຽວກັບການຍົກຍ້າຍຂອງພົນລະເມືອງຕັ້ງແຕ່ເກີດຈົນເຖິງປະຈຸບັນ.

**ສະຖານທີ່ເກີດ** ໝາຍເຖິງສະຖານທີ່ເກີດຂອງຫົວໜ້າຄົວເຮືອນ ແລະ ສະມາຊິກຄົວເຮືອນທຸກຄົນ, ຊຶ່ງກຳນົດເອົາເມືອງ, ແຂວງ ແລະ ປະເທດທີ່ບຸກຄົນດັ່ງກ່າວເກີດ.

- ໃນການຈົດກ່າຍຄຳຕອບ ຖ້າວ່າບຸກຄົນເກີດຢູ່ບ່ອນດຽວກັນກັບບ່ອນທີ່ລາວກຳລັງອາໄສຢູ່ໃນປະຈຸບັນ ແມ່ນໃຫ້ທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ໃຫ້ຖືກຕ້ອງຕາມລະຫັດຄຳຕອບລະຫັດ **1.**
- ໃນກໍລະນີ ເກີດຢູ່ຕ່າງເມືອງກັບເມືອງທີ່ຢູ່ປະຈຸບັນ ແມ່ນໃຫ້ຂຽນລະຫັດແຂວງ ແລະ ເມືອງທີ່ຜູ້ ກ່ຽວເກີດໃສ່ຫ້ອງລະຫັດທີ **2** ໃຫ້ຖືກຕ້ອງ.
- ກໍລະນີທີ່ເກີດຢູ່ຕ່າງປະເທດແມ່ນໃຫ້ຂຽນລະຫັດປະເທດໃສ່ຫ້ອງລະຫັດທີ **3** ໃຫ້ຖືກຕ້ອງ.

**ຄຳຖາມທີ Q11, Q12, Q13, Q14, Q15, Q16: ທ່ານມີຄວາມຫຍຸ້ງຍາກດັ່ງຕໍ່ໄປນີ້ບໍ່?**

ຈຸດປະສົງຂອງຄຳຖາມ ແມ່ນເພື່ອຕ້ອງການຮູ້ຄວາມຫຍຸ້ງຍາກໃນການເບິ່ງເຫັນ, ການໄດ້ຍິນ, ການຍ່າງ ຫຼື ການເຄື່ອນຍ້າຍ, ການຈື່ຈຳ ຫຼື ສະມາທິ, ການດູແລຕົນເອງ, ການປາກເວົ້າ ຫຼື ການສື່ສານ ໃນການດຳລົງຊີວິດປະຈຳວັນຂອງ ສະມາຊິກໃນຄົວເຮືອນ (ຍົກເວັ້ນ ໃນກໍລະນີເປັນບາດແຜ ຫຼື ເຈັບເປັນທີ່ບໍ່ສາ ມາດເຄື່ອນໄຫວໄດ້ໃນໄລຍະຊົ່ວຄາວ).

**ການເກັບກຳຂໍ້ມູນແມ່ນໄດ້ແບ່ງອອກຕາມປະເພດຄວາມຫຍຸ້ງຍາກດັ່ງນີ້:**

**Q11: ຄວາມຫຍຸ້ງຍາກໃນການເບິ່ງເຫັນ:**

ໝາຍເຖິງຄົນທີ່ມີຄວາມຜິດປົກກະຕິ ຫຼື ມີຄວາມຫຍຸ້ງຍາກໃນການເບິ່ງເຫັນ, ເຖິງແມ່ນວ່າຈະໃສ່ແວ່ນຕາຂະຫຍາຍກໍ່ຍັງບໍ່ສາມາດເບິ່ງເຫັນໄດ້ຊັດເຈນເຊັ່ນ: ຄົນຕາບອດຂ້າງດຽວ ຫຼື ສອງຂ້າງ, ຄົນສາຍຕາຟາງ (ຄົນທີ່ມີສາຍຕາບໍ່ປົກກະຕິ) ບຸກຄົນເຫຼົ່ານີ້ຈະຕ້ອງໄດ້ໃຊ້ອຸປະກອນພິເສດ ເຊັ່ນ: ໃສ່ແວ່ນຕາຂະ ຫຍາຍເປັນປະຈຳ (ບໍ່ນັບເອົາຄົນທີ່ໃສ່ແວ່ນຕາຊົ່ວຄາວເພື່ອອ່ານໜັງສື).

**Q12: ຄວາມຫຍຸ້ງຍາກໃນການໄດ້ຍິນ :**

ໝາຍເຖິງຄົນທີ່ມີຄວາມຜິດປົກກະຕິ ຫຼື ມີຄວາມຫຍຸ້ງຍາກໃນການໄດ້ ຍິນສຽງ ເຊິ່ງເນື່ອງມາຈາກຫູຕຶງ ຫຼື ຫູໜວກບຸກຄົນເຫຼົ່ານີ້ຕ້ອງໄດ້ໃຊ້ອຸປະກອນພິເສດ ເຊັ່ນ: ເຄື່ອງຊ່ວຍຟັງ (ຄົນຫູຕຶງ) ຫຼື ຕ້ອງໃຊ້ພາສາມື.

**Q13: ຄວາມຫຍຸ້ງຍາກໃນການຍ່າງ ຫຼື ການເຄື່ອນຍ້າຍ:**

ໝາຍເຖິງຄົນທີ່ບໍ່ສາມາດຍ່າງ ຫຼື ມີຄວາມລຳບາກໃນການຍ່າງ/ການເຄື່ອນຍ້າຍຈາກສະຖານທີ່ໜຶ່ງໄປຫາສະຖານທີ່ອື່ນ.

**Q14: ຄວາມຫຍຸ້ງຍາກໃນການຈື່ຈຳ ຫຼື ສະມາທິ:**

ໝາຍເຖິງຄົນທີ່ເປັນພິການມັນສະໝອງ ແລະ ສະຕິປັນຍາໃນການຈື່ຈຳ ຫຼື ການສຸມສະມາທິໃນການເຮັດວຽກເປັນເວລາຕິດຕໍ່ກັນຍາວນານ ຊຶ່ງເປັນອຸປະສັກໃນການປະກອບກິດຈະກຳປະຈຳວັນ ແລະ ການເຂົ້າຮ່ວມຂອງເຂົາເຈົ້າໃນສັງຄົມຢ່າງເຕັມສ່ວນ ແລະ ມີປະສິດທິຜົນບົນພື້ນຖານຄວາມສະເໝີພາບກັບຄົນອື່ນໆ.

**Q15: ຄວາມຫຍຸ້ງຍາກໃນການດູແລຕົນເອງ:**

ໝາຍເຖິງບຸກຄົນທີ່ບໍ່ມີຄວາມສາມາດ ຫຼື ມີຄວາມຫຍຸ້ງຍາກໃນການທຳຄວາມສະອາດຮ່າງກາຍ ຫຼື ການແຕ່ງກາຍເປັນຕົ້ນແມ່ນບຸກຄົນທີ່ແຂນກຸດ, ອຳມະພຶກ, ອຳມະພາດ.

**Q16: ຄວາມຫຍຸ້ງຍາກໃນການປາກເວົ້າ ຫຼື ການສື່ສານ (ຄົນປາກກືກ ຫຼື ຄົນໃບ້):**

ໝາຍເຖິງຄົນທີ່ເວົ້າບໍ່ອອກສຽງ ຫຼື ມີຄວາມຜິດປົກກະຕິທາງດ້ານການປາກເວົ້າເຮັດໃຫ້ເກີດມີບັນຫາໃນການສື່ສານກັບຜູ້ອື່ນ ຫຼື ມີຄວາມຜິດປົກກະຕິທາງດ້ານອະໄວຍະວະຜັນສຽງທີ່ເຮັດໃຫ້ບໍ່ສາມາດເວົ້າໃຫ້ຄົນອື່ນເຂົ້າໃຈໄດ້.

ສຳລັບລະຫັດຄຳຕອບສຳລັບຄຳຖາມແຕ່ຄຳຖາມທີ **Q 11** ຫາ **Q 16** ປະກອບມີດັ່ງນີ້:

1) ບໍ່ມີຄວາມຫຍຸ້ງຍາກໃນການເບິ່ງເຫັນ;
2) ມີຄວາມຫຍຸ້ງຍາກໜ້ອຍໜຶ່ງ;
3) ມີຄວາມຫຍຸ້ງຍາກຫຼາຍ;
4) ບໍ່ສາມາດເຮັດຫຍັງໄດ້.




__ຕົວຢ່າງ:__ ທ້າວ ກ ລາວມີຄຳຕອບດ້ານຄວາມຫຍຸ້ງຍາກ ດັ່ງລຸ່ມນີ້:

- ບໍ່ມີຄວາມຫຍຸ້ງຍາກໃນການເບິ່ງເຫັນ;
- ມີຄວາມຫຍຸ້ງຍາກໜ້ອຍໜຶ່ງໃນການໄດ້ຍິນ;
- ມີຄວາມຫຍຸ້ງຍາກຫຼາຍໃນການຍ່າງ ຫຼື ການເຄື່ອນຍ້າຍ, ສາເຫດ ແມ່ນເນື່ອງມາຈາກອຸປະເຫດທາງລົດຍົນ;
- ບໍ່ມີຄວາມຫຍຸ້ງຍາກໃນການຈື່ຈຳ ຫຼື ສະມາທິ;
- ບໍ່ມີຄວາມຫຍຸ້ງຍາກໃນການດູແລໂຕເອງ;

- ບໍ່ມີຄວາມຫຍຸ້ງຍາກໃນການປາກເວົ້າ ຫຼື ການສື່ສານ.

ການຈົດກ່າຍ ທ່ານຕ້ອງທາສີດໍາ (■) ໃສ່ຫ້ອງສີ່ຫຼ່ຽມ (□) ຂອງລະຫັດຄໍາຕອບທີ່ຖືກຕ້ອງນັ້ນ ເຊິ່ງໄດ້ກໍານົດໄວ້ໃຫ້ໃນໃບສອບຖາມ ຂອງການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2015.

**ຄໍາຖາມທີ Q17: ສາເຫດຕົ້ນຕໍທີ່ມີຄວາມຫຍຸ້ງຍາກ**

ຈຸດປະສົງຂອງຄໍາຖາມນີ້ ແມ່ນເພື່ອເກັບກໍາຂໍ້ມູນຂ່າວສານກ່ຽວກັບສາເຫດຕົ້ນຕໍທີ່ພາໃຫ້ມີຄວາມຫຍຸ້ງຍາກໃນການເຄື່ອນໄຫວຮ່າງກາຍຂອງສະມາຊິກໃນຄົວເຮືອນ.

**ສາເຫດຕົ້ນຕໍທີ່ພາໃຫ້ມີຄວາມຫຍຸ້ງຍາກ:** ທີ່ໄດ້ກໍານົດໃນແບບສອບຖາມນີ້ປະກອບມີ:

1) **ສາເຫດຕັ້ງແຕ່ເກີດ (ກໍາເນີດ):** ໝາຍເຖິງບຸກຄົນທີ່ເກີດມາແລ້ວມີຄວາມຫຍຸ້ງຍາກ ຫຼື ພິການໃດໜຶ່ງທີ່ຕິດໂຕມາພ້ອມໃນເວລາເກີດ.
2) **ສາເຫດຈາກສົງຄາມ:** ໝາຍເຖິງຄວາມຫຍຸ້ງຍາກ ຫຼື ພິການທີ່ເກີດຈາກເກີດຈາກຜົນກະທົບຂອງສົງຄາມ ທີ່ເຮັດໃຫ້ບຸກຄົນສູນເສຍອະໄວຍະວະສ່ວນໃດສ່ວນໜຶ່ງຂອງຮ່າງກາຍ ຫຼື ເຮັດໃຫ້ການປະຕິບັດງານຂອງອະໄວຍະວະສ່ວນໃດສ່ວນໜຶ່ງຂອງຮ່າງກາຍມີຄວາມຫຍຸ້ງຍາກ ຫຼື ບໍ່ປົກກະຕິ.
3) **ສາເຫດຈາກອຸປະຕິເຫດ:** ໝາຍເຖິງຄວາມຫຍຸ້ງຍາກ ຫຼື ພິການທີ່ເກີດຈາກອຸປະຕິເຫດຕ່າງໆຫຼາຍກໍລະນີ ເຊັ່ນ: ເກີດອຸປະຕິເຫດທາງບົກ, ທາງນໍ້າ, ການອອກແຮງງານ, ການຫຼິ້ນກິລາ, ການທໍາຮ້າຍຮ່າງກາຍ, ໄຟຊ໋ອດ, ໄຟໃໝ້, ນໍ້າຮ້ອນລວກ ແລະ ອື່ນໆ.
4) **ສາເຫດຈາກລະເບີດຕົກຄ້າງ:** ໝາຍເຖິງຄວາມຫຍຸ້ງຍາກ ຫຼື ພິການທີ່ເກີດຈາກລະເບີດ, ລູກປືນ, ລູກມັ້ນທີ່ຕົກຄ້າງໃນປາງສົງຄາມ ເຮັດໃຫ້ສູນເສຍອະໄວຍະວະສ່ວນໃດສ່ວນໜຶ່ງຂອງຮ່າງກາຍ ຫຼື ເຮັດໃຫ້ການປະຕິບັດງານຂອງອະໄວຍະວະສ່ວນໃດສ່ວນໜຶ່ງຂອງຮ່າງກາຍມີຄວາມຫຍຸ້ງຍາກ ຫຼື ບໍ່ປົກກະຕິ.
5) **ສາເຫດຈາກພະຍາດ:** ໝາຍເຖິງຄວາມຫຍຸ້ງຍາກ ຫຼື ພິການທີ່ເກີດຈາກພະຍາດຕ່າງໆ ທີ່ສົ່ງຜົນກະທົບຕໍ່ສຸຂະພາບຂອງຄົນເຮັດໃຫ້ການປະຕິບັດງານຂອງອະໄວຍະວະສ່ວນໃດສ່ວນໜຶ່ງຂອງຮ່າງກາຍມີຄວາມຫຍຸ້ງຍາກ ຫຼື ບໍ່ປົກກະຕິ.
6) **ສາເຫດຈາກອື່ນໆ:** ໝາຍເຖິງຄວາມຫຍຸ້ງຍາກ ຫຼື ພິການທີ່ກິດຈາກສາເຫດອື່ນໆທີ່ພາໃຫ້ເກີດມີຄວາມພິການແຕ່ບໍ່ໄດ້ລະບຸໄວ້ໃນຂ້າງເທິງ ເຊັ່ນ: ການກິນອາຫານເປັນພິດ, ເສບຢາເສບຕິດ ແລະ ອື່ນໆ ທີ່ເຮັດໃຫ້ການປະຕິບັດງານຂອງອະໄວຍະວະສ່ວນໃດສ່ວນໜຶ່ງຂອງຮ່າງກາຍມີຄວາມຫຍຸ້ງຍາກ ຫຼື ບໍ່ປົກກະຕິ.

ນັກເດີນສໍາຫຼວດຈະຕ້ອງຈົດກ່າຍຄໍາຕອບຕາມທີ່ຜູ້ຖືກສໍາພາດຕອບມາ ແລະ ໃຫ້ທາສີດໍາ (■)ໃສ່ຫ້ອງສີ່ຫຼ່ຽມ (□) ຂອງລະຫັດສາເຫດທີ່ພາໃຫ້ເກີດມີຄວາມຫຍຸ້ງຍາກ ຫຼື ພິການຕາມທີ່ກໍານົດໄວ້ໃນໃບແບບສອບຖາມ.

***ໝາຍເຫດ:*** *ຖ້າຫາກພິການຊໍ້າຊ້ອນໃຫ້ນັກເດີນສໍາຫຼວດຖາມຕື່ມວ່າລາວມີຄວາມຫຍຸ້ງຍາກໃດຫຼາຍກວ່າໝູ່ (ໃນຄໍາຖາມທີ 11 ຫາ 16) ແລ້ວຖາມເຖິງສາເຫດທີ່ເຮັດໃຫ້ມີຄວາມຫຍຸ້ງຍາກດັ່ງກ່າວ.*

### 4.4. ພາກ ຄ: ສຳລັບທຸກຄົນທີ່ມີອາຍຸ 6 ປີຂຶ້ນໄປ

ພາກ **"ຄ"** ແມ່ນຄຳຖາມກ່ຽວກັບການສຶກສາ ເຊິ່ງຄຳຖາມເຫຼົ່ານີ້ຈະຕ້ອງຖາມທຸກຄົນທີ່ມີອາຍຸ 6 ປີຂຶ້ນໄປ. ສຳລັບເດັກນ້ອຍທີ່ມີອາຍຸຕ່ຳກ່ວາ 6 ປີ ແມ່ນບໍ່ໃຫ້ຖາມຄຳຖາມໃນພາກ **"ຄ"** ແລະ ໃຫ້ຢຸດການສຳພາດກ່ຽວກັບເດັກຄົນນັ້ນແລ້ວໃຫ້ຖາມສະມາຊິກຄົນອື່ນໆຕໍ່ໄປໃນຄົວເຮືອນ.

**ຄຳຖາມທີ Q18: ທ່ານສາມາດອ່ານ, ຂຽນພາສາລາວ ຫຼື ພາສາອື່ນໄດ້ບໍ່?**

ຈຸດປະສົງຂອງຄຳຖາມນີ້ ແມ່ນເພື່ອເກັບກຳຂໍ້ມູນເພື່ອຄິດໄລ່ອັດຕາການຮູ້ໜັງສືຂອງພົນລະເມືອງລາວທັງໝົດທີ່ມີອາຍຸ 6 ປີຂຶ້ນໄປ.

**ພາສາລາວ** ໝາຍເຖິງ ພາສາທີ່ໃຊ້ເປັນທາງການໃນ ສປປ ລາວ.

**ພາສາອື່ນ:** ໝາຍເຖິງ ພາສາຕ່າງປະເທດເຊັ່ນ: ພາສາອັງກິດ, ພາສາໄທ, ພາສາຈີນ, ພາສາຫວຽດນາມ ແລະ ພາສາອື່ນໆ ແຕ່ບໍ່ລວມເອົາພາສາຊົນເຜົ່າຢູ່ໃນ ສປປ ລາວ.

**ບໍ່ໄດ້ຈັກພາສາ:** ໝາຍເຖິງບໍ່ສາມາດອ່ານ ຫຼື ຂຽນພາສາລາວ ແລະ ພາສາອື່ນໄດ້.

ການສອບຖາມແມ່ນໃຫ້ເນັ້ນໃສ່ການອ່ານໄດ້ ແລະ ຂຽນເປັນພາສາລາວໄດ້ຕາມຫຼັກໄວຍາກອນລາວ, ຖ້າຫາກບຸກຄົນໃດສາມາດ **ອ່ານແຕ່ຂຽນບໍ່ໄດ້ ຫຼື ຂຽນໄດ້ແຕ່ອ່ານບໍ່ໄດ້** ແມ່ນໃຫ້ຖືວ່າອ່ານຂຽນພາສາລາວບໍ່ໄດ້. ຖ້າຫາກຜູ້ຖືກສຳພາດຕອບວ່າ ອ່ານພາສາລາວບໍ່ໄດ້ໃຫ້ຖາມຕື່ມວ່າລາວສາມາດອ່ານ ຫຼື ຂຽນພາສາອື່ນ (ພາສາຕ່າງປະເທດ) ໄດ້ບໍ? ເພື່ອໃຫ້ຄົບຖ້ວນຂອງຄຳຕອບຂອງແຕ່ລະບຸກຄົນ (ໃນຄຳຖາມນີ້ແມ່ນສາມາດຕອບໄດ້ຄຳຕອບດຽວ).

ການຈົດກ່າຍຄຳຕອບແມ່ນໃຫ້ທາສີດຳ (▣) ໃສ່ຫ້ອງສີ່ຫຼ່ຽມ (☐) ໃຫ້ຖືກຕ້ອງຕາມຄຳຕອບທີ່ຜູ້ຖືກສຳພາດຕອບມາ.

<u>**ຕົວຢ່າງ:**</u> ການຈົດກ່າຍຄຳຕອບສຳລັບຄຳຖາມ Q18 ແມ່ນປະຕິບັດດັ່ງນີ້:

1) ກໍລະນີຜູ້ຖືກສຳພາດອ່ານ ແລະ ຂຽນພາສາລາວໄດ້.

2) ກໍລະນີຜູ້ຖືກສຳພາດອ່ານ ແລະ ຂຽນພາສາອື່ນ (ພາສາຕ່າງປະເທດ) ໄດ້.

3) ກໍລະນີຜູ້ຖືກສຳພາດອ່ານ ແລະ ຂຽນບໍ່ໄດ້ຈັກພາສາ.




**ຄຳຖາມທີ Q19: ທ່ານເຄີຍເຂົ້າໂຮງຮຽນບໍ່?**

ຈຸດປະສົງຂອງຄຳຖາມ ແມ່ນເພື່ອໃຫ້ຮູ້ກ່ຽວກັບການເຂົ້າໂຮງຮຽນຂອງສະມາຊິກໃນຄົວເຮືອນ.

**ການເຂົ້າໂຮງຮຽນ**

ໝາຍເຖິງການໄດ້ເຂົ້າຮຽນໃນສະຖາບັນການສຶກສາຂອງລັດ ແລະ ເອກະຊົນທັງພາຍໃນ ແລະ ຕ່າງປະເທດ. ໃນຄຳຖາມນີ້ຈະໄດ້ຖາມເຖິງບຸກຄົນ ທີ່ໄດ້ເຂົ້າໂຮງຮຽນ, ກຳລັງຮຽນຢູ່ ຫຼື ອອກໂຮງຮຽນແລ້ວ ດັ່ງນີ້:

1) **"ບໍ່ເຄີຍ"** ໝາຍເຖິງບຸກຄົນທີ່ບໍ່ເຄີຍເຂົ້າໂຮງຮຽນເພື່ອຮຽນໜັງສືເລີຍຈັກເທື່ອໃນຊີວິດຜ່ານມາຂອງລາວ.
2) **"ກຳລັງຮຽນຢູ່"** ໝາຍເຖິງບຸກຄົນທີ່ກຳລັງຮຽນຢູ່ໃນໂຮງຮຽນ, ສະຖາບັນການສຶກສາຕ່າງໆ ແລະ ລວມທັງບຸກຄົນທີ່ຂາດຮຽນຊົ່ວຄາວ ຫຼື ບຸກຄົນທີ່ຢູ່ໃນໄລຍະກຳລັງພັກຮຽນ.
3) **"ເຄີຍ, ອອກໂຮງຮຽນແລ້ວ"** ໝາຍເຖິງບຸກຄົນທີ່ເຄີຍເຂົ້າໂຮງຮຽນແຕ່ໄດ້ອອກໂຮງຮຽນແລ້ວ ຫຼື ໄດ້ສຳເລັດການຮຽນຮອດຂັ້ນໃດໜຶ່ງແລ້ວອອກ ແລະ ບໍ່ໄດ້ເຂົ້າໂຮງຮຽນອີກຕໍ່ໄປ.

ການຈົດກ່າຍຄຳຕອບນັກເດີນສຳຫຼວດແມ່ນໃຫ້ທາສີດຳ (■) ໃສ່ຫ້ອງສີ່ຫຼ່ຽມ (□) ທີ່ຖືກຕ້ອງຕາມຄຳຕອບຂອງຜູ້ຖືກສຳພາດ.

<u>**ຕົວຢ່າງ:**</u> ການຈົດກ່າຍຄຳຕອບສຳລັບຄຳຖາມ Q19 ແມ່ນປະຕິບັດດັ່ງນີ້:

1) ກໍລະນີຜູ້ຖືກສຳພາດບໍ່ເຄີຍເຂົ້າໂຮງຮຽນ. →
2) ກໍລະນີຜູ້ຖືກສຳພາດກຳລັງຮຽນຢູ່. →
3) ກໍລະນີຜູ້ຖືກສຳພາດເຄີຍເຂົ້າໂຮງຮຽນ ແຕ່ໃນປະຈຸບັນໄດ້ອອກໂຮງຮຽນແລ້ວ. →




**ຄຳຖາມທີ Q20: ລະດັບການສຶກສາສູງສຸດທີ່ທ່ານຮຽນຈົບແມ່ນຊັ້ນໃດ?**

ຈຸດປະສົງຂອງຄຳຖາມນີ້ ແມ່ນເພື່ອໃຫ້ຮູ້ກ່ຽວກັບລະດັບການສຶກສາສູງສຸດຂອງສະມາຊິກໃນຄົວເຮືອນທີ່ຮຽນຈົບ.

ລະດັບການສຶກສາສູງສຸດໝາຍເຖິງຊັ້ນຮຽນສູງສຸດທີ່ສະມາຊິກໃນຄົວເຮືອນຮຽນຈົບສົມບູນຕາມລະບົບການສຶກສາທີ່ເປັນທາງການ. ສຳລັບລະຫັດຄຳຕອບກ່ຽວກັບຊັ້ນຮຽນແມ່ນໃຫ້ເບິ່ງຢູ່ດ້ານຫຼັງຂອງໃບສອບຖາມ.

<u>**ຕົວຢ່າງ:**</u> ທ້າວ ກ ກຳລັງຮຽນຢູ່ຫ້ອງ ປໍ 4, ຜ່ານມາລາວຮຽນຈົບຫ້ອງ ປໍ 3 ໝາຍວ່າການສຶກສາສູງສຸດຂອງທ່ານ ແມ່ນ ປໍ 3 (ລະຫັດຄຳຕອບແມ່ນ 13).




***ໝາຍເຫດ:***

1) *ບຸກຄົນທີ່ຈົບ ມໍ 6, ມໍ3 ກ່ອນປີ 2010 ແມ່ນທຽບໃຫ້ຈົດກ່າຍດັ່ງນີ້ ມໍ6 = ມໍ7, ມໍ3 = ມໍ4.*
2) *ບຸກຄົນທີ່ຈົບ ປໍ 6 ຫຼື ຈົບແຊກ ກ່ອນປີ 1975 ແມ່ນໃຫ້ຈົດກ່າຍເປັນ ປໍ5.*
3) *ບຸກຄົນທີ່ຈົບການສຶກສາມາຈາກຕ່າງປະເທດ ແມ່ນໃຫ້ທຽບຄືກັນກັບການສຶກສາຢູ່ໃນ ສປປ ລາວ.*
4) *ບຸກຄົນທີ່ຈົບປະຊາສຶກສາ ບໍ1, ບໍ2, ບໍ3 ແມ່ນໃຫ້ຈົດກ່າຍເປັນ ບໍ1 = ປໍ3, ບໍ2 = ປໍ4, ບໍ3 = ປໍ 5.*

*ການທຽບຊັ້ນ ຫຼື ວຸດທິການສຶກສາຂອງພະສົງກັບການສຶກສາສາມັນທົ່ວໄປ ແມ່ນໃຫ້ປະຕິບັດດັ່ງນີ້:*

1) *ປະກາສະນິຍະບັດຈົບຊັ້ນນັກທຳ ແລະ ຈົບຊັ້ນປະຖົມສາມັນສົງ ມີຄຸນຄ່າທຽບເທົ່າກັບປະກາສະນິຍະບັດຈົບຊັ້ນປະຖົມສຶກສາສົມບູນທາງໂລກ (ການສຶກສາສາມັນທົ່ວໄປ).*
2) *ປະກາສະນິຍະບັດຈົບຊັ້ນປະຣິຍັດຕິທຳຕອນຕົ້ນ ແລະ ຈົບຊັ້ນມັດທະຍົມສຶກສາສົງຕອນຕົ້ນ ມີຄຸນຄ່າທຽບເທົ່າກັບປະກາສະນິຍະບັດຈົບຊັ້ນມັດທະຍົມສຶກສາຕອນຕົ້ນທາງໂລກ (ການສຶກສາສາມັນທົ່ວໄປ).*
3) *ປະກາສະນິຍະບັດຈົບຊັ້ນປະຣິຍັດຕິທຳຕອນປາຍ ແລະ ຈົບຊັ້ນມັດທະຍົມສຶກສາສົງຕອນປາຍ ມີຄຸນຄ່າເທົ່າກັບປະກາສະນິຍະບັດຈົບຊັ້ນມັດທະຍົມສຶກສາຕອນປາຍທາງໂລກ (ການສຶກສາສາມັນທົ່ວໄປ).*
4) *ປະລິນຍາບັດຈົບຊັ້ນບັນດິດຈາກບັນດິດວິທະຍາຂອງສົງ ມີຄຸນຄ່າເທົ່າກັບປິນຍາຕີທາງໂລກ.*
5) *ປະລິນຍາບັດຈົບຊັ້ນມະຫາບັນດິດຈາກບັນດິດວິທະຍາຂອງສົງ ມີຄຸນຄ່າເທົ່າກັບປິນຍາໂທທາງໂລກ.*
6) *ປະລິນຍາບັດຈົບຊັ້ນອັກຄະບັນດິດຈາກບັນດິດວິທະຍາຂອງສົງ ມີຄຸນຄ່າເທົ່າກັບປິນຍາເອກທາງໂລກ.*

**ຄຳຖາມທີ Q21: ວິຊາທີ່ທ່ານຮຽນຈົບສູງສຸດແມ່ນວິຊາຫຍັງ? (ສຳລັບຄຳຕອບ 41 ຫາ 46ໃນຄຳຖາມ Q20)**

ຈຸດປະສົງຂອງຄຳຖາມນີ້ ແມ່ນເພື່ອໃຫ້ຮູ້ວິຊາສະເພາະສູງສຸດຂອງສະມາຊິກໃນຄົວເຮືອນໄດ້ຮຽນຈົບ (ບໍ່ແມ່ນວິຊາສະເພາະທີ່ຜູ້ຖືກສຳພາດກຳລັງຮຽນຢູ່ໃນເວລາປະຈຸບັນ) ເຊິ່ງສາມາດຮູ້ໄດ້ວ່າສາຍວິຊາສະເພາະທີ່ລາວຮຽນຈົບມາ.

ວິຊາທີ່ຮຽນຈົບສູງສຸດ ໝາຍເຖິງສາຂາວິຊາທີ່ລາວໄດ້ຮຽນຈົບ, ຖ້າຫາກຜູ້ໜຶ່ງຈົບຫຼາຍສາຂາວິຊາໃນຊັ້ນດຽວກັນ ແມ່ນໃຫ້ຜູ້ກຽວເລືອກເອົາສາຂາວິຊາໃດໜຶ່ງ.

ນັກເດີນສຳຫຼວດ ຈະຕ້ອງຈົດກ່າຍຄຳຕອບທີ່ຜູ້ຖືກສຳພາດຕອບມາໃຫ້ຖືກຕ້ອງຕາມລະຫັດວິຊາສະເພາະທີ່ໄດ້ຮຽນຈົບຕາມທີ່ກຳນົດໄວ້ດ້ານຫຼັງໃບແບບສອບຖາມ ເຊິ່ງຈະຕ້ອງຈົດກ່າຍໃສ່ໃນຊ່ອງຫວ່າງສຳລັບຂຽນຄຳຕອບ ແລະ ລະຫັດດັ່ງກ່າວແມ່ນມີ 2 ຕົວເລກ. ສຳລັບລາຍລະອຽດອີງປະກອບຂອງລະຫັດສາຂາວິຊາຕ່າງໆແມ່ນໄດ້ກຳນົດໄວ້ໃນ **ເອກະສານຊ້ອນທ້າຍ 3**.




__ຕົວຢ່າງ:__ ທ້າວ ກ ຮຽນຈົບປະລິນຍາຕີ ສາຂາວິຊາການເງິນການບັນຊີ, ສະນັ້ນລະຫັດຄຳຕອບວິຊາທີ່ລາວຮຽນຈົບສູງສຸດແມ່ນ 34, ທ່ານຕ້ອງຈົດກ່າຍດັ່ງຮູບຕົວຢ່າງ:

***__ສິ່ງຄວນເອົາໃຈໃສ່:__*** *ຄຳຖາມນີ້ແມ່ນໃຊ້ຖາມສະເພາະບຸກຄົນທີ່ມີລະຫັດຄຳຕອບ 41 ຫາ 46 ໃນຄຳຖາມ Q20 ເທົ່ານັ້ນ.*

### 4.5. ພາກ ງ: ສຳລັບທຸກຄົນທີ່ມີອາຍຸ 10 ປີ ຂຶ້ນໄປ

ພາກ **"ງ"** ແມ່ນພົວພັນເຖິງຄຳຖາມກ່ຽວກັບແຮງງານ ແລະ ການມີວຽກເຮັດງານທຳ, ບັນດາຄຳຖາມໃນພາກນີ້ແມ່ນໃຊ້ຖາມທຸກຄົນທີ່ມີອາຍຸແຕ່ 10 ປີຂຶ້ນໄປ.

**ຄຳຖາມທີ Q22: ໃນເດືອນ 3 ປີ 2005 ທ່ານອາໄສຢູ່ໃສ?**

ຄຳຖາມນີ້ ເພື່ອໃຫ້ຮູ້ຂໍ້ມູນຂ່າວສານກ່ຽວກັບການຍົກຍ້າຍຂອງພົນລະເມືອງໃນລະຫວ່າງສອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດປີ 2005 ຫາ 2015.

- ຖ້າຫາກວ່າ ໃນເດືອນ 3 ປີ 2005 ສະມາຊິກໃນຄົວເຮືອນ ໄດ້ອາໄສຢູ່ເມືອງດຽວ ກັບເມືອງທີ່ລາວຢູ່ປະຈຸບັນແມ່ນໃຫ້ທາສີດໍາ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ຂອງລະຫັດ 1;

  ***ໝາຍເຫດ:*** *ຖ້າຫາກວ່າເຮືອນຍັງຕັ້ງຢູ່ບ່ອນເກົ່າ ແຕ່ຖືກປ່ຽນຊື່ເມືອງ ຫຼື ບ້ານ ເນື່ອງຈາກການ ແບ່ງເຂດຄຸ້ມຄອງ, ການໂຮມບ້ານ, ແຍກບ້ານ ຫຼື ຍຸບບ້ານ ແມ່ນໃຫ້ຖືວ່າຢູ່ບ່ອນເກົ່າ (ບໍ່ມີການເຄື່ອນຍ້າຍ).*

- ຖ້າຫາກວ່າ ໃນເດືອນ 3 ປີ 2005 ສະມາຊິກໃນຄົວເຮືອນ ບໍ່ໄດ້ອາໄສຢູ່ເມືອງດຽວກັບເມືອງທີ່ລາວຢູ່ປະຈຸບັນແມ່ນໃຫ້ຂຽນລະຫັດແຂວງ ແລະ ເມືອງທີ່ລາວຢູ່ໃນເມື່ອກ່ອນ ໃນປີ 2005 ໃສ່ໃນຫ້ອງສີ່ລ່ຽມຂອງລະຫັດ 2 (ສໍາລັບລະຫັດແຂວງ ແລະ ເມືອງຢູ່ໃນ **ເອກະສານຊ້ອນທ້າຍ 1** );
- ຖ້າຫາກວ່າ ໃນເດືອນ 3 ປີ 2005 ສະມາຊິກໃນຄົວເຮືອນໄດ້ອາໄສຢູ່ຕ່າງປະເທດ ແມ່ນໃຫ້ຂຽນລະຫັດປະເທດ ທີ່ລາວຢູ່ໃນເມື່ອກ່ອນ ໃນປີ 2005 ໃສ່ໃນຫ້ອງ ສີ່ລ່ຽມຂອງລະຫັດ 3 (ສໍາລັບລະຫັດປະເທດໃຫ້ເບິ່ງຢູ່ດ້ານຫຼັງຂອງໃບແບບສອບຖາມ).

**ຄໍາຖາມທີ Q23: ສາເຫດຕົ້ນຕໍຂອງການຍົກຍ້າຍມາຢູ່ບ່ອນປະຈຸບັນ**

ຄໍາຖາມນີ້ແມ່ນເພື່ອຖາມເຖິງເຫດຜົນຂອງການຍົກຍ້າຍ ໃນລະຫວ່າງສອງການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດປີ 2005 ຫາ 2015 ທີ່ມີຄໍາຕອບ 2 ແລະ 3 ຢູ່ໃນ **Q22**.

**ສາເຫດຂອງການຍົກຍ້າຍມີດັ່ງນີ້:**

- **"ປ່ຽນບ່ອນເຮັດວຽກ"**
  ໝາຍເຖິງການຍົກຍ້າຍບ່ອນເຮັດວຽກ ຫຼື ສະຖານທີ່ເຮັດວຽກ ບໍ່ວ່າຈະເປັນວຽກສ່ວນຕົວ ຫຼື ທາງການ.
- **"ຊອກຫາວຽກເຮັດ"**
  ໝາຍເຖິງການຍົກຍ້າຍໄປຢູ່ບ່ອນອື່ນ ເພື່ອຊອກວຽກເຮັດງານທໍາ.
- **"ທຸລະກິດ"**
  ໝາຍເຖິງການຍົກຍ້າຍເພື່ອໄປດໍາເນີນທຸລະກິດຂອງຕົນເອງຢູ່ບ່ອນອື່ນ.
- **"ການສຶກສາ"**
  ໝາຍເຖິງການຍົກຍ້າຍເພື່ອໄປສຶກສາຮໍ່າຮຽນ.
- **"ແຕ່ງດອງ"**
  ໝາຍເຖິງການຍົກຍ້າຍເພື່ອໄປສ້າງຄອບຄົວໃໝ່ ຫຼື ໄປແຕ່ງດອງ.
- **"ຄອບຄົວຍ້າຍ"**
  ໝາຍເຖິງການຍົກຍ້າຍຂອງຄອບຄົວ ຫຼື ຄົວເຮືອນໄປຢູ່ສະຖານທີ່ໃໝ່.
- **"ບ້ານຍ້າຍ"**
  ໝາຍເຖິງການຍົກຍ້າຍບ້ານຈາກສະຖານທີ່ເກົ່າໄປຕັ້ງຢູ່ສະຖານທີ່ໃໝ່ຍ້ອນເຫດຜົນຕ່າງໆ.
- **"ອື່ນໆ"**
  ແມ່ນສາເຫດຂອງການຍົກຍ້າຍທີ່ບໍ່ກ່ຽວຂ້ອງໃນສາເຫດທີ່ກ່າວມາຂ້າງເທິງ.

ການຈັດກ່າຍສາເຫດຂອງການເຄື່ອນຍ້າຍຂອງສະມາຊິກໃນຄົວເຮືອນໃດໜຶ່ງ ແມ່ນໃຫ້ຈັດກ່າຍຕາມຄຳຕອບຂອງຜູ້ຖືກສຳພາດຕອບເຫດຜົນຕົ້ນຕໍຂອງການຍົກຍ້າຍ ແລະ ທ່ານຈະຕ້ອງທາສີດຳ (■)ໃສ່ຫ້ອງສີ່ຫຼ່ຽມ (□) ຂອງລະຫັດຄຳຕອບຂອງເຫດຜົນການຍົກຍ້າຍ.

**ຄຳຖາມທີ Q24: ກິດຈະກຳຕົ້ນຕໍຂອງທ່ານໃນ 12 ເດືອນຜ່ານມາແມ່ນຫຍັງ?**

ຈຸດປະສົງຂອງຄຳຖາມນີ້ ແມ່ນເພື່ອເກັບກຳຂໍ້ມູນກ່ຽວກັບກິດຈະກຳຕົ້ນຕໍຂອງສະມາຊິກໃນຄົວເຮືອນໃນໄລຍະ 12 ເດືອນຜ່ານມາ ແລະ ເພື່ອເປັນການວັດແທກການມີວຽກເຮັດງານທຳຂອງພົນລະເມືອງ ເຊິ່ງຈະສາມາດຮູ້ໄດ້ເຖິງກຳລັງແຮງງານ, ການຫວ່າງງານ ແລະ ອັດຕາສ່ວນພົນລະເມືອງທີ່ຢູ່ນອກກຳລັງແຮງງານ.

**ກິດຈຳກຳ**

ໝາຍເຖິງຮູບແບບການຊອກຢູ່ຫາກິນຂອງຄົນເຮົາໃນສັງຄົມ ໂດຍການເຮັດທຸລະກິດ ຫຼື ເຮັດວຽກງານອື່ນໆຕາມຄວາມມັກ ຫຼື ຄວາມຊໍ້ນເຄີຍ ຫຼື ວິຊາຊີບທີ່ຮຽນມາຂອງແຕ່ລະບຸກຄົນ. ກິດຈະ ກຳຕົ້ນຕໍປະກອບມີດັ່ງນີ້:

1) **ພະນັກງານລັດ ຫຼື ຜູ້ອອກແຮງງານໃຫ້ລັດ:** ໝາຍເຖິງບຸກຄົນທີ່ເຮັດວຽກຢູ່ພາຍໃຕ້ການຄຸ້ມຄອງດູແລຂອງລັດ ໂດຍໄດ້ຮັບການທົດແທນຈາກການອອກແຮງງານດ້ວຍເງິນເດືອນ ຫຼື ຄ່າແຮງງານ ຫຼື ເງິນອຸດໜູນ, ຜົນປະໂຫຍດ ແລະ ນະໂຍບາຍອື່ນໆຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ລະບຽບລັດຖະກອນ.

    **<u>ຕົວຢ່າງ:</u>** ພະນັກງານຫ້ອງວ່າການປົກຄອງເມືອງ, ພະນັກງານຄູສອນ, ທະຫານ, ຕຳຫຼວດ, ທ່ານໝໍ, ນາຍບ້ານ...

2) **ຜູ້ອອກແຮງງານໃຫ້ເອກະຊົນ:** ໝາຍເຖິງບຸກຄົນທີ່ເຮັດວຽກຢູ່ພາຍໃຕ້ການຄຸ້ມຄອງດູແລຂອງຜູ້ໃຊ້ແຮງງານພາກເອກະຊົນ ໂດຍໄດ້ຮັບການທົດແທນຈາກການອອກແຮງງານດ້ວຍເງິນເດືອນ ຫຼື ຄ່າແຮງງານ, ຜົນປະໂຫຍດ ແລະ ນະໂຍບາຍອື່ນໆຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ສັນຍາແຮງງານ.

    **<u>ຕົວຢ່າງ:</u>** ພະນັກງານຂອງໂຮງງານຕັດຫຍິບເສື້ອຜ້າລ້ານຊ້າງ, ບໍລິສັດສົມບູນການຄ້າ, ຫ້າງຮ້ານຕ່າງໆ...

3) **ຜູ້ອອກແຮງງານໃຫ້ລັດວິສາຫະກິດ:** ໝາຍເຖິງບຸກຄົນທີ່ເຮັດວຽກຢູ່ພາຍໃຕ້ການຄຸ້ມຄອງດູແລຂອງຜູ້ໃຊ້ແຮງງານພາກສ່ວນລັດວິສາຫະກິດ ໂດຍໄດ້ຮັບການທົດແທນຈາກການອອກແຮງງານດ້ວຍເງິນເດືອນ ຫຼື ຄ່າແຮງງານ, ຜົນປະໂຫຍດ ແລະ ນະໂຍບາຍອື່ນໆຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ສັນຍາແຮງງານ.

    **<u>ຕົວຢ່າງ:</u>** ພະນັກງານຂອງບໍລິສັດການບິນລາວ, ບໍລິສັດໄຟຟ້າລາວ, ບໍລິສັດລາວໂທລະຄົມ, ລັດວິສາຫະກິດນ້ຳປະປາ...

4) **ຜູ້ໃຊ້ແຮງງານ (ນາຍຈ້າງ)**: ໝາຍເຖິງບຸກຄົນ ຫຼື ການຈັດຕັ້ງທີ່ນຳໃຊ້ຜູ້ອອກແຮງງານເຮັດວຽກໃຫ້ຕົນໂດຍຕ້ອງຈ່າຍເງິນເດືອນ ຫຼື ຄ່າແຮງງານ, ຜົນປະໂຫຍດ ແລະ ນະໂຍບາຍອື່ນໆ ທີ່ກຳນົດໄວ້ໃນລະບຽບກົດໝາຍ ແລະ ສັນຍາແຮງງານໃຫ້ແກ່ຜູ້ອອກແຮງງານ.

    **<u>ຕົວຢ່າງ:</u>** ເຈົ້າຂອງຮ້ານຂາຍເຄື່ອງແຫ້ງ, ເຈົ້າຂອງຮ້ານຂາຍເຄື່ອງກໍ່ສ້າງ, ເຈົ້າຂອງຮ້ານເສີມສວຍ, ເຈົ້າຂອງຮ້ານກິນດື່ມ...

5) **ເຮັດວຽກໃຫ້ຕົນເອງ:** ໝາຍເຖິງຜູ້ທີ່ເຮັດວຽກທຸລະກິດການຜະລິດຂອງຕົນເອງສຳລັບການຊົມໃຊ້ຂອງຕົນເອງ ຫຼື ເພື່ອຜົນກຳໄລແຕ່ບໍ່ໄດ້ວ່າຈ້າງຜູ້ອອກແຮງງານເຮັດວຽກໃຫ້ຕົນເອງ.

   **ຕົວຢ່າງ:** ຊາວນາ, ພໍ່ຄ້ານ້ອຍ, ຊ່າງໄມ້, ຊ່າງຕໍ່າຫູກ, ຈັກສານ...

6) **ເຮັດວຽກໃຫ້ຄອບຄົວ(ບໍ່ໄດ້ຄ່າຈ້າງ):** ໝາຍເຖິງບັນດາສະມາຊິກຂອງຄົວເຮືອນທີ່ເຮັດວຽກຊ່ວຍທຸລະກິດ, ການກະສິກຳ ຫຼື ກິດຈະກຳໃດໜຶ່ງຂອງຄອບຄົວ ໂດຍບໍ່ໄດ້ຮັບຄ່າຈ້າງ ຫຼື ຜົນຕອບແທນ.

7) **ເຮັດວຽກນຳອົງການຈັດຕັ້ງສາກົນ, NGO ແລະ ສະຖານທູດຕ່າງໆ:** ໝາຍເຖິງຜູ້ທີ່ເຮັດວຽກຢູ່ນຳອົງການຈັດຕັ້ງສາກົນ, NGO ແລະ ສະຖານທູດຕ່າງໆ.

8) **ຫວ່າງງານ** (ຫຼື ຜູ້ທີ່ກຳລັງຊອກຫາວຽກເຮັດ): ໝາຍເຖິງບຸກຄົນທີ່ບໍ່ມີວຽກເຮັດງານທຳ, ສາມາດເຮັດວຽກໄດ້ແຕ່ບໍ່ມີວຽກເຮັດ ຫຼື ກຳລັງຊອກຫາວຽກເຮັດ.

9) **ນັກຮຽນ:** ໝາຍເຖິງບຸກຄົນທີ່ໄດ້ເຂົ້າຮຽນປົກກະຕິຢູ່ໃນໂຮງຮຽນ, ສະຖາບັນການສຶກສາພາກລັດ ຫຼື ເອກະຊົນ, ເຊິ່ງຈະຕ້ອງເປັນນັກຮຽນທີ່ຮຽນເຕັມເວລາຂອງມື້ໜຶ່ງ ຫຼື ສ່ວນໃດໜຶ່ງຂອງມື້ ແລະ ປົກກະຕິແລ້ວແມ່ນບໍ່ໄດ້ປະກອບສ່ວນເຂົ້າໃນກິດຈະກຳວຽກງານເສດຖະກິດ ເຊັ່ນວ່າ: ການເຮັດວຽກງານ ຫຼື ການເປັນພະນັກງານສັງກັດຢູ່ບ່ອນໃດໜຶ່ງ.

10) **ພໍ່ເຮືອນ/ແມ່ເຮືອນ:** ໝາຍເຖິງບຸກຄົນທີ່ເຮັດວຽກບ້ານການເຮືອນໃນຄົວເຮືອນຂອງຕົນເອງ ແລະ ບໍ່ໄດ້ເຮັດເພື່ອຄ່າຈ້າງ ຫຼື ກຳໄລ.

   <u>ຕົວຢ່າງ</u>: ເຮັດວຽກອານາໄມເຮືອນຊານບ້ານຊ່ອງ, ແຕ່ງຢູ່ຄົວກິນ, ຊັກເຄື່ອງຊັກຂອງ...

11) **ອື່ນໆ**: ປະກອບມີບຸກຄົນທີ່ບຳນານ, ເຈັບປ່ວຍ, ແກ່ສະລາ, ນັກບວດ, ນັກໂທດ, ຜູ້ຕ້ອງຫາທີ່ຖືກຄຸມຂັງ...

ວິທີການຈົດກ່າຍຄຳຕອບທ່ານຈະຕ້ອງຈົດກ່າຍລະຫັດຄຳຕອບທີ່ມີ 2 ຕົວເລກໃສ່ໃນສອງຫ້ອງສີ່ຫຼ່ຽມ (□□) ສຳລັບຂຽນລະຫັດຄຳຕອບໃຫ້ຖືກຕ້ອງຕາມທີ່ຜູ້ຖືກສຳພາດຕອບມາ ໂດຍອີງຕາມລະຫັດກິດຈະກຳຕົ້ນຕໍທີ່ມີ 2 ຕົວເລກຕາມທີ່ໄດ້ກຳນົດໄວ້ໃນດ້ານຫຼັງຂອງໃບແບບສອບຖາມ.

***<u>ໝາຍເຫດ:</u>*** *ສຳລັບອາສາສະໝັກທີ່ບໍ່ໄດ້ຮັບຄ່າຈ້າງ ແມ່ນໃຫ້ກຳນົດກິດຈະກຳຕົ້ນຕໍຂອງເຂົາເຈົ້າແຕ່ 1 ຫາ 7 ໂດຍອີງຕາມກິດຈະກຳຕົວຈິງຂອງລາວ, ເຊັ່ນ: ອາສາສະໝັກຢູ່ພາກສ່ວນລັດ ແມ່ນໃຫ້ໝາຍລະຫັດ 01;*

***ສິ່ງຄວນເອົາໃຈໃສ່:*** *ຖ້າສະມາຊິກຄົວເຮືອນໃດໜຶ່ງໄດ້ປະກອບກິດຈະກຳຫຼາຍກິດຈະກຳພ້ອມກັນ ແມ່ນໃຫ້ນັກເດີນສຳຫຼວດສອບຖາມວ່າ ລາວໃຊ້ເວລາເຂົ້າໃນກິດຈະກຳໃດຫຼາຍກວ່າໝູ່ ແມ່ນໃຫ້ຖືເອົາກິດຈະກຳນັ້ນເປັນຕົ້ນຕໍ ໃນກໍລະນີທີ່ບໍ່ສາມາດແຍກເວລາກິດຈະກຳແຕ່ລະປະເພດໄດ້ ຫຼື ໃຊ້ເວລາເທົ່າກັນ ແມ່ນໃຫ້ຖືເອົາລາຍຮັບເປັນຕົວກຳນົດກິດຈະກຳຂອງລາວ (ຍົກເວັ້ນຜູ້ທີ່ເຮັດກິດຈະກຳແຕ່ 1 - 4 ເຖິງວ່າຈະໃຊ້ເວລາເຂົ້າໃນກິດຈະກຳອື່ນຫຼາຍກໍຕາມ ແມ່ນໃຫ້ຖືເອົາກິດຈະກຳ 1 - 4).*

**ຄຳຖາມທີ Q25: ອາຊີບຕົ້ນຕໍຂອງທ່ານໃນ 12 ເດືອນ ຜ່ານມາແມ່ນຫຍັງ?**

ຈຸດປະສົງຂອງຄຳຖາມນີ້ ແມ່ນເພື່ອເກັບກຳຂໍ້ມູນກ່ຽວກັບອາຊີບຕົ້ນຕໍທີ່ຜູ້ຖືກສຳພາດ ແລະ ສະມາຊິກໃນຄົວເຮືອນໄດ້ປະຕິບັດໃນໄລຍະ 12 ເດືອນຜ່ານມາ. ຄຳຖາມນີ້ຈະຕ້ອງຖາມທຸກຄົນທີ່ໄດ້ໃຫ້ຄຳຕອບຢູ່ໃນລະຫັດລະຫວ່າງ 1 ຫາ 7 ສຳລັບຄຳຖາມ Q24.

ນັກເດີນສຳຫຼວດຈະຕ້ອງຈົດກ່າຍຄຳຕອບຕາມທີ່ຜູ້ຖືກສຳພາດຕອບມາ ໂດຍຂຽນອາຊີບຕົ້ນຕໍທີ່ໄດ້ເຮັດໃນ 12 ເດືອນຜ່ານມາໃສ່ຊ່ອງຫວ່າງສຳລັບຂຽນຄຳຕອບ ແລະ ຈະຕ້ອງຂຽນໃຫ້ຊັດເຈນ, ຖືກຕ້ອງ ແລະ ອ່ານອອກງ່າຍ.

**ຄຳຖາມທີ Q26: ຂະແໜງເສດຖະກິດຕົ້ນຕໍໃນ 12 ເດືອນ ຜ່ານມາແມ່ນຫຍັງ?**

ຈຸດປະສົງຂອງຄຳຖາມນີ້ ແມ່ນເພື່ອເກັບກຳຂໍ້ມູນກ່ຽວກັບຂະແໜງເສດຖະກິດຕົ້ນຕໍຂອງສະມາຊິກຄົວເຮືອນໄດ້ເຮັດໃນ 12 ເດືອນຜ່ານມາ ໂດຍອີງໃສ່ລະຫັດສາລະບານການຈັດແບ່ງຂະແໜງເສດຖະກິດຂອງ ສປປ ລາວ ທີ່ມີ 2 ຕົວເລກ ເຊິ່ງກຳນົດໄວ້ໃນດ້ານຫຼັງຂອງໜ້າປົກປຶ້ມແບບສອບຖາມ ໃສ່ໃນສອງຫ້ອງສີ່ຫຼ່ຽມ (□□).

ສຳລັບລາຍລະອຽດຂອງຂະແໜງເສດຖະກິດຕົ້ນຕໍໃນ 12 ເດືອນຜ່ານມາແມ່ນໄດ້ກຳນົດໄວ້ໃນ **ເອກະສານຊ້ອນທ້າຍ 4.**

**ຕົວຢ່າງ:** ວິທີການຈົດກ່າຍຄຳຖາມທີ Q24, Q25, Q26 ທ່ານຕ້ອງຈົດກ່າຍດັ່ງຮູບຕົວຢ່າງ:

1) ນາງ ກ ເປັນພະນັກງານການເງິນ ຢູ່ສູນສະຖິຕິແຫ່ງຊາດ.
2) ທ້າວ ຂ ເປັນພະນັກງານການເງິນ ຢູ່ໂຮງງານຕັດຫຍິບ.
3) ທ້າວ ຄ ເປັນພະນັກງານຂັບລົດ ຢູ່ອົງການສະຫະປະຊາຊາດປະຈຳ ສປປ ລາວ.



| Q24 | Q25 | Q26 |
|---|---|---|
| ກິດຈະກຳຕົ້ນຕໍຂອງທ່ານໃນ 12 ເດືອນຜ່ານມາແມ່ນຫຍັງ? (ໃຫ້ໃສ່ລະຫັດທີ່ໄດ້ກຳນົດໄວ້ໃນໜ້າຕໍ່ໄປ) | (ສຳລັບບຸກຄົນທີ່ຕອບລະຫັດ 01 ຫາ 07 ໃນ Q24) | |
| | ອາຊີບຕົ້ນຕໍຂອງທ່ານໃນ 12 ເດືອນຜ່ານມາແມ່ນຫຍັງ? | ຂະແໜງ ເສດຖະກິດຕົ້ນຕໍໃນ 12ເດືອນຜ່ານມາແມ່ນຫຍັງ? |
| | ໃຫ້ຂຽນແຈ້ງໃສ່ບ່ອນເປົ່າຫວ່າງ | (ໃຫ້ໃສ່ລະຫັດ ຕາມທີ່ໄດ້ກຳນົດໃຫ້ຢູ່ດ້ານຫຼັງຂອງໜ້າປົກແບບສອບຖາມ) |
| 0 1 | ພະນັກງານການເງິນ | 8 4 |
| 0 2 | ພະນັກງານການເງິນ | 1 0 |
| 0 7 | ພະນັກງານຂັບລົດ | 9 9 |

***ສິ່ງຄວນເອົາໃຈໃສ່:***

- *ສຳລັບພາກສ່ວນກຳລັງປ້ອງກັນຄວາມສະຫງົບ ແລະ ກຳລັງປ້ອງກັນຊາດ ແມ່ນໃຫ້ລະບຸອາຊີບຕົວຈິງ ທີ່ເຂົາເຈົ້າ ເຮັດໃນປະຈຸບັນ. ຖ້າແມ່ນທະຫານສົດ ແມ່ນໃຫ້ໃສ່ລະຫັດຕາມການກຳນົດ ຂອງກະຊວງກ່ຽວຂ້ອງ.*
- *ເພື່ອເປັນບ່ອນອີງໃນການໃສ່ລະຫັດຄຳຕອບໃນຄຳຖາມທີ 26 ໃຫ້ຖືກຕ້ອງ ໃນຄຳຖາມທີ 25 ກ່ຽວກັບ ອາຊີບ ພາຍຫຼັງທີ່ຮູ້ອາຊີບແລ້ວ ຕ້ອງຖາມຕື່ມວ່າຜູ້ກ່ຽວເຮັດວຽກຢູ່ໃສ ຫຼັງຈາກນັ້ນ ຈຶ່ງກຳນົດຂະແໜງ ເສດຖະກິດ ໃນຄຳຖາມທີ 26. ໃຫ້ບັນທຶກຂໍ້ມູນດັ່ງກ່າວນີ້ ໃສ່ໃນປຶ້ມບັນທຶກເພື່ອກວດກາຄວາມຖືກຕ້ອງກ່ອນ ແລ້ວຈຶ່ງຈົດກ່າຍເຂົ້າໃນແບບສອບຖາມ. ປຶ້ມບັນທຶກດັ່ງກ່າວ ຈະເປັນບ່ອນອີງໃຫ້ນັກກວດກາ ເພື່ອກວດສອບຄວາມຖືກຕ້ອງ ໃນການກຳນົດຂະແໜງ ເສດຖະກິດ.*

*ໃນປຶ້ມບັນທຶກໃຫ້ຂຽນດັ່ງນີ້:*

| ລ/ດ | ສະມາຊິກໃນຄົວເຮືອນ | Q24: ກິດຈະກຳຕົ້ນຕໍ ໃນ 12 ເດືອນຜ່ານມາ | Q25: ອາຊີບຕົ້ນຕໍໃນ 12 ເດືອນຜ່ານມາ | ສະຖານທີ່ເຮັດວຽກ | Q26: ຂະແໜງເສດຖະກິດ |
|---|---|---|---|---|---|
| 1 | ທ້າວ ພອນສັກ | ພະນັກງານລັດ (01) | ບັນຊີ | ສູນສະຖິຕິແຫ່ງຊາດ | ການບໍລິຫານລັດ (69) |
| 2 | ນາງ ສອນ | ພະນັກງານເອກກະຊົນ | ຄົນຂັບລົດ | ບໍລິສັດ ດາວີ ກໍ່ສ້າງ | ການເຄື່ອນໄຫວດ້ານການ<br>ບໍລິການ ສ່ວນບຸກຄົນອື່ນໆ (96) |
| 3 | ທ້າວ ແກ້ວ | ພະນັກງານລັດວິສາຫະກິດ | ຍາມ | ລັດວິສະຫະກິດໄຟຟ້າລາວ | ການສະໜອງໄຟຟ້າ (35) |

### 4.6. ພາກ ຈ: ສຳລັບແມ່ຍິງອາຍຸ 15-49 ປີ (ຖາມແມ່ຍິງໂດຍກົງ)

ຈຸດປະສົງຂອງພາກ **ຈ** ແມ່ນເພື່ອເກັບກາຂໍ້ມູນຂ່າວສານກ່ຽວກັບການຈະເລີນພັນຂອງແມ່ຍິງໃນເກນອາຍຸ 15-49 ປີ ເຊິ່ງໃນນັ້ນຈະໄດ້ຖາມກ່ຽວກັບການເກີດລູກມີຊີວິດ, ອາຍຸໃນເວລາເກີດລູກຜູ້ທຳອິດ ແລະ ການເກີດຂອງລູກຄົນສຸດທ້າຍຂອງລາວ. ນັກເດີນສຳຫຼວດຄວນຖາມຄຳຖາມນີ້ໂດຍກົງກັບແມ່ຍິງທີ່ກ່ຽວຂ້ອງ. ໃນກໍລະນີແມ່ຍິງທີ່ເປັນເປົ້າໝາຍຂອງການສຳພາດບໍ່ຢູ່ເຮືອນນັກເດີນສຳຫຼວດສາມາດຖາມຫົວໜ້າຄົວເຮືອນແທນ.

**ຄຳຖາມທີ Q27: ເລກທີ່ບຸກຄົນຈາກ Q1**

ກ່ອນອື່ນທ່ານຕ້ອງກວດເບິ່ງວ່າໃນຄົວເຮືອນທີ່ຖືກສຳພາດມີແມ່ຍິງທີ່ມີເກນອາຍຸ 15-49 ປີ ໂດຍອີງໃສ່ຄຳຖາມທີ **Q2, Q4, Q5**.

ສຳລັບຄຳຖາມທີ **Q27** ນີ້ທ່ານຈະຕ້ອງຂຽນເລກທີ່ບຸກຄົນສະເພາະແມ່ຍິງໃນເກນອາຍຸ 15-49 ປີ ຈາກ Q1 ໃສ່ໃນສອງຫ້ອງສີ່ຫຼ່ຽມ (☐☐) ໃຫ້ຖືກຕ້ອງ.

ໃນກໍລະນີຜິດພາດໝົດແຖວສະເພາະໃນ **ພາກ ຈ** ແລະ **ພາກ ສ** ແມ່ນໃຫ້ທາສີດຳ (▣) ໃສ່ຫ້ອງສີ່ຫຼ່ຽມນ້ອຍ (☐) ທີ່ຢູ່ດ້ານລຸ່ມຂອງເລກທີບຸກຄົນໃນຄຳຖາມທີ 27 ນີ້.

**ຄຳຖາມທີ Q28: ທ່ານເຄີຍເກີດ ລູກມີຊີວິດບໍ່?**

ຈຸດປະສົງຄຳຖາມ ເພື່ອເກັບກຳຂໍ້ມູນກ່ຽວກັບການເຄີຍເກີດລູກມີຊີວິດຂອງແມ່ຍິງ ໃນເກນອາຍຸ 15-49 ປີ ໃນຄົວເຮືອນຖືກສຳພາດ. ***ການເກີດມີຊີວິດ*** ແມ່ນໃຫ້ອີງໃສ່ນິຍາມຕາມທີ່ໄດ້ກຳນົດໄວ້ໃນ***ໜ້າທີ 9*** ຂອງປຶ້ມຄູ່ມືນັກເດີນສຳຫຼວດ.

ການຈົດກ່າຍຄຳຕອບແມ່ນໃຫ້ທາສີດຳ (▣) ໃສ່ຫ້ອງສີ່ຫຼ່ຽມ (☐) ຂອງລະຫັດຄຳຕອບຕາມທີ່ຜູ້ຖືກສຳພາດ ຫຼື ສະມາຊິກຄົວເຮືອນຕອບ, ກໍລະນີຄຳຕອບ *"ບໍ່ເຄີຍ"* ແມ່ນໃຫ້ທ່ານທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ທີ່ມີ

ລະຫັດ 2 ແລ້ວສືບຕໍ່ຖາມແມ່ຍິງຄົນຕໍ່ໄປ. ກໍລະນີຄໍາຕອບ *"ເຄີຍ"* ທ່ານຈະຕ້ອງທາສີດໍາ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ທີ່ມີເລກລະຫັດ 1 ແລ້ວສືບຕໍ່ຖາມຄໍາຖາມຕໍ່ໄປ.

**ຄໍາຖາມທີ Q29, Q30, Q31: ຈໍານວນລູກທີ່ເກີດມີຊີວິດ**

ໝາຍເຖິງຈໍານວນລູກທີ່ລາວໄດ້ເກີດທັງໝົດ ຊຶ່ງລວມມີຜູ້ທີ່ຍັງມີຊີວິດຢູ່ໃນປະຈຸບັນ ແລະ ເສຍຊີວິດແລ້ວ. ສໍາລັບລູກຜູ້ທີ່ຍັງມີຊີວິດອາດຈະຢູ່ນໍາລາວ ຫຼື ອາດຢູ່ບ່ອນອື່ນກໍເປັນໄດ້. ສໍາລັບລູກລ້ຽງ, ລູກຮັກລູກແພງ, ລູກຕິດຜົວ ຫຼື ລູກພີ່ນ້ອງທີ່ເກີດຈາກຜູ້ອື່ນ ແມ່ນບໍ່ນັບເອົາ.

**ໃຫ້ຂຽນຈໍານວນລູກທີ່ລາວເກີດມີຊີວິດທັງໝົດໃສ່ແຕ່ລະຄໍາຖາມດັ່ງລຸ່ມນີ້:**

**Q29: ຈໍານວນລູກທີ່ຢູ່ນໍາທ່ານໃນປະຈຸບັນມີຈັກຄົນ?**

ໝາຍເຖິງ ຈໍານວນລູກທັງໝົດທີ່ອາໄສຢູ່ນໍາລາວໃນປະຈຸບັນເປັນປະຈໍາ.

**Q30: ຈໍານວນລູກທີ່ຢູ່ນໍາຄົນອື່ນໃນປະຈຸບັນມີຈັກຄົນ?**

ໝາຍເຖິງ ຈໍານວນລູກທີ່ໄປຢູ່ບ່ອນອື່ນເຊັ່ນ: ອາໄສຢູ່ນໍາພີ່ນ້ອງຢູ່ບ່ອນອື່ນ, ຢູ່ໂຮງຮຽນກິນນອນ, ເອົາໃຫ້ຜູ້ອື່ນໄປລ້ຽງ ຫຼື ລູກທີ່ໃຫຍ່ແລ້ວ ອອກໄປສ້າງຄອບຄົວຂອງຕົນເອງແລ້ວ. ໃຫ້ທ່ານຖາມເຈາະຈີ້ມຕື່ມເພາະວ່າລູກທີ່ຢູ່ບ່ອນອື່ນ ແມ່ນບໍ່ໄດ້ເປັນສະມາຊິກຄົວເຮືອນ ເນື່ອງຈາກບໍ່ມີບັນຊີລາຍຊື່ຂຶ້ນກັບຄົວເຮືອນ ດັ່ງນັ້ນລາວອາດຈະລືມນັບເອົາລູກຂອງຕົນດັ່ງກ່າວນີ້.

**Q31: ຈໍານວນລູກທີ່ຕາຍໄປແລ້ວມີຈັກຄົນ?**

ໝາຍເຖິງ ຈໍານວນລູກທີ່ເກີດມີຊີວິດໃນຊ່ວງໄລຍະເວລາໃດໜຶ່ງແລ້ວຕາຍ.

**ວິທີຈົດກ່າຍ ສໍາລັບຄໍາຖາມທີ 29, 30 ແລະ 31**

ທ່ານຈະຕ້ອງຈົດກ່າຍຈໍານວນລູກຊາຍ ຫຼື ລູກຍິງ ເປັນ 2 ຕົວເລກ ໃສ່ໃນສອງຫ້ອງສີ່ຫຼ່ຽມ (☐☐). ທີ່ມີລະຫັດ 1 ແມ່ນຈໍານວນລູກຍິງ, ສອງຫ້ອງສີ່ຫຼ່ຽມ (☐☐) ທີ່ມີລະຫັດ 2 ແມ່ນຈໍານວນລູກຊາຍ. ເຊັ່ນ: 00, 01, 02...

<u>**ຕົວຢ່າງ:**</u> ນາງ ສີດາ ມີລູກທັງໝົດ 5 ຄົນ, ໃນນັ້ນຈໍານວນລູກທີ່ຢູ່ນໍາລາວມີລູກຊາຍ 1 ຄົນ, ລູກຍິງ 2 ຄົນ. ຈໍານວນລູກທີ່ໄປຢູ່ບ່ອນອື່ນມີລູກຍິງ 1 ຄົນ ແລະ ລາວມີລູກຊາຍ 1 ຄົນ ທີ່ຕາຍໄປແລ້ວ. ດັ່ງນັ້ນຈະຕ້ອງຈົດກ່າຍດັ່ງຮູບຕົວຢ່າງ:

| Q29 | Q30 | Q31 |
|---|---|---|
| ຈໍານວນລູກທີ່ເກີດມີຊີວິດ | | |
| ຈໍານວນລູກທີ່ຢູ່ນໍາທ່ານໃນປະຈຸບັນມີຈັກຄົນ ? | ຈໍານວນລູກທີ່ຢູ່ບ່ອນອື່ນໃນປະຈຸບັນມີຈັກຄົນ? | ຈໍານວນລູກທີ່ຕາຍໄປແລ້ວ ມີຈັກຄົນ? |
| 1. ຊາຍ<br>2. ຍິງ | 1. ຊາຍ<br>2. ຍິງ | 1. ຊາຍ<br>2. ຍິງ |
| 0 1<br>0 2 | 0 0<br>0 1 | 0 1<br>0 0 |

**ຄໍາຖາມທີ Q32: ເວລາທ່ານເກີດລູກ ຜູ້ທໍາອິດທີ່ມີຊີວິດ ທ່ານມີອາຍຸຈັກປີ?**

ຈຸດປະສົງ ເພື່ອໃຫ້ຮູ້ອາຍຸເຕັມ ໃນເວລາທີ່ລາວເກີດລູກທີ່ມີຊີວິດຜູ້ທໍາອິດ.

ນັກເດີນສໍາຫຼວດຈະຕ້ອງຈົດກ່າຍອາຍຸເຕັມຂອງແມ່ຍິງ ໃນເວລາເກີດລູກຜູ້ທໍາອິດທີ່ມີຊີວິດ (ບໍ່ນັບອາຍຸໃນຕອນເລີ່ມຖືພາ) ໃສ່ໃນສອງຫ້ອງສີ່ຫຼ່ຽມສໍາລັບຂຽນອາຍຸ, ສະນັ້ນທ່ານຈະຕ້ອງຈົດກ່າຍເອົາອາຍຸປີເຕັມ. ຖ້າບໍ່ຈື່ ຫຼື ບໍ່ຮູ້ອາຍຸແມ່ນໃຫ້ຂຽນລະຫັດ "99".

**ຕົວຢ່າງ:** ນາງ ສີດາ ໃນຂະນະທີ່ລາວເກີດລູກຜູ້ທຳອິດທີ່ມີຊີວິດ ລາວມີອາຍຸໄດ້ 19 ປີ 11 ເດືອນ ແມ່ນໃຫ້ຈົດກ່າຍອາຍຸເຕັມ 19 ປີ ໃສ່ໃນສອງຫ້ອງສີ່ຫຼ່ຽມ (□□) ສຳລັບຂຽນຄຳຕອບ (ດັ່ງຮູບຕົວຢ່າງ):

| Q32 | |
|---|---|
| **ເວລາທ່ານເກີດລູກຜູ້ທຳອິດ ທ່ານມີອາຍຸຈັກປີ?** (ໃຫ້ຂຽນອາຍຸເຕັມ) | |
| 1 | 9 |

**ຄຳຖາມທີ Q33, Q34, Q35: ລູກທີ່ເກີດມີຊີວິດຜູ້ສຸດທ້າຍ**

ຈຸດປະສົງ ເພື່ອໃຫ້ຮູ້ຂໍ້ມູນຂ່າວສານກ່ຽວກັບລູກທີ່ເກີດມີຊີວິດຜູ້ສຸດທ້າຍຂອງແມ່ຍິງແຕ່ລະຄົນໃນຄົວເຮືອນຖືກສຳພາດ ເຊິ່ງປະກອບມີຂໍ້ມູນດັ່ງນີ້:

**Q33: ເດືອນ ແລະ ປີເກີດ**

ເດືອນ ແລະ ປີເກີດ ຂອງລູກທີ່ເກີດມີຊີວິດຜູ້ສຸດທ້າຍຂອງແມ່ຍິງໃນຄົວເຮືອນ. ນັກເດີນສຳຫຼວດຈະຕ້ອງຂຽນຄຳຕອບເປັນ 2 ຕົວເລກໃສ່ໃນສອງຫ້ອງສີ່ຫຼ່ຽມ (□□) ຂອງລະຫັດ 1 ແມ່ນຂຽນເດືອນເກີດ ແລະ ສອງຫ້ອງສີ່ຫຼ່ຽມ (□□) ຂອງລະຫັດ 2 ແມ່ນຂຽນປີເກີດ ເປັນສອງຕົວເລກ ໂດຍໃຫ້ຂຽນເລກທ້າຍ 2 ໂຕຂອງປີເກີດ.

**Q34: ເພດ**

**ເພດ** ຂອງລູກທີ່ເກີດມີຊີວິດຄົນສຸດທ້າຍຂອງແມ່ຍິງໃນຄົວເຮືອນ. ທ່ານຈະຕ້ອງຈົດກ່າຍຄຳຕອບໂດຍການທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (□) ທີ່ໄດ້ກຳນົດໄວ້ໃນໃບແບບສອບຖາມຄື: 1 ແມ່ນເພດຊາຍ; 2 ແມ່ນເພດຍິງ.

**Q35: ລາວຍັງມີຊີວິດຢູ່ບໍ່?**

ໝາຍເຖິງລູກເກີດມີຊີວິດຄົນສຸດທ້າຍຂອງແມ່ຍິງໃນຄົວເຮືອນ ເຊິ່ງທ່ານຕ້ອງຈົດກ່າຍຄຳຕອບໂດຍການທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (□) ຕາມທີ່ໄດ້ກຳນົດໄວ້ໃນໃບແບບສອບຖາມຄື: 1 ຍັງມີຊີວິດຢູ່; 2 ເສຍຊີວິດແລ້ວ.

**ຕົວຢ່າງ:** ນາງ ບຸນຮັກ ເກີດລູກຜູ້ສຸດທ້າຍເປັນເພດຊາຍ, ເກີດເດືອນ 7 ປີ 1991 ແລະ ປະຈຸບັນລູກຍັງທີຊີວິດຢູ່. ສະນັ້ນທ່ານຈະຕ້ອງຈົດກ່າຍຄຳຕອບດັ່ງຮູບຕົວຢ່າງ:

| Q33 | Q34 | Q35 |
|---|---|---|
| **ລູກທີ່ເກີດມີຊີວິດຜູ້ສຸດທ້າຍ** | | |
| ເດືອນ ແລະ ປີ ເກີດ | ເພດ | ລາວຍັງມີຊີວິດຢູ່ບໍ່? |
| 1. ເດືອນ<br>2. ປີ | 1. ຊາຍ<br>2. ຍິງ | 1. ຍັງມີຊີວິດຢູ່<br>2. ເສຍຊີວິດແລ້ວ |
| 0 7<br>9 1 | ▬<br>2 | ▬<br>2 |

***ກໍລະນີພິເສດ:*** *ຖ້າໃນຄົວເຮືອນມີແມ່ຍິງອາຍຸ 15-49ປີ ທີ່ຕາຍໃນໄລຍະ 12 ເດືອນຜ່ານມາ ແລະ ມີລູກຄົງຂອງລາວເປັນສະມາຊິກໃນຄົວເຮືອນດັ່ງກ່າວ ແມ່ນໃຫ້ຈົດກ່າຍຂໍ້ມູນການເກີດຂອງລູກຄົງລາວເຂົ້າໃນ* ***ພາກ ຈ*** *(ຄຳຖາມທີ່ Q29 – Q35). ພ້ອມທັງຂຽນເຫດການດັ່ງກ່າວໃສ່ຫ້ອງໝາຍເຫດ.*

### 4.7. ພາກ ສ: ການຕາຍໃນຄົວເຮືອນ

**ຄຳຖາມທີ Q36: ໃນ 12 ເດືອນຜ່ານມາມີຄົນຕາຍບໍ່?**

ຈຸດປະສົງຂອງຄຳຖາມ ແມ່ນເພື່ອເກັບກຳຂໍ້ມູນຂ່າວສານກ່ຽວກັບການຕາຍຂອງສະມາຊິກຂອງຄົວເຮືອນ ໃນ 12 ເດືອນຜ່ານມາ.

ວິທີການຈົດກ່າຍຄຳຕອບ ຕ້ອງໃຫ້ຖືກຕ້ອງຕາມຄຳຕອບຂອງຜູ້ຖືກສຳພາດຕອບມາ, ຖ້າມີຄົນເສຍຊີວິດ ແມ່ນໃຫ້ທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ຂອງລະຫັດ 1 ***"ມີ"*** ແລະ ຕ້ອງສືບຕໍ່ຖາມຄຳຖາມຕໍ່ໄປ, ຖ້າບໍ່ມີຄົນເສຍຊີວິດ ແມ່ນໃຫ້ທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ຂອງລະຫັດ 2 "ບໍ່ມີ" ໃຫ້ຂ້າມໄປຖາມ **ພາກ ຊ.**

**ຄຳຖາມທີ Q37: ຜູ້ຕາຍເປັນເພດຍິງ ຫຼື ເພດຊາຍ?**

ຈຸດປະສົງຂອງຄຳຖາມ ແມ່ນເພື່ອເກັບກຳຂໍ້ມູນຂ່າວສານກ່ຽວກັບເພດຂອງສະມາຊິກຂອງຄົວເຮືອນທີ່ຕາຍໃນ 12 ເດືອນຜ່ານມາ ວ່າເປັນເພດຊາຍ ຫຼື ເພດຍິງທີ່ຕາຍດ້ວຍສາເຫດໃດໆກໍ່ຕາມ.

ວິທີການຈົດກ່າຍຄຳຕອບ ຕ້ອງໃຫ້ຖືກຕາມຄຳຕອບຂອງຜູ້ຖືກສຳພາດຕອບມາ, ກໍລະນີຜູ້ຕາຍເປັນເພດຊາຍ ທ່ານຈະຕ້ອງທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ຂອງລະຫັດ 1, ຖ້າຫາກຜູ້ຕາຍເປັນເພດຍິງ ທ່ານຈະຕ້ອງທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ຂອງລະຫັດ 2.

**ຄຳຖາມທີ Q38: ອາຍຸໃນເວລາຜູ້ກ່ຽວຕາຍ**

ຈຸດປະສົງຂອງຄຳຖາມ ແມ່ນເພື່ອເກັບກຳຂໍ້ມູນຂ່າວສານກ່ຽວກັບອາຍຸເຕັມໃນເວລາຕາຍຂອງສະມາຊິກຂອງຄົວເຮືອນທີ່ຕາຍໃນ 12 ເດືອນຜ່ານມາ .

ການຈົດກ່າຍຄຳຕອບ ທ່ານຈະຕ້ອງຈົດກ່າຍອາຍຸເຕັມຂອງສະມາຊິກຂອງຄົວເຮືອນທີ່ຕາຍແລ້ວ ໃສ່ໃນຫ້ອງສີ່ຫຼ່ຽມສຳລັບຂຽນຄຳຕອບ ໂດຍໃຫ້ຖືກຕ້ອງຕາມຄຳຕອບທີ່ຜູ້ຖືກສຳພາດຕອບມາ.

**ຄຳຖາມທີ Q39: ລາວຕາຍໃນເວລາຖືພາ, ເກີດລູກ ຫຼື ຕາຍຫຼັງເກີດລູກ 42 ວັນ ແມ່ນບໍ?**

ຈຸດປະສົງຂອງຄຳຖາມນີ້ ແແມ່ນເພື່ອເກັບກຳຂໍ້ມູນຂ່າວສານກ່ຽວກັບການຕາຍຂອງແມ່ຍິງ ໃນເກນອາຍຸ 15-49 ປີ ທີ່ພົວພັນກັບການຈະເລີນພັນຂອງລາວຄື: ການຖືພາ ແລະ ການເກີດລູກ.

**ການຕາຍຂອງແມ່**

ແມ່ນການຕາຍຂອງແມ່ຍິງໃນເກນອາຍຸ 15-49 ປີ ທີ່ຕາຍຍ້ອນຖືພາ, ເກີດລູກ, ຫຼັງຈາກເກີດລູກ 42 ວັນ ແລະ ຕາຍຍ້ອນພະຍາດຕ່າງໆໃນຊ່ວງໄລຍະເວລາທີ່ລາວກຳລັງຖືພາຢູ່. ຖ້າຫາກໄລຍະເວລາດັ່ງກ່າວແມ່ຍິງຫາກຕາຍຍ້ອນອຸປະຕິເຫດອື່ນໆ ແມ່ນບໍ່ຖືເປັນການຕາຍຂອງແມ່.

ໃຫ້ພິຈາລະນາຖີ່ຖ້ວນ ວ່າຜູ້ທີ່ຕາຍແມ່ນເພດຍິງ ໂດຍສັງເກດຢູ່ໃນຄຳຖາມທີ **Q37** ໃສ່ລະຫັດ 2 ແລະ ຢູ່ໃນເກນອາຍຸ 15-49 ປີ ຢູ່ໃນຄຳຖາມທີ **Q38.** ຖ້າຜູ້ຕາຍແມ່ນແມ່ຍິງຢູ່ໃນເກນອາຍຸ 15-49 ປີ ແມ່ນໃຫ້ຖາມຄຳຖາມທີ 39 ແລະ ຖ້າບໍ່ຢູ່ເກນອາຍຸ ແມ່ນໃຫ້ສັງເກດຄົນຕໍ່ໄປຈົນເຖິງຄົນສຸດທ້າຍ.

ວິທີການຈົດກ່າຍຄຳຕອບ ຕ້ອງໃຫ້ຖືກຕາມຄຳຕອບຂອງຜູ້ຖືກສຳພາດຕອບມາ, ກໍລະນີແມ່ຍິງຕາຍໃນເວລາຖືພາ, ເກີດລູກ ຫຼື ຕາຍຫຼັງເກີດລູກ 42 ວັນ, ໃຫ້ທ່ານທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ຂອງລະຫັດ 2 "ແມ່ນ", ຖ້າຫາກແມ່ຍິງບໍ່ໄດ້ຕາຍໃນເວລາຖືພາ, ເກີດລູກ ຫຼື ຕາຍຫຼັງເກີດລູກ 42 ວັນ ໃຫ້ທ່ານທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ຂອງລະຫັດ 1 "ບໍ່ແມ່ນ".

***ກໍລະນີພິເສດ:*** *ກໍລະນີຕາຍໝົດຄົວເຮືອນພາຍໃນ 12 ເດືອນຜ່ານມາ ແມ່ນໃຫ້ນັກເດີນສໍາຫຼວດຖາມອໍານາດການປົກຄອງບ້ານກ່ຽວກັບ ຊື່, ເພດ, ອາຍຸ ແລະ ສາເຫດຂອງການຕາຍຂອງສະມາຊິກໃນຄົວເຮືອນທີ່ຕາຍໃສ່ໃນຫ້ອງສໍາລັບຂຽນຄໍາເຫັນໃນໜ້າປົກປຶ້ມແບບສອບຖາມ.*

***<u>ສິ່ງຄວນເອົາໃຈໃສ່</u>:*** *ໃຫ້ຈື່ວ່າຜູ້ໃຫ້ສໍາພາດອາດຈະລັ່ງເລເມື່ອ ເວົ້າເຖິງການຕາຍອາດມີຄວາມເສົ້າໂສກ ຫຼື ເສຍໃຈເມື່ອນັກເດີນສໍາຫຼວດຖາມຄໍາຖາມນີ້ໃນສະພາບແບບນີ້ນັກເດີນສໍາຫຼວດຄວນມີຄວາມພະຍາຍາມ ແລະ ມີພິກໄຫວໃນການສອບຖາມຄໍາຖາມດັ່ງກ່າວນີ້.*

<u>ຕົວຢ່າງ:</u> ໃນຄົວເຮືອນທີ່ຖືກສໍາພາດໃນໄລຍະ 12 ເດືອນຜ່ານມາມີຄົນຕາຍ 1 ຄົນ ເປັນເພດຍິງ ອາຍຸ 32 ປີ ເຊິ່ງຕາຍຍ້ອນພະຍາດຫົວໃຈວາຍໃນຂະນະທີ່ກໍາລັງເກີດລູກໃນໂຮງໝໍ. ທ່ານຕ້ອງຈົດກ່າຍດັ່ງນີ້:



| ສ | ການຕາຍໃນຄົວເຮືອນ | |
|---|---|---|
| Q36 | ໃນ 12 ເດືອນຜ່ານມາມີຄົນຕາຍບໍ່?<br>1. ມີ ■ 2. ບໍ່ມີ □ (ຂ້າມໄປQ40) | |
| Q37 | Q38 | Q39 |
| ຜູ້ຕາຍເປັນເພດຍິງ ຫຼື ເພດຊາຍ?<br>1. ຊາຍ<br>2. ຍິງ | ອາຍຸໃນເວລາຜູ້ກ່ຽວຕາຍ<br>(ໃຫ້ຂຽນອາຍຸເຕັມ) | ລາວຕາຍໃນເວລາຖືພາ, ເກີດລູກ ຫຼື ຕາຍຫຼັງເກີດລູກ 42 ວັນບໍ່?<br>(ສໍາລັບແມ່ຍິງອາຍຸ15-49 ປີທີ່ຕາຍ) |
| □ 1<br>■ 2 | 0 3 2 | □ 1. ບໍ່ແມ່ນ<br>■ 2. ແມ່ນ |

## 4.8. ພາກ ຊ: ການຍ້າຍເຂົ້າໃນ 12 ເດືອນຜ່ານມາ

### ຄໍາຖາມທີ Q40: ຍ້າຍເຂົ້າມາມີບໍ່?

ຈຸດປະສົງຂອງຄໍາຖາມ ແມ່ນເພື່ອໃຫ້ຮູ້ຂໍ້ມູນຂ່າວສານກ່ຽວກັບການຍົກຍ້າຍເຂົ້າມາຢູ່ໃນຄົວເຮືອນໃນໄລຍະ 12 ເດືອນຜ່ານມາ.

ການຍ້າຍເຂົ້າໝາຍເຖິງ ບຸກຄົນໃດໜຶ່ງທີ່ຍ້າຍເຂົ້າມາເປັນສະມາຊິກໃນຄົວເຮືອນຖືກສໍາພາດໃນ 12 ເດືອນຜ່ານມາ ໂດຍອີງຕາມນິຍາມການຢູ່ເປັນປະຈໍາ.

ວິທີການຈົດກ່າຍຄໍາຕອບ ຕ້ອງໃຫ້ຖືກຕາມຄໍາຕອບຂອງຜູ້ຖືກສໍາພາດຕອບມາ, ໃນ 12 ເດືອນ ຜ່ານມາໃນຄົວເຮືອນຂອງທ່ານມີຄົນຍ້າຍເຂົ້າມາບໍ່?, ຖ້າມີຄົນຍ້າຍເຂົ້າມາໃຫ້ທ່ານທາສີດໍາ (▣)ໃສ່ຫ້ອງສີ່ຫຼ່ຽມ (□) ຂອງລະຫັດ 1 "ມີ" ແລະ ຕ້ອງສືບຕໍ່ຖາມຄໍາຖາມຕໍ່ໄປ, ຖ້າບໍ່ມີຄົນຍ້າຍເຂົ້າມາ ແມ່ນໃຫ້ທ່ານທາສີດໍາ (▣)ໃສ່ຫ້ອງສີ່ຫຼ່ຽມ (□) ຂອງລະຫັດ 2 "ບໍ່ມີ" ແລະ ໃຫ້ຂ້າມໄປຖາມ **ພາກ ຍ.**

### ຄໍາຖາມທີ Q41: ເລກທີ່ບຸກຄົນຈາກ Q1

ຈຸດປະສົງຂອງຄໍາຖາມ ແມ່ນເພື່ອບັນທຶກລະຫັດບຸກຄົນທີ່ຍ້າຍເຂົ້າມາໃນຄົວເຮືອນ ໃນ 12 ເດືອນຜ່ານມາໃຫ້ສອດຄ່ອງກັບລະຫັດຂອງສະມາຊິກຄົວເຮືອນໃນຄໍາຖາມທີ Q1.

ກ່ອນຈະບັນທຶກລະຫັດບຸກຄົນເຂົ້າໃນຄໍາຖາມນີ້ ແມ່ນໃຫ້ຖາມຄືນບັນດາສະມາຊິກຄົວເຮືອນ ໃນຄໍາຖາມ Q1 ທີ່ຍ້າຍເຂົ້າມາ ໃນຊ່ວງໄລຍະ 12 ເດືອນຜ່ານມາ. ໃຫ້ຈົດລະຫັດຜູ້ທີ່ຍ້າຍເຂົ້າມາທັງໝົດ (ໃຫ້ຈົດລະຫັດ ແລະ ຊື່ໃສ່ປຶ້ມບັນທຶກທີ່ແຈກໃຫ້) ແລ້ວຈຶ່ງສືບຕໍ່ສໍາພາດຄໍາຖາມທີ 42 ແລະ 43.

ຈາກນັ້ນ ໃຫ້ທ່ານຂຽນລະຫັດເລກທີບຸກຄົນ ສະເພາະຜູ້ທີ່ຍ້າຍເຂົ້າມາຢູ່ໃນຄົວເຮືອນທີ່ຖືກສໍາພາດຈາກ Q1 ໃສ່ໃນສອງຫ້ອງສີ່ຫຼ່ຽມ (□□). ໃນກໍລະນີຜິດພາດໝົດແຖວແມ່ນໃຫ້ທາສີດໍາໃສ່ຫ້ອງສີ່ຫຼ່ຽມນ້ອຍ (□) ຢູ່ດ້ານລຸ່ມຂອງເລກທີບຸກຄົນໃນຄໍາຖາມທີ 41 ນີ້.

ໃນກໍລະນີຜິດພາດໝົດແຖວສະເພາະໃນ **ພາກ ຊ** ແລະ **ພາກ ຍ** ແມ່ນໃຫ້ທາສີດໍາ (▣) ໃສ່ຫ້ອງສີ່ຫຼ່ຽມນ້ອຍ (□) ທີ່ຢູ່ດ້ານລຸ່ມຂອງເລກທີບຸກຄົນໃນຄໍາຖາມທີ 41 ນີ້.

**ຄໍາຖາມທີ Q42: ຍ້າຍມາຈາກ**

ຈຸດປະສົງຂອງຄໍາຖາມ ແມ່ນເພື່ອໃຫ້ຮູ້ຂໍ້ມູນຂ່າວສານສະມາຊິກໃນຄົວເຮືອນນັ້ນຍ້າຍມາຈາກພາຍໃນ ຫຼື ຕ່າງປະເທດ ໃນ 12 ເດືອນຜ່ານມາ.

- ຖ້າຫາກວ່າ ສະມາຊິກໃນຄົວເຮືອນ ໄດ້ຍ້າຍອອກຈາກເມືອງດຽວກັບເມືອງທີ່ລາວຢູ່ປະຈຸບັນແມ່ນໃຫ້ທາສີດໍາ (▣)ໃສ່ຫ້ອງສີ່ຫຼ່ຽມ (□) ຂອງລະຫັດ 1;
- ຖ້າຫາກວ່າ ສະມາຊິກໃນຄົວເຮືອນໄດ້ຍ້າຍມາຈາກເມືອງອື່ນໃຫ້ຂຽນລະຫັດແຂວງ ແລະ ເມືອງໃສ່ໃນຫ້ອງສີ່ລ່ຽມ (□□□□) ຂອງລະຫັດ 2 (ສໍາລັບລະຫັດແຂວງ ແລະ ເມືອງ ຢູ່ໃນ **ເອກະສານຊ້ອນທ້າຍ 1**);
- ຖ້າຫາກວ່າສະມາຊິກໃນຄົວເຮືອນ ໄດ້ຍ້າຍມາຈາກຕ່າງປະເທດ ແມ່ນໃຫ້ຂຽນລະຫັດປະເທດ ໃສ່ໃນຫ້ອງສີ່ລ່ຽມ (□□) ຂອງລະຫັດ 3 (ສໍາລັບລະຫັດປະເທດໃຫ້ເບິ່ງດ້ານຫຼັງຂອງໃບແບບສອບຖາມ).

**ຄໍາຖາມທີ Q43: ເຫດຜົນຕົ້ນຕໍຂອງການຍ້າຍເຂົ້າມາ**

**ສາເຫດຂອງການເຄື່ອນຍ້າຍມີດັ່ງນີ້:**

- ***"ປ່ຽນບ່ອນເຮັດວຽກ"*** ໝາຍເຖິງການຍົກຍ້າຍບ່ອນເຮັດວຽກ ຫຼື ສະຖານທີ່ເຮັດວຽກບໍ່ວ່າຈະເປັນວຽກສ່ວນຕົວ ຫຼື ທາງການ.
- ***"ຊອກຫາວຽກເຮັດ"*** ໝາຍເຖິງການຍົກຍ້າຍໄປຢູ່ບ່ອນອື່ນ ເພື່ອຊອກວຽກເຮັດງານທໍາ.
- ***"ທຸລະກິດ"*** ໝາຍເຖິງການຍົກຍ້າຍເພື່ອໄປດໍາເນີນທຸລະກິດຂອງຕົນເອງຢູ່ບ່ອນອື່ນ.
- ***"ການສຶກສາ"*** ໝາຍເຖິງການຍົກຍ້າຍເພື່ອໄປສຶກສາຮໍ່າຮຽນ.
- ***"ແຕ່ງດອງ"*** ໝາຍເຖິງການຍົກຍ້າຍເພື່ອໄປສ້າງຄອບຄົວໃໝ່ ຫຼື ໄປແຕ່ງດອງ.
- ***"ຄອບຄົວຍ້າຍ"*** ໝາຍເຖິງການຍົກຍ້າຍຂອງຄອບຄົວ ຫຼື ຄົວເຮືອນໄປຢູ່ສະຖານທີ່ໃໝ່.
- ***"ບ້ານຍ້າຍ"*** ໝາຍເຖິງການຍົກຍ້າຍບ້ານຈາກສະຖານທີ່ເກົ່າ ໄປຕັ້ງຢູ່ສະຖານທີ່ໃໝ່ຍ້ອນເຫດຜົນຕ່າງໆ.
- ***"ອື່ນໆ"*** ແມ່ນສາເຫດຂອງການຍົກຍ້າຍທີ່ບໍ່ກ່ຽວຂ້ອງໃນສາເຫດທີ່ກ່າວມາຂ້າງເທິງ.

ການຈົດກ່າຍສາເຫດຂອງການເຄື່ອນຍ້າຍຂອງສະມາຊິກໃນຄົວເຮືອນໃດໜຶ່ງ ແມ່ນໃຫ້ຈົດກ່າຍຕາມຄໍາຕອບຂອງຜູ້ຖືກສໍາພາດຕອບເຫດຜົນຕົ້ນຕໍຂອງການຍົກຍ້າຍ ແລະ ທ່ານຈະຕ້ອງທາສີດໍາ(▣)ໃສ່ຫ້ອງສີ່ຫຼ່ຽມ (□) ຂອງລະຫັດຄໍາຕອບ ຂອງເຫດຜົນການຍົກຍ້າຍ.

**<u>ຕົວຢ່າງ:</u>** ໃນໄລຍະ 12 ເດືອນ ຜ່ານມາຄົວເຮືອນທີ່ຖືກສຳພາດມີສະມາຊິກ 1 ຄົນ (ລູກໄພ້) ເຊິ່ງມີເລກທີບຸກຄົນໃນ ພາກ ກ ແມ່ນ 5 ໄດ້ຍ້າຍມາຈາກເມືອງດຽວກັນກັບເມືອງທີ່ຢູ່ປະຈຸບັນ, ສາເຫດທີ່ຍ້າຍມາແມ່ນແຕ່ງດອງເປັນໄພ້ຢູ່ຄົວເຮືອນດັ່ງກ່າວ. ທ່ານຕ້ອງຈົດກ່າຍດັ່ງຮູບຕົວຢ່າງ:




### 4.9. ພາກ ຍ :ການຍ້າຍອອກໃນ 12 ເດືອນຜ່ານມາ

**ຄຳຖາມທີ Q44: ຍ້າຍອອກໄປມີບໍ່?**

ຈຸດປະສົງຂອງຄຳຖາມ ແມ່ນເພື່ອໃຫ້ຮູ້ຂໍ້ມູນຂ່າວສານກ່ຽວກັບການຍົກຍ້າຍອອກໄປຈາກຄົວເຮືອນໃນໄລຍະ 12 ເດືອນຜ່ານມາ.

ການຍ້າຍອອກໝາຍເຖິງ ບຸກຄົນທີ່ເຄີຍເປັນສະມາຊິກໃນຄົວເຮືອນ ແລະ ໄດ້ຍ້າຍອອກຈາກຄົວເຮືອນໃນໄລຍະ 12 ເດືອນຜ່ານມາ.

ວິທີການຈົດກ່າຍຄຳຕອບ ຕ້ອງໃຫ້ຖືກຕາມຄຳຕອບຂອງຜູ້ຖືກສຳພາດຕອບມາ, ໃນ 12 ເດືອນ ຜ່ານມາໃນຄົວເຮືອນຂອງທ່ານມີຄົນຍ້າຍອອກໄປບໍ່?, ຖ້າມີຄົນຍ້າຍອອກໄປໃຫ້ທ່ານທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ຂອງລະຫັດ 1 "ມີ" ແລະ ຕ້ອງສືບຕໍ່ຖາມຄຳຖາມຕໍ່ໄປ, ຖ້າບໍ່ມີຄົນຍ້າຍອອກໄປ ແມ່ນໃຫ້ທ່ານທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ຂອງລະຫັດ 2 "ບໍ່ມີ".

**ຄຳຖາມທີ Q45: ເພດ**

ຈຸດປະສົງຂອງຄຳຖາມ ແມ່ນເພື່ອລະບຸເພດຂອງຜູ້ທີ່ຍ້າຍອອກໄປໃນສະມາຊິກໃນຄົວເຮືອນ ໃນ 12 ເດືອນຜ່ານມາ.

ວິທີການຈົດກ່າຍ ຖ້າແມ່ນເພດຊາຍ ແມ່ນໃຫ້ທ່ານທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ຂອງລະຫັດ 1 "ຊາຍ", ຖ້າແມ່ນເພດຍິງ ແມ່ນໃຫ້ທ່ານທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ຂອງລະຫັດ 2 "ຍິງ".

**ຄຳຖາມທີ Q46: ອາຍຸ**

ຈຸດປະສົງຂອງຄຳຖາມ ແມ່ນເພື່ອໃຫ້ຮູ້ຂໍ້ມູນຂ່າວສານກ່ຽວກັບອາຍຸເຕັມຂອງສະມາຊິກໃນຄົວເຮືອນໃນເວລາທີ່ຍ້າຍອອກໄປຈາກຄົວເຮືອນ ໃນ 12 ເດືອນຜ່ານມາ.

ວິທີການຈົດກ່າຍແມ່ນໃຫ້ບັນທຶກ ອາຍຸເຕັມຂອງສະມາຊິກຄົວເຮືອນທີ່ຍ້າຍອອກໄປ ແມ່ນຕ້ອງຂຽນເປັນຕົວເລກໃສ່ຫ້ອງສາມຫຼ່ຽມ (☐☐☐).

**ຄຳຖາມທີ Q47: ຍ້າຍອອກໄປ**

ຈຸດປະສົງຂອງຄຳຖາມ ແມ່ນເພື່ອໃຫ້ຮູ້ຂໍ້ມູນຂ່າວສານສະມາຊິກໃນຄົວເຮືອນນັ້ນຍ້າຍອອກໄປຈາກພາຍໃນ ຫຼື ຕ່າງປະເທດ ໃນ 12 ເດືອນຜ່ານມາ.

- ຖ້າຫາກວ່າ ສະມາຊິກໃນຄົວເຮືອນ ໄດ້ຍ້າຍອອກໄປຢູ່ເມືອງດຽວກັບເມືອງທີ່ລາວຢູ່ປະຈຸບັນແມ່ນໃຫ້ທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ຂອງລະຫັດ 1;
- ຖ້າຫາກວ່າ ສະມາຊິກໃນຄົວເຮືອນໄດ້ຍ້າຍອອກໄປຢູ່ເມືອງອື່ນໃຫ້ຂຽນລະຫັດແຂວງ ແລະ ເມືອງໃສ່ໃນຫ້ອງສີ່ລ່ຽມ (☐☐☐☐) ຂອງລະຫັດ 2 (ສຳລັບລະຫັດແຂວງ ແລະ ເມືອງ ຢູ່ໃນ **ເອກະສານຊ້ອນທ້າຍ 1**);
- ຖ້າຫາກວ່າສະມາຊິກໃນຄົວເຮືອນ ໄດ້ຍ້າຍອອກໄປຢູ່ຕ່າງປະເທດ ແມ່ນໃຫ້ຂຽນລະຫັດປະ ເທດໃສ່ໃນຫ້ອງສີ່ລ່ຽມ (☐☐) ຂອງລະຫັດ 3 (ສຳລັບລະຫັດປະເທດໃຫ້ເບິ່ງຢູ່ດ້ານຫຼັງຂອງໃບສອບຖາມ).

**ຄຳຖາມທີ Q48: ເຫດຜົນຕົ້ນຕໍຂອງການຍ້າຍອອກໄປ**

**ສາເຫດຂອງການເຄື່ອນຍ້າຍມີດັ່ງນີ້:**

- **"ປ່ຽນບ່ອນເຮັດວຽກ"** ໝາຍເຖິງການຍົກຍ້າຍບ່ອນເຮັດວຽກ ຫຼື ສະຖານທີ່ເຮັດວຽກບໍ່ວ່າຈະເປັນວຽກສ່ວນຕົວ ຫຼື ທາງການ.
- **"ຊອກຫາວຽກເຮັດ"** ໝາຍເຖິງການຍົກຍ້າຍໄປຢູ່ບ່ອນອື່ນ ເພື່ອຊອກວຽກເຮັດງານທຳ.
- **"ທຸລະກິດ"** ໝາຍເຖິງການຍົກຍ້າຍເພື່ອໄປດຳເນີນທຸລະກິດຂອງຕົນເອງຢູ່ບ່ອນອື່ນ.
- **"ການສຶກສາ"** ໝາຍເຖິງການຍົກຍ້າຍເພື່ອໄປສຶກສາຮ່ຳຮຽນ.
- **"ແຕ່ງດອງ"** ໝາຍເຖິງການຍົກຍ້າຍເພື່ອໄປສ້າງຄອບຄົວໃໝ່ ຫຼື ໄປແຕ່ງດອງ.
- **"ຄອບຄົວຍ້າຍ"** ໝາຍເຖິງການຍົກຍ້າຍຂອງຄອບຄົວ ຫຼື ຄົວເຮືອນໄປຢູ່ສະຖານທີ່ໃໝ່.
- **"ບ້ານຍ້າຍ"** ໝາຍເຖິງການຍົກຍ້າຍບ້ານຈາກສະຖານທີ່ເກົ່າໄປຕັ້ງຢູ່ສະຖານທີ່ໃໝ່ຍ້ອນເຫດຜົນຕ່າງໆ.
- **"ອື່ນໆ"** ແມ່ນສາເຫດຂອງການຍົກຍ້າຍທີ່ບໍ່ກ່ຽວຂ້ອງໃນສາເຫດທີ່ກ່າວມາຂ້າງເທິງ.

ການຈົດກ່າຍສາເຫດຂອງການຍົກຍ້າຍຂອງສະມາຊິກໃນຄົວເຮືອນໃດໜຶ່ງ ແມ່ນໃຫ້ຈົດກ່າຍຕາມຄຳຕອບຂອງຜູ້ຖືກສຳພາດຕອບເຫດຜົນຕົ້ນຕໍຂອງການຍົກຍ້າຍ ແລະ ທ່ານຈະຕ້ອງທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ຂອງລະຫັດຄຳຕອບຂອງເຫດຜົນການຍົກຍ້າຍ.




__ຕົວຢ່າງ:__ ໃນໄລຍະ 12 ເດືອນ ຜ່ານມາຄົວເຮືອນທີ່ຖືກສຳພາດມີຄົນຍ້າຍອອກ 1 ຄົນ ເປັນເພດຊາຍ ອາຍຸ 29 ປີ, ຍ້າຍອອກໄປຢູ່ຕ່າງເມືອງກັບເມືອງທີ່ຢູ່ປະຈຸບັນ (ແຂວງຄຳມ່ວນ 12, ເມືອງມະຫາໄຊ 02), ສາເຫດແມ່ນປ່ຽນບ່ອນເຮັດວຽກ. ທ່ານຕ້ອງຈົດກ່າຍດັ່ງຮູບຕົວຢ່າງ:

**4.10. ພາກ ດ: ຄຸນລັກສະນະຂອງຄົວເຮືອນ**

ສໍາລັບພາກ ດ ແມ່ນຈະຖາມສະເພາະຄົວເຮືອນສ່ວນບຸກຄົນເທົ່ານັ້ນ. ສ່ວນຄົວເຮືອນລວມໝູ່ ແມ່ນບໍ່ໃຫ້ສອບຖາມໃນພາກດັ່ງກ່າວນີ້.

**ຄໍາຖາມທີ Q49: ສິດຄອບຄອງຂອງຄົວເຮືອນທ່ານຕໍ່ເຮືອນຫຼັງນີ້ແມ່ນແນວໃດ?**

ຈຸດປະສົງຂອງຄໍາຖາມ ເພື່ອເກັບກໍາຂໍ້ມູນຂ່າວສານກ່ຽວກັບສິດຄອບຄອງທີ່ຄົວເຮືອນອາໄສຢູ່ປະຈຸບັນເຊິ່ງປະກອບດ້ວຍສິດຄອບຄອງດັ່ງນີ້:

1. ***"ເປັນເຈົ້າຂອງ"*** ໝາຍເຖິງສະມາຊິກໃນຄົວເຮືອນຜູ້ໃດໜຶ່ງເປັນເຈົ້າຂອງເຮືອນຫຼັງນີ້ (ມີໜັງສືເປັນຂອງຕົນເອງ ຫຼື ກໍາລັງແລ່ນໜັງສືເພື່ອເປັນເຈົ້າກໍາມະສິດ).
2. ***"ຜູ້ເຊົ່າຢູ່"*** ໝາຍເຖິງສະມາຊິກໃນຄົວເຮືອນຜູ້ໃດໜຶ່ງໄດ້ເຊົ່າເຮືອນຫຼັງດັ່ງກ່າວນັ້ນໝົດຫຼັງ ຫຼື ສ່ວນໃດສ່ວນໜຶ່ງ.
3. ***"ເຮືອນພີ່ນ້ອງ ຫຼື ບຸກຄົນອື່ນໃຫ້ຢູ່ລ້າ"*** ໝາຍເຖິງສະມາຊິກໃນຄົວເຮືອນຜູ້ໃດໜຶ່ງບໍ່ແມ່ນເຈົ້າກໍາມະສິດຕໍ່ເຮືອນທີ່ອາໄສຢູ່.
4. ***"ເຮືອນຂອງນາຍຈ້າງ ຫຼື ລັດໃຫ້ຢູ່ລ້າ"*** ໝາຍເຖິງສະມາຊິກໃນຄົວເຮືອນຜູ້ໃດໜຶ່ງອາໄສຢູ່ເຮືອນຂອງນາຍຈ້າງ, ການຈັດຕັ້ງໃດໜຶ່ງ ຫຼື ຂອງລັດ ທີ່ອະນຸຍາດໃຫ້ຄົວເຮືອນດັ່ງກ່າວອາໄສຢູ່ ໂດຍຖືເປັນສ່ວນໜຶ່ງຂອງເງິນເດືອນ ຫຼື ໃຫ້ຢູ່ລ້າ. ຖ້າສະມາຊິກຂອງຄົວເຮືອນດັ່ງກ່າວໄດ້ອອກຈາກວຽກກໍຈະຕ້ອງໄດ້ອອກຈາກເຮືອນຫຼັງດັ່ງກ່າວດ້ວຍ.
5. ***"ອື່ນໆ"*** ໝາຍເຖິງຖານະສິດຄອບຄອງອື່ນໆຕໍ່ກັບເຮືອນ ນອກຈາກຄໍາຕອບທີ່ກ່າວມາຂ້າງເທິງນັ້ນ.

ວິທີການຈົດກ່າຍ ແມ່ນໃຫ້ທາສີດໍາ (■)ໃສ່ຫ້ອງສີ່ຫຼ່ຽມ (☐) ຂອງລະຫັດຄໍາຕອບສິດຄອບຄອງຂອງຄົວເຮືອນຖືກສໍາພາດຕໍ່ກັບເຮືອນ ຫຼື ສະຖານທີ່ຢູ່ອາໄສ ໂດຍໃຫ້ຖືກຕ້ອງຕາມຄໍາຕອບຂອງຜູ້ຖືກສໍາພາດ.

**ຄໍາຖາມ Q50, Q51, Q52: ວັດສະດຸທີ່ໃຊ້ໃນການສ້າງເຮືອນທີ່ຄົວເຮືອນອາໄສຢູ່ໃນປະຈຸບັນ ແມ່ນຫຍັງ?**

ຈຸດປະສົງ ແມ່ນເພື່ອເກັບກໍາຂໍ້ມູນກ່ຽວກັບປະເພດວັດສະດຸທີ່ໃຊ້ໃນການສ້າງເຮືອນທີ່ຄົວເຮືອນທີ່ຖືກສໍາພາດນັ້ນອາໄສຢູ່ ໂດຍກໍານົດຕາມປະເພດຂອງວັດສະດຸກໍ່ສ້າງທີ່ໃຊ້ປຸກສ້າງເຮືອນດັ່ງກ່າວເຊັ່ນ:

**Q50:** ຫຼັງຄາ ທີ່ເຮັດດ້ວຍ: ກະເບື້ອງ/ຊີແພັກ/ຊີມັງ, ສັງກະສີ, ໄມ້, ໄມ້ຟາກ, ຫຍ້າ ແລະ ອື່ນໆ.
**Q51:** ຝາເຮືອນ ທີ່ເຮັດດ້ວຍ: ດິນຈີ່/ຊີມັງ, ໄມ້, ໄມ້ຟາກ/ໄມ້ອັດ ແລະ ອື່ນໆ.
**Q52:** ພື້ນເຮືອນ ທີ່ເຮັດດ້ວຍ: ກະໂລ/ຫີນອ່ອນ, ຊີມັງ, ໄມ້, ໄມ້ຟາກ ແລະ ອື່ນໆ.

ການຈົດກ່າຍຄໍາຕອບແມ່ນອີງຕາມຄໍາຕອບຂອງຜູ້ຖືກສໍາພາດ ແລະ ການສັງເກດຕົວຈິງຂອງນັກເດີນສໍາຫຼວດແມ່ນໃຫ້ທາສີດໍາ (■)ໃສ່ຫ້ອງສີ່ຫຼ່ຽມ (☐) ຂອງລະຫັດຄໍາຕອບຕາມທີ່ກໍານົດໄວ້ໃນໃບແບບສອບຖາມ.

**ຄໍາຖາມທີ Q53: ເຮືອນຫຼັງນີ້ມີໄຟຟ້າໃຊ້ບໍ່ ?**

ຈຸດປະສົງ ເພື່ອຮູ້ຂໍ້ມູນຂ່າວສານກ່ຽວກັບການນໍາໃຊ້ໄຟຟ້າຂອງທຸກຄົວເຮືອນທີ່ຖືກສໍາພາດໃນການສໍາຫຼວດພົນລະເມືອງໃນຄັ້ງນີ້.

**“ໄຟຟ້າ”** ແມ່ນໝາຍເຖິງໄຟຟ້າທີ່ແຈກຈ່າຍ ໂດຍລັດວິສາຫະກິດໄຟຟ້າ ຫຼື ໄຟຟ້າຈາກຈັກກຳເນີດໄຟຟ້າທຸກຊະນິດ ຫຼື ຈາກໝໍ້ໄຟທຸກຊະນິດ.

ການຈົດກ່າຍຄຳຕອບແມ່ນໃຫ້ທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ຂອງລະຫັດຄຳຕອບທີ່ກຳນົດໄວ້ໃນໃບແບບສອບຖາມ ໂດຍອີງຕາມຄຳຕອບທີ່ຜູ້ຖືກສຳພາດຕອບມາ.

**ຄຳຖາມທີ Q54: ຂະໜາດເນື້ອທີ່ທັງໝົດຂອງເຮືອນຫຼັງນີ້ມີເທົ່າໃດ?**

ຈຸດປະສົງຂອງຄຳຖາມນີ້ ແມ່ນເພື່ອຮູ້ເນື້ອທີ່ທັງໝົດຂອງເຮືອນທີ່ຄົວເຮືອນອາໄສຢູ່ໃນປະຈຸບັນ ເຊິ່ງອີງຕາມໃບປຸກສ້າງເຮືອນ ຫຼື ນັກເດີນສຳຫຼວດສາມາດຄິດໄລ່ຕາມຂະໜາດຂອງເຮືອນໃນຕົວຈິງ.

ເນື້ອທີ່ທັງໝົດຂອງເຮືອນ ແມ່ນເອົາລວງກ້ວາງຂອງເຮືອນຄູນໃຫ້ລວງຍາວຂອງເຮືອນຈະອອກເປັນເນື້ອທີ່ທັງໝົດ. ຫຼັກການຄິດໄລ່ເນື້ອທີ່ທັງໝົດຂອງເຮືອນມີດັ່ງນີ້:

1) ຖ້າຄົວເຮືອນນັ້ນອາໄສຢູ່ເຮືອນຊັ້ນດຽວສາມາດຄິດໄລ່ລວມກັນບາດດຽວໄດ້ເລີຍ ຫຼື ຄິດໄລ່ເປັນຫ້ອງ ແລ້ວບວກກັນກໍ່ໄດ້;
2) ຖ້າຄົວເຮືອນນັ້ນອາໄສຢູ່ເຮືອນ 2 ຊັ້ນ ຫຼື ຫຼາຍຊັ້ນກວ່ານີ້, ເນື້ອທີ່ທັງໝົດຂອງເຮືອນເທົ່າກັບຜົນບວກລວມກັນ ຂອງເນື້ອທີ່ທັງໝົດຂອງແຕ່ລະຊັ້ນບວກເຂົ້າກັນ;
3) ຖ້າຄົວເຮືອນຫາກອາໄສຢູ່ເຮືອນ 2 ຫຼັງ ຫຼື ຫຼາຍຫຼັງກວ່ານີ້, ເນື້ອທີ່ທັງໝົດຂອງເຮືອນເທົ່າກັບຜົນບວກ ຂອງເນື້ອທີ່ທັງໝົດຂອງເຮືອນທັງສອງ ຫຼື ຫຼາຍຫຼັງບວກເຂົ້າກັນ;
4) ຖ້າຫາກມີຫຼາຍຄົວເຮືອນອາໄສຢູ່ຮ່ວມກັນ ໃນເຮືອນຫຼັງດຽວແຕ່ລະຄົວເຮືອນ ຕ້ອງບອກແຕ່ເນື້ອທີ່ຢູ່ອາໄສທີ່ຕົນຢູ່ຕົວຈິງເທົ່ານັ້ນ.

ນັກເດີນສຳຫຼວດຈະຕ້ອງຈົດກ່າຍຈຳນວນເນື້ອທີ່ຢູ່ອາໄສທີ່ເປັນ 3 ຕົວເລກ ໃສ່ໃນຊ່ອງຫວ່າງສຳລັບຂຽນຄຳຕອບໃຫ້ຖືກຕ້ອງ, ຊັດເຈນ ແລະ ອ່ານອອກງ່າຍ ເຊັ່ນ: 7 ມ$^2$ = 007; 65 ມ$^2$ = 065.

<u>**ຕົວຢ່າງ:**</u> ຄົວເຮືອນ ທ້າວ ບຸນສິງ ບັນທະວົງ ມີເນື້ອທີ່ອາໄສຕົວຈິງທັງໝົດ 96ມ$^2$ ໃນຈານວນ 5 ຫ້ອງ(ຫ້ອງນອນ, ຫ້ອງກິນເຂົ້າ, ຫ້ອງນັ່ງ ຫຼິ້ນ, ຫ້ອງເຮືອນຄົວ, ຫ້ອງຮັບແຂກ). ດັ່ງນັ້ນນັກເດີນສຳຫຼວດຈະຕ້ອງຈົດກ່າຍຄຳຕອບເຂົ້າໃນໃບແບບສອບຖາມດັ່ງຮູບຕົວຢ່າງ:

| Q54 | Q55 |
|---|---|
| ຂະໜາດເນື້ອທີ່ທັງໝົດຂອງເຮືອນຫຼັງນີ້ມີເທົ່າໃດ? (ອີງຕາມໃບປຸກສ້າງ) (ຖ້າບໍ່ມີໃຫ້ຄິດໄລ່ຕາມຕົວຈິງ) | ເຮືອນຫຼັງນີ້ມີທັງໝົດຈັກຫ້ອງ? ລວມມີ: ຫ້ອງນອນ, ຫ້ອງຮັບແຂກ, ເຮືອນຄົວ, ຫ້ອງກິນເຂົ້າ ຍົກເວັ້ນ: ຫ້ອງນໍ້າ, ຫ້ອງອາບນໍ້າ, ຫ້ອງຊັກລ້າງ |
| ຕາແມັດ (ແມ$^2$) 0 9 6 | ຈຳນວນຫ້ອງ 0 0 5 |

**ຄຳຖາມທີ Q55: ເຮືອນຫຼັງນີ້ມີທັງໝົດຈັກຫ້ອງ**

ຈຸດປະສົງຂອງຄຳຖາມ ເພື່ອຮູ້ຂໍ້ມູນຂ່າວສານກ່ຽວກັບຈຳນວນຫ້ອງທັງໝົດຂອງເຮືອນທີ່ຄົວເຮືອນຖືກສຳພາດອາໄສຢູ່ ເຊິ່ງລວມມີ: ຫ້ອງນອນ, ຫ້ອງພັກເຊົາ, ຫ້ອງນັ່ງຫຼິ້ນ, ຫ້ອງໂຖງ, ຫ້ອງເຮືອນຄົວ, ຫ້ອງເຮັດວຽກສ່ວນຕົວ, ຫ້ອງຮັບແຂກ, ຫ້ອງກິນເຂົ້າ. ***ຍົກເວັ້ນຫ້ອງນໍ້າ, ຫ້ອງອາບນໍ້າ, ຫ້ອງຊັກລ້າງ, ລະບຽງເຮືອນ.***

ວິທີຈົດກ່າຍຄຳຕອບ ທ່ານຈະຕ້ອງຈົດກ່າຍຈຳນວນຫ້ອງທັງໝົດເປັນ 3 ຕົວເລກ ໃສ່ໃນຊ່ອງຫວ່າງສຳລັບຂຽນຄຳຕອບໃຫ້ຖືກຕ້ອງ, ຊັດເຈນ ແລະ ອ່ານອອກງ່າຍ ເຊັ່ນ: ເຮືອນຫຼັງໜຶ່ງມີຈຳນວນຫ້ອງທັງໝົດ 5 ຫ້ອງ ທ່ານຈະຕ້ອງຂຽນເປັນຕົວເລກ 005 ໃສ່ໃນຊ່ອງຫວ່າງສຳລັບຂຽນຄຳຕອບ.

**ຄຳຖາມທີ Q56: ແຫຼ່ງນ້ຳດື່ມຕົ້ນຕໍຂອງຄົວເຮືອນນີ້ມາແຕ່ໃສ?**

ຈຸດປະສົງຂອງຄຳຖາມ ແມ່ນເພື່ອຮູ້ຂໍ້ມູນກ່ຽວກັບແຫຼ່ງນ້ຳດື່ມຕົ້ນຕໍຂອງຄົວເຮືອນ ເພື່ອໃຫ້ຮູ້ວ່າແຫຼ່ງນ້ຳດື່ມ ນັ້ນປອດໄພສຳລັບການຊົມໃຊ້ຂອງຄົວເຮືອນຖືກສຳພາດ ຫຼື ບໍ່. ບັນດາແຫຼ່ງນ້ຳທີ່ໃຊ້ເພື່ອດື່ມປະກອບມີດັ່ງນີ້:

1) **"ນ້ຳປະປາ"** ໝາຍເຖິງນ້ຳປະປາທີ່ໄດ້ຖືກຮັບຮອງຈາກລັດວິສາຫະກິດນ້ຳປະປາລາວ.
2) **"ນ້ຳສ້າງ/ນ້ຳບາດານມີຝາປິດ" : ນ້ຳບາດານ** ໝາຍເຖິງນ້ຳທີ່ໄດ້ຈາກການເຈາະເປັນຮູເລິກ ເພື່ອເອົານ້ຳຈາກພື້ນດິນມາໃຊ້. **ນ້ຳສ້າງ** ໝາຍເຖິງນ້ຳທີ່ຂຸດເປັນຮູໃຫຍ່ ເພື່ອເອົານ້ຳມາໃຊ້, ທັງສອງປະເພດແມ່ນໄດ້ນຳໃຊ້ແທ່ງ ແລະ ຝາປິດເພື່ອປ້ອງກັນການໄຫຼຊຶມຂອງນ້ຳພາຍນອກ ແລະ ປ້ອງກັນບໍ່ໃຫ້ນ້ຳໄຫຼອອກສ່ວນຝາປິດແມ່ນໃຊ້ເພື່ອປ້ອງກັນຄົນ, ສັດ ຫຼື ສິ່ງຂອງອື່ນໆຕົກລົງໃນນ້ຳບາດານ ແລະ ນ້ຳສ້າງ.
3) **"ນ້ຳສ້າງ/ນ້ຳບາດານບໍ່ມີຝາປິດ"** ໝາຍເຖິງນ້ຳສ້າງ ແລະ ນ້ຳບາດານທີ່ບໍ່ໄດ້ນຳໃຊ້ແທ່ງ ແລະ ຝາປິດເພື່ອປ້ອງກັນການໄຫຼຊຶມເຂົ້າໃນ ແລະ ປ້ອງກັນນ້ຳໄຫຼອອກ, ບໍ່ມີຝາປິດ ເພື່ອປ້ອງກັນຄົນ, ສັດ ຫຼື ສິ່ງຂອງອື່ນໆຕົກລົງໃນນ້ຳບາດານ ແລະ ນ້ຳສ້າງ.
4) **"ແມ່ນ້ຳ/ຫ້ວຍ/ໜອງ/ເຂື່ອນ"** ໝາຍເຖິງນ້ຳທີ່ໄດ້ມາຈາກແມ່ນ້ຳ/ຫ້ວຍ/ໜອງ/ເຂື່ອນ ທີ່ເກີດຂຶ້ນໂດຍທຳມະຊາດ ແລະ ມະນຸດສ້າງຂຶ້ນມາ.
5) **"ນ້ຳລິນ/ນ້ຳອອກບໍ່"** ໝາຍເຖິງແຫຼ່ງນ້ຳທີ່ເກີດຂຶ້ນເອງຕາມທຳມະຊາດ.
6) **"ນ້ຳຝົນ"** ໝາຍເຖິງການເກັບ ແລະ ການສະສົມນ້ຳຈາກຝົນໂດຍການໄຫຼຜ່ານສາຍຄາ ຫຼື ບໍລິເວນເກັບນ້ຳທຳມະຊາດ ແລະ ເກັບສະສົມໄວ້ໃນອ່າງ ຫຼື ຖັງເກັບນ້ຳ.
7) **"ນ້ຳຂວດ/ນ້ຳດື່ມ"** ໝາຍເຖິງແຫຼ່ງນ້ຳທີ່ໄດ້ຈາກການຊື້ເປັນກວດ/ຕຸກ ຂອງບໍລິສັດນ້ຳດື່ມທຸກບໍລິສັດ.
8) **"ນ້ຳຖັງ"** ໝາຍເຖິງແຫຼ່ງນ້ຳທີ່ໄດ້ຈາກການຊື້ນ້ຳຈາກລົດຖັງເກັບນ້ຳ.
9) **"ອື່ນໆ"** ແມ່ນແຫຼ່ງນ້ຳອື່ນໆທີ່ບໍ່ກ່ຽວຂ້ອງກັບແຫຼ່ງນ້ຳທີ່ກ່າວມາຂ້າງເທິງ.

ການຈົດກ່າຍຄຳຕອບ ແມ່ນຈົດກ່າຍຕາມຄຳຕອບຂອງຜູ້ຖືກສຳພາດຕອບມາ ໂດຍໃຫ້ທາສີດຳ (▣)ໃສ່ຫ້ອງສີ່ຫຼ່ຽມ (☐) ຂອງລະຫັດຄຳຕອບໃຫ້ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນໃບແບບສອບຖາມ.

***<u>ສິ່ງຄວນເອົາໃຈໃສ່:</u>*** *ກໍລະນີແຫຼ່ງນ້ຳທີ່ຄົວເຮືອນນຳໃຊ້ເພື່ອດື່ມມີຫຼາຍແຫຼ່ງ ແມ່ນໃຫ້ຖາມເຈາະຈີ້ມເພື່ອກຳນົດແຫຼ່ງນ້ຳທີ່ໃຊ້ຫຼາຍກວ່າໝູ່, ຖ້າແຫຼ່ງນ້ຳດື່ມແຕກຕ່າງກັນໃນແຕ່ລະໄລຍະຕາມລະດູການ ແມ່ນໃຫ້ໝາຍເອົາແຫຼ່ງນ້ຳຕາມລະດູການທີ່ກຳລັງສຳພາດ.*

**ຄຳຖາມທີ Q57: ໄລຍະທາງໄປຫາແຫຼ່ງນ້ຳດື່ມໄກຫຼາຍປານໃດ**

